


# ຄູ່ມື
## ການດູແລສຸຂະພາບແມ່ ແລະ ເດັກ (ຄສມ)

LUXEMBOURG
AID & DEVELOPMENT

care

# ສາລະບານ

ພາກສະເໜີ.......................................................................................P3

ຈຸດປະສົງຂອງຄູ່ມື.......................................................................................P4

ເປົ້າໝາຍຂອງຄູ່ມື.......................................................................................P4

ການໃຫ້ຄຳປຶກສາກ່ຽວກັບສຸຂະພາບແມ່ ແລະ ເດັກເກີດໃໝ່ - ການປະຕິບັດທີ່ສຳຄັນ.................P5-P7

ຂະບວນການຈັດຕັ້ງປະຕິບັດຄູ່ມື...................................................................P8

ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ..........................................................P8-P9

## ພາກທີ I: ພາກການສະແດງລະຄອນປະກອບມີ 6ບົດດັ່ງລຸ່ມນີ້

ການດູແລໄລຍະຖືພາ: ບົດລະຄອນ **1:** ຊຸມຊົນຮ່ວມໃຈ ແມ່ລູກປອດໄພ.......................P13-P17

ການດູແລແມ່ໄລຍະເກີດ: ບົດລະຄອນ **2:** ລູກລອດ-ແມ່ປອດໄພ.................................P18-P21

ການດູແລແມ່ຫຼັງເກີດ: ບົດລະຄອນ **3:** ຜົວດີເມຍຮັກ.............................................P22-P26

ການດູແລເດັກເກີດໃໝ່: ບົດລະຄອນ **4:** ພໍ່ປ່ຽນເພື່ອລູກ..........................................P26-P31

ການດູແລເດັກນ້ອຍ: ບົດລະຄອນ **5:** ບໍ່ມີອີກແລ້ວເດັກຂາດສານອາຫານ.........................P32-P37

ການວາງແຜນຄອບຄົວ: ບົດລະຄອນ **6:** ຄອບຄົວສຸກສັນ ເມື່ອໄດ້ວາງແຜນຄອບຄົວ ............... P38-P42

## ພາກທີ II ການລົງຢ້ຽມຢາມເພື່ອໃຫ້ຄຳປຶກສາ ແລະ ຄຳແນະນຳ ຄອບຄົວ 1000 ວັນ

ການລົງຢ້ຽມຢາມເພື່ອໃຫ້ຄຳປຶກສາ ແລະ ຄຳແນະນຳ ຄອບຄົວ 1000 ວັນ..........................P43-P52

#01: ແບບຟອມການຢ້ຽມຢາມຄົວເຮືອນ 1000 ວັນ.....................................................P53-P55

#02: ແບບຟອມແຜນກິດຈະກຳຄະນະຮັກສາສຸຂະພາບຂັ້ນບ້ານ.........................................P56-P57

# ພາກສະເໜີ

ຄູ່ມືການເບິ່ງແຍງສຸຂະພາບແມ່ ແລະ ເດັກ (ຄສມ) ສະບັບນີ້ໄດ້ຖືກສ້າງຂຶ້ນເພື່ອເປັນເຄື່ອງມືໃຫ້ແກ່ທີມງານແມ່ ແລະ ເດັກໃນການຈັດຕັ້ງປະຕິບັດກິດຈະກຳຢູ່ພາກສະໜາມໂດຍນຳໃຊ້ເຂົ້າໃນການໃຫ້ຄວາມຮູ້ແກ່ຊຸມຊົນດ້ານ ວຽກງານສຸຂະພາບແມ່, ເດັກເກີດໃໝ່ ແລະ ເດັກນອ້ຍ ໃນຂົງເຂດເປົ້າໝາຍຂອງອົງການແຄຣ ນາໆຊາດປະຈຳ

ສປປ ລາວ.

ເນື້ອໃນຂອງຄູ່ມືດັ່ງກ່າວນີ້ແມ່ນໄດ້ພັດທະນາມາຈາກບົດຮຽນໃນປຶ້ມ**ຄູ່ມືການຝຶກອົບຮົມຄະນະກຳມະການຮັກສາສຸຂະພາບຂັ້ນບ້ານກ່ຽວກັບສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ** ທີ່ໄດ້ຮັບການພັດທະນາຂຶ້ນໃນປີ 2016 ໂດຍການຮ່ວມມືຂອງສູນຂ່າວສານການແພດສຸຂະສຶກສາ, ສູນແມ່ ແລະ ເດັກ ພາຍໃຕ້ການຊີ້ນຳຂອງກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ, ອົງການ UNFPA, ແລະ ອົງການແຄຣ໌ນາໆຊາດປະຈຳ ສປປ ລາວ ແລະ **ຄູ່ມືການສື່ສານເພື່ອການ ປ່ຽນແປງພຶດຕິກຳ ແລະ ຄວາມສົ້ນເຄີຍຂອງສັງຄົມ (SBCC) ທາງດ້ານໂພຊະນາການ** ທີ່ໄດ້ຮັບການພັດທະນາຂຶ້ນໃນປີ 2018 ໂດຍການຮ່ວມມືຂອງພະແນກສາທາລະນະສຸກ ແຂວງ, ອົງການຊ່ວຍເຫຼືອເດັກ (SCI), ອົງການແຄ໌ຣນານາຊາດປະຈຳລາວ (CARE), ອົງການ CCL ແລະ ອົງການ Child Fund Laos. ຄູ່ມືດັ່ງກ່າວນີ້ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ຄອບຄົວ, ແລະ ຊຸມຊົນໃນບ້ານເປົ້າໝາຍໃຫ້ມີຄວາມຮູ້ ຄວາມເຂົ້າໃຈເພີ້ມຂຶ້ນກ່ຽວກັບສຸຂະພາບຂະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໂດຍຜ່ານການສະແດງລະຄອນ ແລະ ກິດຈະກຳການລົງຢ້ຽມຢາມຄົວເຮືອນ 1000ວັນ ຈາກການ ນຳໃຊ້ ເຄື່ອງມືສື່ສານເພື່ອການປ່ຽນແປງພຶດຕິກຳຫຼາຍຮູບແບບ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິ່ງ ຂອງ ຊຸມຊົນ.

ຄູ່ມືດັ່ງກ່າວນີ້ແມ່ນໄດ້ຖືກອອກແບບໃຫ້ມີຄວາມລະອຽດອ່ອນທາງດ້ານ ວັດທະນະທຳ ແລະ ບົດບາດທາງເພດ ເຊິ່ງໃນບົດລະຄອນແຕ່ລະເລື້ອງ ແລະ ບັນດາເຄື່ອງມືສື່ສານເພື່ອການປ່ຽນແປງພຶດຕິກຳ ແລະ ຄວາມຊິນ ເຄີຍຂອງ ຊຸມຊົນ ແມ່ນໄດ້ກວມລວມເອົາເນື້ອໃນ ແລະ ຂໍ້ຄວາມສຳຄັນດ້ານບົດບາດທາງເພດເພື່ອສົ່ງເສີມໃຫ້ມີຄວາມສະເໝີພາບດ້ານບົດບາດທາງເພດໃນຊຸມຊົນ ແລະ ໂດຍສະເພາະແມ່ນໃຫ້ມີສ່ວນຮ່ວມຂອງຜູ້ຊາຍໃນບໍລິບົດການດູແລສຸຂະພາບແມ່, ເດັກເກີດໃໝ່, ແລະ ເດັກນ້ອຍໃນຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ ໂດຍເນັ້ນໃສ່ການດູແລສຸຂະພາບຂອງແມ່ຍິງໃນໄລຍະຖືພາ, ການດູແລໄລຍະເກີດລູກ, ການດູແລຫຼັງເກີດລູກ, ການດູແລເດັກເກີດໃໝ່ ແລະ ເດັກນ້ອຍ, ການວາງແຜນຄອບຄົວ, ການວາງແຜນການເກີດລູກ ແລະ ການຮັບມືຕໍ່ພາວະສຸກເສີນ. ພ້ອມດຽວກັນນັ້ນ ຄູ່ມືສະບັບນີ້ຍັງໄດ້ມີການແປບົດເລື້ອງໂດຍຫຍໍ້ໃຫ້ເປັນພາສາທ້ອງຖິ່ນໂດຍສະເພາະແມ່ນພາສາອາຄາ, ກະຕູ, ຕະຫລຽງ, ອາລັກ ແລະ ພາສາກຶມມຸ ເພື່ອຊ່ວຍຊຸມຊົນເຂົ້າໃຈເນື້ອໃນໃຈຄວາມຂອງບົດເລື້ອງຫຼາຍຂຶ້ນ.

**<u>ຈຸດປະສົງຂອງຄູ່ມື:</u>**

ເພື່ອເປັນເຄື່ອງມືໃນການຊ່ວຍພັດທະນາທັກສະ ແລະ ຄວາມຮູ້ຄວາມສາມາດໃຫ້ ແກ່ພະນັກງານສົ່ງເສີມສຸຂະພາບ ແລະ ຄະນະຮັກສາສຸຂະພາບຂັ້ນບ້ານ ໃນການຈັດຕັ້ງປະຕິບັດ ແລະ ສົ່ງເສີມວຽກງານດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ຢ່າງມີປະສິດຕິພາບຢູ່ຂັ້ນຊຸມຊົນ.

**<u>ເປົ້າໝາຍຂອງຄູ່ມື:</u>**

ເພື່ອຫຼຸດຜ່ອນຄວາມສ່ຽງດ້ານສຸຂະພາບຂອງແມ່ ແລະ ເດັກ, ເພີ້ມການເຂົ້າເຖິງສະຖານທີ່ການບໍລິການສຸຂະພາບ ແລະ ສົ່ງເສີມໂພຊະນາການທີ່ດີໃຫ້ແກ່ ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍຢູ່ໃນຊຸມຊົນ ໂດຍຜ່ານຂະບວນການລຸ່ມນີ້:

- ເພື່ອເພີ້ມທັກສະດ້ານການໃຫ້ຄໍາປຶກສາ ແລະ ຊ່ວຍອໍານວຍຄວາມສະດວກ ດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ແກ່ຄະນະຮັກສາສຸຂະພາບຂັ້ນບ້ານ;
- ເພື່ອເພີ່ມຄວາມເປັນເຈົ້າການຂອງຊຸມຊົນໃນການມີສ່ວນຮ່ວມຈັດຕັ້ງປະຕິບັດວຽກງານການສົ່ງເສີມສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ;
- ເພື່ອຊຸກຍູ້ໃຫ້ມີການປ່ຽນແປງພຶດຕິກໍາບຸກຄົນໃນຄົວເຮືອນ 1000 ວັນ ເປັນຕົ້ນແມ່ນການແບ່ງເບົາພາລະໃນຄອບຄົວເພື່ອຕອບສະໜອງການປັບປຸງສຸຂະພາບຂອງທີ່ດີຂອງແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ.

**ການໃຫ້ຄໍາປຶກສາກ່ຽວກັບສຸຂະພາບແມ່ ແລະ ເດັກເກີດໃໝ່ - ການປະຕິບັດທີ່ສໍາຄັນ**

| ຫົວຂໍ້ | ຂໍ້ຄວາມສໍາຄັນ |
|---|---|
| 1. ການດູແລທົ່ວໄປຢູ່ເຮືອນໃນເວລາຖືພາ | - ແມ່ຍິງຖືພາທຸກຄົນ ຕ້ອງໄດ້ຝາກທ້ອງຢ່າງໜ້ອຍ 4 ຄັ້ງ ເພື່ອໃຫ້ແນ່ໃຈວ່າ ການຖືພາປອດໄພ ແລະ ມີສຸຂະພາບແຂງແຮງ<br>- ກິນທາດເຫຼັກ ແລະ ອາຊິດໂຟລິກທຸກໆມື້<br>- ກິນອາຫານທີ່ມີສານອາຫານເພີ່ມຂຶ້ນຫຼາຍຄາບ, ກິນອາຫານໃນປະລິມານທີ່ຫຼາຍຂຶ້ນ. ຕົວຢ່າງ, ກິນອາ ຫານທີ່ດີ ລວມມີ ໝາກໄມ້ ແລະ ຜັກ, ຖົ່ວ, ຊີ້ນ, ປາ, ໄຂ່ ແຕ່ຫຼຸດຜ່ອນເກືອ ແລະ ອາຫານທີ່ມີຣົດຫວານ.<br>- ລ້າງມືດ້ວຍສະບູ ຫຼັງຈາກເຂົ້າຫ້ອງນໍ້າ, ກ່ອນແຕ່ງອາຫານ ແລະ ກິນອາຫານ<br>- ຫຼີກລ້ຽງການຄະລໍາອາຫານ<br>- ບໍ່ດື່ມເຫຼົ້າ ຫຼື ສູບຢາ<br>- ບໍ່ໃຫ້ກິນຢາປະເພດໃດ ຍົກເວັ້ນຢາທີ່ທ່ານໝໍເອົາໃຫ້<br>- ພັກຜ່ອນເມື່ອຕ້ອງການ. ຫຼີກລ້ຽງການຍົກຂອງໜັກ |
| 2. ການວາງແຜນເກີດລູກ ແລະ ແຜນຮັບມືຕໍ່ພາວະສຸກເສີນ | <u>ກະກຽມການເກີດລູກໃນສະຖານທີ່ບໍລິການສາທາລະນະສຸກ</u>:<br><br>- ທ່ານວາງແຜນທີ່ຈະເກີດລູກໃນສະຖານທີ່ບໍລິການສາທາລະນະສຸກແຫ່ງໃດ ?<br>- ທ່ານຈະໃຊ້ພາຫະນະຂົນສົ່ງປະເພດໃດເພື່ອໄປສະຖານທີ່ດັ່ງກ່າວນັ້ນ ?<br>- ມັນຈະມີຄ່າໃຊ້ຈ່າຍຫຼາຍປານໃດ? ທ່ານສາມາດ ເລີ້ມຕົ້ນການທ້ອນເງິນສໍາລັບຄ່າໃຊ້ຈ່າຍ ທີ່ອາດເປັນໄປໄດ້ເຫຼົ່ານີ້ ຕັ້ງແຕ່ດຽວນີ້ບໍ່ ? (ຖ້າບໍ່, ສົນທະນາກ່ຽວກັບທາງເລືອກຕ່າງໆ) |

| | |
|---|---|
| | - ເມື່ອໃດ ທ່ານຈະໄປທີ່ສະຖານທີ່ບໍລິການສາທາລະນະສຸກດັ່ງກ່າວນີ້ ? (ການແນະນຳກ່ຽວກັບເວລາ ຂຶ້ນກັບ ວ່າແມ່ຍິງຢູ່ໄກປານໃດ ຈາກສະຖານທີ່ບໍລິການສາທາລະນະສຸກ ແລະ ເງື່ອນໄຂສຸຂະພາບຂອງລາວ)<br>- ການເກີດລູກໃນສະຖານທີ່ບໍລິການສາທາລະນະສຸກ ຈະມີຄ່າໃຊ້ຈ່າຍຫຼາຍປານໃດ? ທ່ານຈະສາມາດຈ່າຍໄດ້ບໍ່? ທ່ານສາມາດເລີ່ມຕົ້ນການທ້ອນເງິນສຳລັບຄ່າໃຊ້ຈ່າຍເຫຼົ່ານີ້ບໍ່ ຕັ້ງແຕ່ດຽວນີ້ໄດ້ບໍ່ ? (ຖ້າບໍ່, ສົນທະນາກ່ຽວກັບທາງເລືອກຕ່າງໆ)<br>- ທ່ານ ແລະ ຄອບຄົວຂອງທ່ານຕ້ອງເຮັດຫຍັງເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການບໍລິການສຸຂະພາບແບບບໍ່ເສຍຄ່າ ສຳລັບແມ່ ແລະ ເດັກ ?<br>- ແມ່ນໃຜຈະໄປກັບທ່ານເພື່ອຊ່ວຍເຫຼືອທ່ານໃນເວລາເກີດລູກ ?<br>- ແມ່ນໃຜຈະຊ່ວຍທ່ານເບິ່ງແຍງລູກຂອງທ່ານ ໃນເວລາທີ່ທ່ານບໍ່ຢູ່?<br>- ອຸປະກອນໃດແດ່ທີ່ທ່ານກຽມພ້ອມແລ້ວສຳລັບການເກີດລູກ? ທ່ານຕ້ອງມີສິ່ງຕ່າງໆຕໍ່ໄປນີ້: ບັນທຶກກ່ຽວກັບແມ່ ຢູ່ເຮືອນ, ຜ້າສະອາດໃນຂະໜາດຕ່າງໆ ສຳລັບປູຕຽງ, ສຳລັບເຊັດ ແລະ ຫໍ່ຕົວເດັກ ແລະ ສຳລັບທ່ານເພື່ອໃຊ້ເປັນຜ້າອະນາໄມ; ເຄື່ອງນຸ່ງສະອາດສຳລັບເດັກ; ອາຫານ ແລະ ນ້ຳສຳລັບທ່ານ ແລະ ຜູ້ທີ່ມາກັບທ່ານ. |
| 3. ສັນຍານອັນຕະລາຍໃນເວລາຖືພາ | - ບວມຢູ່ໜ້າ, ມື, ແລະ ຕີນ<br>- ເຈັບຫົວແຮງ, ວິນຫົວ ແລະ ລາຍຕາ<br>- ເລືອດອອກທາງຊ່ອງຄອດຫຼາຍ<br>- ເຈັບທ້ອງນ້ອຍແຮງ<br>- ຈຶດມ້ານຫຼາຍ<br>- ລູກບໍ່ຕີ້ງ ຫຼື ຕີ້ງນ້ອຍ<br>- ຊັກ<br>- ໄຂ້<br>- ຖົງນ້ຳແຕກກ່ອນມື້ເດັກເກີດ<br>ຖ້າແມ່ຍິງຖືພາມີສັນຍານອັນຕະລາຍຂ້າງເທິງ ຄວນນຳສົ່ງໄປໂຮງໝໍຢ່າງຮີບດ່ວນ |
| 4. ການຊ່ວຍເຫຼືອໃນໄລຍະເຈັບທ້ອງເກີດລູກ | - ແມ່ຍິງຄວນໄດ້ຮັບການຊຸກຍູ້ ໃຫ້ເລືອກຜູ້ມານຳລາວໃນໄລຍະເຈັບທ້ອງເກີດລູກ ແລະ ເວລາເກີດລູກ. |

| | |
|---|---|
| ແລະ ເວລາເກີດລູກ | - ລົມກັບແມ່ຍິງໂດຍກົງ - ຊ່ວຍເຫຼືອ ແລະ ເຮັດໃຫ້ລາວມີຄວາມໝັ້ນໃຈ<br>- ລົມກັບຜູ້ທີ່ມານໍາ,<br>- ບໍ່ມີສະຖານະການໃດທີ່ທ່ານຄວນຍົກສູງບົດບາດຂອງທ່ານ, ຈົ່ມໃຫ້ລາວວ່າເຮັດບາງຢ່າງບໍ່ຖືກຕ້ອງ, ຫຼື ຂົ່ມເຫັງທາລຸນລາວທາງຮ່າງກາຍ ຫຼື ວາຈາ ດ້ວຍວິທີໃດກໍ່ຕາມ.<br>- ແມ່ຍິງຕ້ອງຖືກຍ້ອງຍໍ, ຊຸກຍູ້ ແລະ ເຮັດໃຫ້ມີຄວາມໝັ້ນໃຈ |
| 5. ການດູແລແມ່ຫຼັງເກີດ | ແມ່ຍິງທີ່ໃຫ້ນົມລູກ ຕ້ອງ:<br>- ກິນອາຫານເພີ້ມຂື້ນ ແລະ ກິນອາຫານຫຼາກຫຼາຍປະເພດ ໂດຍສະເພາະອາຫານທີ່ໃຫ້ພະລັງງານສູງ<br>- ສືບຕໍ່ກິນຢາທາດເຫຼັກສໍາລັບ 3 ເດືອນທໍາອິດຫຼັງເກີດ ແລະ ຢາວິຕາມິນ A<br>- ແມ່ຄວນຕ້ອງໄດ້ຮັບການກວດຫຼັງເກີດໃນມື້ທໍາອິດ, ອາທິດທໍາອິດ ແລະ ອາທິດທີ 6 ຫຼັງເກີດ<br>- ແມ່ຄວນຮູ້ຄວາມສໍາຄັນຂອງການມີລູກຫ່າງ ແລະ ປຶກສາກ່ຽວກັບການນໍາໃຊ້ວິທີການວາງແຜນຄອບຄົວ |

**ຂະບວນການຈັດຕັ້ງປະຕິບັດຄູ່ມື:**

## ຂະບວນການ/ຂັ້ນຕອນຈັດຕັ້ງປະຕິບັດ

ຝຶກອົບຮົມການເປັນຄູຝຶກຂັ້ນເມືອງ ( 2 ມື້ )

↓

ລົງຄັດເລືອກຄະນະຮັກສາສຸຂະພາບຂັ້ນບ້ານ ( 1 ມື້/ ບ້ານ )

↓

ຝຶກອົບຮົມ ແລະ ຈັດຕັ້ງທີມສະແດງລະຄອນຄະນະຮັກສາສຸຂະພາບຂັ້ນບ້ານ ແລະ ວາງແຜນການຈັດຕັ້ງປະຕິບັດກິດຈະກໍາລິຢ້ຽມຢາມຄອບຄົວ 1000 ວັນຂັ້ນບ້ານ ( 3 ມື້ )

↓

ລົງຕິດຕາມການຈັດຕັ້ງປະຕິບັດຂອງຄະນະຮັກສາສຸຂະພາບຂັ້ນບ້ານ

↓

ປະຊຸມທົບທວນກິດຈະກໍາໄຕມາດ ແລະ ວາງແຜນ

### ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ

**ພາກສ່ວນຂັ້ນແຂວງ:** ພະແນກສາທາ,ຖະແຫຼ່ງຂ່າວ,ຊາວໜຸ່ມ ແລະ ສະຫະພັນແມ່ຍິງ

- ເຂົ້າຮ່ວມກອງປະຊຸມເຜີຍແຜ່ຄູ່ມືການດູແລສຸຂະພາບແມ່ ແລະ ເດັກ(ຄສມ)
- ເຂົ້າຮ່ວມຝຶກອົບຮົມຂັ້ນເມືອງ
- ເຂົ້າຮ່ວມກອງປະຊຸມລາຍງານຜົນການຈັດຕັ້ງປະຕິບັດວຽກງານ ຄສມ ປະຈໍາ 6 ເດືອນ ແລະ ກອງປະຊຸມປະຈໍາປີ
- ສະໜັບສະໜູນ ທີມງານສົ່ງເສີມວຽກງານໂພຊະນາການ ແລະ ວຽກງານສຸຂະພາບແມ່ ແລະ ເດັກ ຂັ້ນເມືອງ
- ຕິດຕາມຜົນການຈັດຕັ້ງປະຕິບັດ,ການເກັບກໍາຂໍ້ມູນ ແລະ ການນໍາໃຊ້ຂໍ້ມູນຈາກທີມງານຂັ້ນເມືອງ

**ພາກສ່ວນຂັ້ນເມືອງ:** ສາທາເມືອງ,ຖະແຫຼ່ງຂ່າວ,ຊາວໜຸ່ມ ແລະ ສະຫະພັນແມ່ຍິງ

- ເຂົ້າຮ່ວມກອງປະຊຸມເຜີຍແຜ່ຄູ່ມືການດູແລສຸຂະພາບແມ່ ແລະ ເດັກ(ຄສມ)ຂັ້ນເມືອງ
- ເຂົ້າຮ່ວມຝຶກອົບຮົມການເປັນຄູ່ຝຶກຂັ້ນເມືອງ
- ລົງດໍາເນີນການປຸກລະດົມຄັດເລືອກຄະນະຮັກສາສຸຂະພາບຂັ້ນບ້ານ ແລະ ສ້າງແຜນວາດບ້ານ, ຄອບຄົວ ແລະ ການລົງທະບຽນຄອບຄົວທີ່ມີເດັກ1000ວັນ
- ຈັດຝຶກອົບຮົມໃຫ້ຄະນະຮັກສາສຸຂະພາບຂັ້ນບ້ານ
- ວາງແຜນການຈັດຕັ້ງປະຕິບັດກິດຈະກໍາຮ່ວມກັນຄະນະຮັກສາສຸຂະພາບຂັ້ນບ້ານ
- ລົງຈັດຕັ້ງປະຕິບັດກິດຈະກໍາ ແລະ ຕິດຕາມຊຸກຍູ້ຄະນະຮັກສາສຸຂະພາບຂັ້ນບ້ານ
- ເຂົ້າຮ່ວມກອງປະຊຸມເພື່ອລາຍງານຜົນການຈັດຕັ້ງປະຕິບັດກິດຈະກໍາ ແລະ ວາງແຜນປະຈໍາເດືອນ,ໄຕມາດ , 6 ເດືອນ ແລະ  ກອງປະຊຸມປະຈໍາປີ

**ພາລະບົດບາດ ແລະ ໜ້າທີຮັບຜິດຊອບຂອງໂຮງໝໍນ້ອຍ.**

- ສ້າງທັກສະໃຫ້ແກ່ຄະນະຮັກສາສຸຂະພາບຂັ້ນບ້ານໃນການລົງຢ້ຽມຢາມຄົວເຮືອນ 1000 ວັນ
- ຕິດຕາມ ແລະ ໃຫ້ຄໍາແນະນໍາປະຈໍາໄຕມາດໃຫ້ແກ່ຄະນະຮັກສາສຸຂະພາບຂັ້ນບ້ານໃນການລົງຢ້ຽມຢາມ ຄົວເຮືອນ 1000 ວັນ
- ເກັບກໍາ, ສັງລວມ  ແລະ ລາຍງານຂໍ້ມູນໃຫ້ພາກສ່ວນທີ່ກ່ຽວຂ້ອງ
- ເຊື່ອມສານວຽກງານແພດເຄື່ອນທີ ເຂົ້າໃນກິດຈະກໍາ ຄສມ
- ມີໜ້າທີຕິດຕໍ່ຫາຄະນະຮັກສາສຸຂະພາບຂັ້ນບ້ານໃນການຈັດຕັ້ງປະຕິບັດກິດຈະກໍາ

**ມາດຕະຖານຄັດເລືອກ ອາສາສະໝັກສຸຂະພາບຂັ້ນບ້ານ:**

- ເປັນສະມາຊິກຄະນະກໍາມະການພັດທະນາບ້ານ ( ຮອງນາຍບ້ານ,ແມ່ຍິງ,ຊາວໜຸ່ມ,ອສບ )
- ມີທັກສະການເປັນຜູ້ນໍາທີ່ດີ ມີຄວາມສາມາດໃນການບັນທຶກ ແລະ ລາຍງານຂໍ້ມູນ.
- ສາມາດສ້າງແຮງບັນດານໃຈທີ່ດີໃຫ້ກັບຊຸມຊົນ ເພື່ອປັບປຸງສຸຂະພາບ ແລະ ໂພຊະນາການຂອງແມ່ ແລະ ເດັກ.
- ມີຄວາມໝັ້ນໃຈໃນຕົວເອງ ພ້ອມທັງມີມະນຸດສໍາພັນດີ.
- ມີຄວາມສົນໃຈ,ຫ້າວຫັນ ແລະ ສະໝັກໃຈໃນການຮຽນຮູ້ທັກສະໃໝ່
- ມີຄວາມຄິດສ້າງສັນ,ມີທັກສະໃນການສື່ສານກັບຄົນອື່ນ.
- ເປັນຄົນທີ່ຖືກຍອມຮັບ ແລະ ເຫັນດີຈາກສະມາຊິກຄົນອື່ນໆໃນຊຸມຊົນ.

**ພາລະບົດບາດຂອງຄະນະຮັກສາສຸຂະພາບຂັ້ນບ້ານ:**

- ເປັນຂົວຕໍ່ໃນການປະສານງານວຽກງານການຮັກສາສຸຂະພາບໄວຈະເລີນພັນ,ແມ່,ເດັກເກີດໃໝ່ ແລະ ເດັກນ້ອຍລະຫວ່າງຂັ້ນບ້ານ,ໂຮງໝໍນ້ອຍ,ສາທາເມືອງ,ທີມງານໂຄງການ.
- ວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກໍາການຮັກສາສຸຂະພາບໄວຈະເລີນພັນ,ແມ່,ເດັກເກີດໃໝ່ ແລະ ເດັກນ້ອຍໃນຂັ້ນບ້ານ.
- ລະດົມຊຸມຊົນໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານໃນຂັ້ນບ້ານເປັນຕົ້ນແມ່ນການຮັກສາສຸຂະອະນາໄມ,ການຮັກສາສຸຂະພາບໄວຈະເລີນພັນ,ແມ່,ເດັກເກີດໃໝ່ ແລະ ເດັກນ້ອຍໃນຂັ້ນບ້ານ.
- ແກ້ໄຂບັນຫາກ່ຽວກັບການຮັກສາສຸຂະພາບຂັ້ນຕົ້ນຢູ່ໃນລະດັບຂັ້ນບ້ານ.
- ລົງຢ້ຽມຢາມຄອບຄົວທີ່ມີເດັກເກນອາຍຸ 1000 ວັນ ເພື່ອໃຫ້ການຊ່ວຍເຫຼືອສະໜັບສະໜູນວິທີ່ການເບິ່ງແຍງດູແລ ແມ່ ແລະ ເດັກ,ໃນການຝຶກປະຕິບັດດ້ານໂພຊະນາການ.
- ຈັດໃຫ້ມີການວາງແຜນການເກີດ ແລະ ແຜນສຸກເສີນຢູ່ພາຍໃນບ້ານສໍາລັບແມ່ຍິງຖືພາແຕ່ລະຄົວເຮືອນເຂົ້າເຖິ່ງກຸ່ມທ້ອນເງິນ ແລະ ກອງທຶນສຸກເສີນ.
- ສະໜັບສະໜູນວຽກງານ ການບໍລິການແບບເຄື່ອນທີ່ເຊື່ອມສານດ້ວຍການລະດົມຊຸມຊົນ.
- ຄະນະຮັກສາສຸຂະພາບຂັ້ນບ້ານຊຸກຍູ້ຄອບຄົວໃຫ້ມີການແບ່ງເບົາພາລະໃນຄົວເຮືອນ.
- ເກັບກໍາຂໍ້ມູນ,ລາຍງານຜົນການຈັດປະຕິບັດໃຫ້ກັບຫ້ອງການທີ່ກ່ຽວຂ້ອງ,ເຂົ້າຮ່ວມກອງປະຊຸມປະຈໍາໄຕມາດ,ປະຈໍາປີໃນຂັ້ນໂຮງໝໍນ້ອຍ ແລະ ຂັ້ນເມືອງ.

**ຄູ່ມືນີ້ໄດ້ແບ່ງອອກເປັນ II ພາກຄື**

**ການສະແດງລະຄອນເພື່ອປຸກລະດົມຊຸມຊົນໃນການດູແລຮັກສາສຸຂະພາບ ແມ່ ແລະ ເດັກ ແລະ ການຊຸກຍູ້ໃຫ້ ແມ່ ແລະ ເດັກ ສາມາດເຂົ້າເຖິງສະຖານທີ່ບໍລິການສຸຂະພາບ ແລະ ການລົງຢ້ຽມຢາມໃຫ້ຄໍາປຶກສາ ແລະ ຄໍາແນະນໍາໃຫ້ແກ່ຄົວເຮືອນ 1000 ວັນ**

## ພາກທີ I: ພາກການສະແດງລະຄອນປະກອບມີ 6 ບົດດັ່ງລຸ່ມນີ້:

1. ການດູແລໄລຍະຖືພາ: ບົດລະຄອນ **1:** ຊຸມຊົນຮ່ວມໃຈ ແມ່ລູກປອດໄພ
2. ການດູແລແມ່ໄລຍະເກີດ: ບົດລະຄອນ **2:** ລູກລອດ-ແມ່ປອດໄພ
3. ການດູແລແມ່ຫຼັງເກີດ: ບົດລະຄອນ **3:** ຜົວດີເມຍຮັກ
4. ການດູແລເດັກເກີດໃໝ່: ບົດລະຄອນ **4:** ພໍ່ປ່ຽນເພື່ອລູກ
5. ການດູແລເດັກນ້ອຍ: ບົດລະຄອນ **5:** ບໍ່ມີອີກແລ້ວເດັກຂາດສານອາຫານ
6. ການວາງແຜນຄອບຄົວ: ບົດລະຄອນ **6:** ຄອບຄົວສຸກສັນ ເມື່ອໄດ້ວ່າງແຜນຄອບຄົວ

**ຄໍາແນະນໍາສໍາລັບທີມງານ**

1. ກ່ອນການລົງບ້ານ ຫຼື ສະແດງລະຄອນແຕ່ລະຄັ້ງ ທີມງານໂຄງການ, ຄູ່ຮ່ວມງານ ແລະ ຄະນະຮັກສາສຸຂະພາບຂັ້ນບ້ານ (ຄສບ) ຕ້ອງມີການກະກ່ຽມອຸປະກອນ ແລະ ຝຶກຊ້ອມ.
2. ໃນບົດລະຄອນຂອງແຕ່ລະບົດ ແມ່ນເພື່ອສື່ໃຫ້ຮູ້ເຖິງຂະບວນການຈັດຕັ້ງປະຕິບັດໃຫ້ແທດໝາະກັບຊຸມຊົນ.
3. ໃນບ້ານເປົ້າໝາຍທີ່ບໍ່ເຂົ້າໃຈພາສາກາງ ຕ້ອງໄດ້ອ່ານບົດເລື່ອງຫຍໍ້ເປັນພາສາທ້ອງຖິ່ນ ສໍາລັບຜູ້ແປພາສາຕ້ອງເຂົ້າໃຈເນື້ອໃນຂອງບົດລະຄອນ ແລະ ຂັ້ນຕອນໃນການດໍາເນີນການຢ່າງລະອຽດ.
4. ຜູ້ທີ່ດໍາເນີນການສະແດງເປັນຕົວລະຄອນໃນບົດບາດໃດກໍ່ຕາມ ແມ່ນຈະຕອ້ງສະແດງຕາມເນື້ອໃນຂອງບົດລະຄອນທີ່ຂຽນໄວ້ໃນຄູ່ມືນີ້.
5. ໃນການຖາມ-ຕອບ: ທີມງານບໍ່ຈໍາເປັນຕ້ອງເຈາະຈົ້ມເພື່ອໃຫ້ໄດ້ຄໍາຕອບທີ່ຖືກຕ້ອງທີ່ສຸດຕາມທິດສະດີ ບົດຮຽນ ຖ້າຜູ້ເຂົ້າຮ່ວມຕອບໄດ້ບາງສ່ວນ ກໍ່ໃຫ້ຖືເປັນຄໍາຕອບທີ່ຍອມຮັບໄດ້ ແລະ ອະທິບາຍເພີ່ມເຕີມໃນຈຸດທີ່ເຂົາເຈົ້າບໍ່ໄດ້ກ່າວເຖິງ ແລະ ໃນການຖາມ-ຕອບ ພະຍາຍາມໃຫ້ທັງຍິງ ແລະ ຊາຍມີສ່ວນຮ່ວມນໍາກັນ.
6. ທີມງານແຕ່ລະຄົນຕ້ອງປະຕິບັດໜ້າທີ່ຂອງຕົນດ້ວຍຄວາມເຄົາລົບເຊິ່ງກັນ ແລະ ກັນ ມີຄວາມເປັນເອກະພາບກັນໃນທຸກຫົວຂໍ້ທີ່ຈະນໍາສະເໜີຕໍ່ຜູ້ເຂົ້າຮ່ວມ.
7. ໃນການສະແດງລະຄອນ ແມ່ນບໍ່ໄດ້ສົ່ງເສີມໃຫ້ມີການລວນລາມທາງເພດ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນອ້ຍໃນຊຸມຊົນ.

ຜ້າສາກສຳລັບໃຊ້ປະກອບການສະແດງ:






## ການດູແລແມ່ໄລຍະຖືພາ
## ບົດລະຄອນ 1: ຊຸມຊົນຮ່ວມໃຈ ແມ່ລູກປອດໄພ

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ |
|---|---|
| ທ. ເສືອ (ຜົວ)<br>ນ. ປາ (ເມຍ)<br><br>ທ. ສີໄຄ (ນາຍບ້ານ)<br>ນ.ປວກ (ໜ້າສະຫະພັນແມ່ຍິງ) ຄສບ ທ່ານໝໍ<br>ທ້າວ. ລຳໄພ (ໝໍເຢົາ) | 1. ຜ້າສາກ 1 ຜືນ<br>2. ເຊືອກສຳລັບມັດຜ້າສາກ 20 ແມັດ<br>3. ເຄື່ອງນຸ່ງສຳລັບນັກສະແດງ 7 ຊຸດ<br>4. ຕຸກກະຕາຢາງ 2 ໂຕ<br>5. ຜ້າອ້ອມ 2 ຜືນ<br>6. ກະຕ່າເຄື່ອງນ້ອຍ 1 ອັນ<br>7. ຂອງຂັວນສຳລັບການ ຖາມ - ຕອບ<br>8. ຜ້າເຈ້ (ແພຂະມາ), ຈິກ, ຊວນ, ຜ້າ, ມີດ, ກະຕ່າ. |

**ບົດເລື່ອງໂດຍຫຍໍ້ :**

ແຕ່ກີ້ແຕ່ກອ່ນມີໝູ່ບ້ານແຫ່ງໜຶ່ງຊື່ວ່າ: ບ້ານ ສະອອງ ເຊິ່ງຕັ້ງຢູ່ເຂດຫ່າງໄກສອກຫຼີກໃນນັ້ນມີຄອບຄົວໜຶ່ງ ທີ່ ມີແມ່ຍິງກຳລັງຖືພາ, ຄູ່ຜົວເມຍດັ່ງກ່າວບໍ່ເຄີຍຮູ້ກ່ຽວກັບການດູແລຕົວເອງ ແລະ ສັນຍານອັນຕະລາຍໃນໄລຍະຖືພາ ເພາະເປັນ ຄອບຄົວຜົວເມຍໃໝ່ ຜູ້ເປັນເມຍຖືພາໄດ້ 5 ເດືອນແລ້ວ ມີອາການເລືອດໄຫຼ ລາວບໍ່ຮູ້ຈະເຮັດແນວໃດ ເລີຍໄປເພິ່ງໝໍເປົ່າຢູ່ບ້ານ ແຕ່ລາວ ຍັງໂຊກດີ ເພາະ ບ້ານສະອອງ ໄດ້ມີ ຄສບ ທີ່ໄດ້ຮັບການຝຶກອົບຮົມວຽກງານແມ່ ແລະ ເດັກ ລາວຈຶ່ງສາມາດ ໃຫ້ຄຳແນະນຳ ໃຫ້ແກ່ຄູ່ຜົວເມຍ ເຮັດໃຫ້ເຂົາເຈົ້າສາມາດໄປໂຮງໝໍນ້ອຍ ໄດ້ທັນເວລາ ແລະ ອີກຢ່າງໜຶ່ງ ບ້ານສະອອງຍັງມີແຜນສຸກເສີນ ແລະ ກອງທຶນສຸກເສີນ ຈຶ່ງເຮັດໃຫ້ຜົວເມຍ ໄດ້ນຳໃຊ້ ແລະ ໄປປິ່ນປົວໃນສະຖານທີ່ບໍລິການສຸຂະພາບໄດ້ທັນເວລາ.

***<u>ສາກທີ 1: ເສຍຫຍ້າໄຮ່</u>***

**ທ້າວ ເສືອ**: ແມ່ມັນເອີ້ຍ... ເຈົ້າເສຍຫຍ້າແລ້ວ...ລົງໄປເກັບຟືນແດ່ເຫັນຟືນຫຼາຍໆຢູ່ກ້ອງຕົ້ນໄຮຜຸ້ນເດ... ສ່ວນຂ້ອຍຈະໄປຫາຊອກປາຢູ່ນ້ຳຫ້ວຍໃກ້ໆນີ້

**ນາງ ປາ**: ໂອ້ຍ ຈັ່ງແມ່ນເມື່ອຍແທ້ເດ... ຖືພາທ້ອງໃຫຍ່ແຕ່ຍັງໄດ້ເຮັດວຽກໜັກຢູ່... ຍັງຈະໄປເປ້ຟືນ ກັບເຮືອນອີກ ເຈົ້າບໍ່ຕ້ອງໄປຊອກປາເຍີມາຊ່ວຍຂ້ອຍເປ້ຟືນແດ່ມັນໜັກໂພດ

**ທ້າວ ເສືອ**: ຖ້າຂ້ອຍບໍ່ໄປ ຊອກປູຊອກປາ ແລ້ວຈະເອົາຫຍັງມາກິນ

**ນາງ ປາ**: ແຕ່ຂ້ອຍຮູ້ສຶກວ່າຂ້ອຍອິດເມື່ອຍຫຼາຍ ຢາກໃຫ້ເຈົ້າມາຊ່ວຍຂ້ອຍແດ່

**ທ້າວ ເສືອ**: ຢ່າເວົ້າຫຼາຍ ໄປເຍີໆ

**ນາງ ປາ**: (ນາງ ປາ ຍາງໄປດ້ວຍຄວາມອິດເມື່ອຍ)
ໂອ້ຍໆ....ຊ່ວຍຂ້ອຍແດ່ອ້າຍເສືອ ຂ້ອຍລົ້ມ, ອ້າຍ ເສືອ...ອ້າຍ ເສືອ...ອ້າຍ ເສືອ.

**ທ້າວ ເສືອ**: ຕາຍແລ້ວ..ຕາຍແລ້ວ...ເລືອດຄືອອກມາຫຼາຍແທ້... ຂຶ້ນຫຼັງຂ້ອຍໄວໆໆ...ຈະພາເຈົ້າໄປເຮືອນ

***<u>ສາກທີ 2: ຢູ່ເຮືອນ ທ້າວ ເສືອ ແລະ ນາງ ປາ</u>***

**ທ້າວ ເສືອ**: ມານອນໆ ແລ້ວຂ້ອຍຊິຕົ້ມນ້ຳຢາພື້ນເມືອງໃຫ້ເຈົ້າກິນເດີ! ເອົາກິນໆ! ຮູ້ສຶກດີຂຶ້ນແລ້ວຫວາ?

**ນາງ ປາ**: ຂ້ອຍຮູ້ສຶກເມື່ອຍ ເລືອດກໍ່ແຮງອອກມາຫຼາຍກວ່າເກົ່າ.

**ທ້າວ ເສືອ**: ຊັ້ນຂ້ອຍຈະໄປຮ້ອງພໍ່ເຖົ້າລຳໄຜ່ ມາເບິ່ງເຈົ້າເດີ້ ວ່າຜິດຜີອີຫຍັງ?

**ທ້າວ ເສືອ**: ເອີ້ນໃສ່.....ພໍ່ເຖົ້າລຳໄຜ່ເອີຍຢູ່ເຮືອນບໍ່?

**ເຖົ້າ ລຳໄຜ່**: ຢູ່.... ມີຫຍັງບໍ? ເສືອ! ຄືມາຮ້ອງແທ້ຮ້ອງວ່າ

**ທ້າວ ເສືອ**: ໄປດູໝໍໃຫ້ເມຍຂ້ອຍແດ່... ເມຍຂ້ອຍລົ້ມຢູ່ກອງຕົ້ນໄຮເລືອດໄຫຼອອກມາບັກຫຼາຍໆ. ຊ່ວຍຂ້ອຍແດ່ ຂ້ອຍຢ້ານວ່າຕ້ອງແມ່ນຜີເຮັດ

**ເຖົ້າ ລຳໄຜ່**: ໂອ...ເປັນແບບນີ້ ຜີເຮັດໃຫ້ເມຍເຈົ້າແນ່ນອນແລ້ວ... ໄປຫາກະກຽມກະໂທງ,ທູບທຽນ ເອົາໄກ່ມາ 1ໂຕເດີ້ ໄວໆ. ພໍ່ເຖົ້າຊິພາເຮັດ

**ທ້າວ ເສືອ**: **ເຈົ້າໆ** ໄກ່ຢູ່ເຮືອນບໍ່ມີ...ດຽວຂ້ອຍຈະໄປຊື້ໄກ່ຢູ່ເຮືອນປ້າປອກເດີ້.

***<u>ສາກທີ 3: ປົວຜີຢູ່ເຮືອນ ທ້າວເສືອ</u>***

**ທ້າວ ເສືອ**: ເອົາໄດ້ແລ້ວພໍ່ເຖົ້າ ມີໄກ່ ກັບ ກະໂທງ ແລະ ເງິນພ້ອມ

**ເຖົ້າ ລຳໄຜ່:** ເອົາມາໆ ຈະຕຽມສູດແລ້ວ ອົມມະລິກກິກເກີ່ຍໆໆ....ພ້ຽງ....ອົມມະລິກກິກເກີ່ຍໆ ອົມມະລິກ ກິກເກີ່ຍໆ...ພ້ຽງ... ເສືອເອີ້ຍ! ເຮົາສູດໃຫ້ເມຍເຈົ້າ 1 ຊົ່ວໂມງແລ້ວແຕ່ເປັນຫຍັງ ເລືອດຄືບໍ່ຢຸດໄຫຼປານນີ້ ບໍ່ຮູ້ຈະເຮັດແນວໃດແລ້ວ.

*ໜຶ່ງຊົ່ວໂມງຜ່ານໄປ*

**ປ້າ ປວກ:** ຈະໄປເບິ່ງເມຍທ້າວເສືອກ່ອນເປັນຈັ່ງໃດແລ້ວ ເຫັນວ່າມາເອົາໄກ່ໄປເຮັດລ້ຽງຜີໃຫ້ເມຍ (ປ້າປວກຍ່າງໄປເຮືອນທ້າວເສືອ) ຕາຍໆ...ເລືອດໄຫຼອອກມາຫຼາຍແທ້...ໜ້າເຫຼືອງ..ຈືດມ້ານໝົດ... ເປັນແບບນີ້ບໍ່ດີໃດ!... ຄືບໍ່ພາເມຍໄປໂຮງໝໍເລີຍເບາະ, ຖ້າປະໄວ້ດົນແບບນີ້ຈັກໜ້ອຍລາວຈະຕາຍເດີ! ເອົາລາວໄປ ໂຮງໝໍແມ້.

**ເຖົ້າ ລຳໄຜ່ :** ເຮົາກຳລັງປົວຜີໃຫ້ລາວ ອາການແບບນີ້ແມ່ນໄປຕ້ອງຜີແນ່ນອນ

**ປ້າ ປວກ :** ບໍ່ແມ່ນໆໆໆ ເລືອດໄຫຼແບບນີ້ແມ່ນຍ້ອນຖືກກະທົບກະແທກ ບໍ່ແມ່ນຜີເຮັດດອກ ໄປໆພາໄປໂຮງໝໍດຽວນີ້

**ເຖົ້າ ລຳໄຜ່:** ບໍ່ໆ ເຮົາຈະປົວໃຫ້ດີເອງ

**ປ້າ ປວກ :** ເອົາແບບນີ້ສະ ຂ້ອຍວ່າດຽວນີ້ເອົາລາວໄປໂຮງໝໍກ່ອນ ສ່ວນເຈົ້າກໍ່ປິ່ນປົວຜີຢູ່ເຮືອນນີ້

**ທ້າວ ເສືອ :** ຂ້ອຍວ່າເອົາແບບປ້າປວກ ເພິ່ນເວົ້າກ່ອນສະເນາະພໍ່ເຖົ້າ.

**ເຖົ້າ ລຳໄຜ່ :** ເອີໆ ເອົາແນວນັ້ນກະໄດ້.

**ທ້າວ ເສືອ:** ໂອ້ຍ! ຈະໄປແນວໃດ ເງິນກໍ່ບໍ່ມີ ລົດກໍ່ບໍ່ມີ ບໍ່ຮູ້ຈະໄປຢືມນຳໃຜ ປ້າປວກເອີຍ

**ປ້າປວກ:** ໂອ້ຍ... ຊິຍາກຫຍັງ ລົດກໍ່ມີລະຫວາ ຄສບ ເພິ່ນເຮັດສັນຍາລົດສຸກເສີນນຳກັນຫັ້ນເດ໋, ໄປລົມນຳເພິ່ນເບິ່ງແມ້ ສ່ວນເງິນກໍ່ໄປຢືມເງິນນຳກຸ່ມທ້ອນເງິນແມ່ຍິງຫັ້ນເດ ຄືວ່າເມຍເຈົ້າກໍ່ເປັນສະມາຊິກຢູ່ນ່າ..... ເພາະວ່າກຸ່ມທ້ອນເງິນແມ່ຍິງກໍ່ແມ່ນສ້າງເພື່ອມາ ຮັບໃຊ້ຍາມເຮົາສຸກເສີນນີ້ແຫຼະ! ເອີ! ເງິນກໍ່ຢູ່ນຳຂ້ອຍນີ້ແຫຼະ ຂ້ອຍເປັນຜູ້ກຳເງິນ ດຽວນີ້ ໄປຮ້ອງນາຍບ້ານເອົາລົດມາກ່ອນເພື່ອຈະສົ່ງເມຍເຈົ້າໄປໂຮງໝໍ ກ່ອນ ໄປໄວໆ

**ທ້າວ ເສືອ :** ເຈົ້າໆ ຂ້ອຍຈະໄປຮ້ອງນາຍບ້ານກ່ອນ (ທ້າວເສືອ ແລ່ນໄປຮ້ອງນາຍບ້ານ) ...ອ້າຍສີໄຄເອີຍຊ່ວຍຂ້ອຍແດ່ ເມຍຂ້ອຍມີເລືອດໄຫຼອອກມາ ຂ້ອຍຈະມາຂໍຢືມລົດຈະພາເມຍໄປໂຮງໝໍ.

**ທ້າວ ສີໄຄ:** ໄປເຮັດຫຍັງມາ ຈຶ່ງອອກເລືອດອອກຢາງ

**ທ້າວ ເສືອ**: ໄປໄຮ່ມື້ວານແລ້ວລົ້ມເລືອດໄຫຼອອກມາຫຼາຍໆ ໄປເບິ່ງຊ່ວຍນ້ອງແດ່

**ທ້າວ ສີໄຄ**: ໄປໆ ຮີບໄປໄວໆ ຂ້ອຍຊິເອົາລົດອອກກ່ອນ (ສຽງລົດ).....ມາໆ ຂຶ້ນໆ (ສຽງລົດອອກໄປເຮືອນທ້າວເສືອ)

***<u>ສາກທີ 4: ຢູ່ເຮືອນ ທ້າວ ເສືອ ແລະ ນາງ ປາ</u>***

**ທ້າວ ສີໄຄ**: ໂອ...ຄືມາເລືອດໄຫຼຫຼາຍແທ້ ຕາຍແລ້ວ ເອົາພາກັນຍົກລາວໃສ່ລົດໄວໆ ຍົກມາ ເສືອ ນ້ອງກຽມເຄື່ອງນຸ່ງ,ເຄື່ອງຫົ່ມ, ກຽມເງິນ ກຽມຄົນມາເຝົ້າເຮືອນພ້ອມແລ້ວບໍ

**ທ. ເສືອ:** ໂດຍ ອ້າຍ ນ້ອງກະກຽມໝົດແລ້ວ

(ສຽງລົດດັ່ງອອກໄປ!!! )

***<u>ສາກທີ 5: ຢູ່ໂຮງໝໍ</u>***

**ທ້າວ ເສືອ:** **ທ່ານໝໍເອີຍ ຊ່ວຍເມຍຂ້ອຍແດ່**

**ທ່ານໝໍ:** ມາໄວໆ ຊ່ວຍກັນຍົກລາວຂຶ້ນລໍ້... ໄວ ໆ ໆ ເອົາລາວເຂົ້າຫ້ອງກວດ

***ສາກທີ 6 ຫຼັງອອກຈາກຫ້ອງກວດ***

**ນາງ ໝູນາ:** ເຈົ້າສະບາຍດີ ໃຜເປັນຜົວຄົນເຈັບ ຊື່ ນາງປາ ?

**ທ້າວ ເສືອ:** ອ້າຍໆ...ອ້າຍນີ້ລະ..ຜົວນາງປາ...

**ນາງ ໝູນາ:** ແມ່ນຫວາ..ລູກເມຍອ້າຍປອດໄພແລ້ວເດີ ຖ້າມາຊ້າກ່ວານີ້ເມຍ ແລະ ລູກຂອງອ້າຍອາດ ເສຍຊີວິດໄດ້... ດີແຕ່ອ້າຍພາມາໄວ... ອາການຂອງເອື້ອຍເພິ່ນ...ແມ່ນໄດ້ຖືກກະທົບກະແທກຢ່າງຮຸນແຮງເຮັດໃຫ້ມີອາການເລືອດໄຫຼ ອອກມາ ຕໍ່ໄປໃຫ້ອ້າຍ ແລະ ສະມາຊິກຄອບຄົວ ແບ່ງເບົາວຽກລາວ ບໍ່ໃຫ້ເຮັດວຽກໜັກຫຼາຍ, ພັກຜ່ອນໃຫ້ພຽງພໍ, ກິນອາຫານທີ່ ມີທາດບຳລຸງເຊັ່ນ: ປາ, ຊີ້ນ, ຜັກ, ໝາກໄມ້ ແລະ ຄວນພາເມຍມາຝາກທ້ອງ ຕາມແພດນັດເດີ້ ຫຼື ຢ່າງໜ້ອຍ 4ຄັ້ງຂຶ້ນໄປ, ຖ້າມີອາການຜິດປົກກະຕິ ໃຫ້ມາຫາໝໍກ່ອນໂລດ . ທີ່ສຳຄັນຄວນມາເກີດລູກຢູ່ໂຮງໝໍນ້ອຍ ເດີ້..

**(ທ່ານໝໍນຳໃຊ້ປື້ມການດູແລໄລຍະຖືພາ ແລະ ບັດຮູບພາບ ເຂົ້າມາອະທິບາຍເພີ້ມ)**...

**ທ້າວ ເສືອ:** ເຈົ້າໆ ຂອບໃຈ ທ່ານໝໍ

***ສາກທີ 7 ດີຂຶ້ນ ກັບມາຮອດເຮືອນ***

**ທ້າວ ສີໄຄ:** ໄດ້ຍິນວ່າ ທ້າວເສືອພາເມຍມາເຮືອນແລ້ວ ຈະໄປຊວນ ນາງ ປວກ ໄປຢັ້ຽມຢາມເພິ່ນກ່ອນປວກເອີ້ຍໆຢູ່ບໍ່

**ປ້າ ປວກ :** ຢູ່ໆ ມີຫຍັງເດ່ນາຍບ້ານ

**ທ້າວ ສີໄຄ:** ຈະມາຊວນເຈົ້າໄປເບິ່ງເມຍ ທ້າວເສືອເພິ່ນມາເຮືອນແລ້ວ

**ປ້າ ປວກ:** ໄປໆ

**ທ້າວ ສີໄຄ:** ເປັນຈັ່ງໃດເສືອ ເມຍຫັ້ນນ່າ ດີແລ້ວບໍ່ ຄືກັບມາເຮືອນໄວແທ້

**ທ້າວ ເສືອ :** ດີແລ້ວ, ແຕ່ໝໍບອກໃຫ້ຕິດຕາມອາການລາວເລື້ອຍໆ, ໃຫ້ລາວພັກຜ່ອນຫຼາຍໆ ບໍ່ໃຫ້ເຮັດ ວຽກໜັກ

**ປ້າ ປວກ:** ດີໃຈນຳທີ່ປອດໄພ ຕໍ່ໄປກໍ່ຢ່າໃຫ້ເມຍເຮັດວຽກໜັກຫຼາຍເບິ່ງແຍງເມຍດີໆ ຖ້າບໍ່ດັ່ງນັ້ນ ຈະເກີດເຫດການແບບນີ້ອີກ

**ທ້າວ ເສືອ :** ຂອບໃຈເດີ້ ຄສບ ໝົດທຸກຄົນທີ່ ໃຫ້ການຊ່ວຍເຫຼືອຄອບຄົວຂອງຂ້ອຍ ໂດຍສະເພາະແມ່ນ ປ້າປວກ ແລະ ອ້າຍ ສີໄຄ ທີໃຫ້ຢືມເງິນ ແລະ ລົດໄປສົ່ງໂຮງໝໍເຮັດໃຫ້ລູກ ແລະ ເມຍຂອງຂ້ອຍປອດໄພ ຕໍ່ໄປຂ້ອຍຈະລົມກັບຄົນໃນເຮືອນຂ້ອຍ ໃຫ້ແບ່ງເບົາວຽກງານທີ່ເມຍ ເຮັດຜ່ານມາເພື່ອໃຫ້ລາວ ມີເວລາດູແລຕົວເອງຫຼາຍຂຶ້ນກ່ວານີ້

**ທ້າວ ສີໄຄ:** ບໍ່ເປັນຫຍັງ... ເຮົາຢູ່ບ້ານດຽວກັນ...ມີຫຍັງກະຊ່ວຍກັນນີ້ແຫຼະ...ແຕ່ສິ່ງທີ່ອ້າຍ

ຢາກແນະນຳນ້ອງເພີ່ມ...ບໍ່ໃຫ້ເມຍເຮັດວຽກໜັກໂດຍສະເພາະ
ໃນໄລຍະຖືພາ ແລະຢູ່ໃກ້ຊິດລາວ ເພື່ອເວລາສຸກເສີນຈິ່ງຈະສາມາດຊ່ວຍລາວທັນເວລາ.

**ທ້າວ ເສືອ:** ໂດຍ... ຕໍ່ໄປນ້ອງສັນຍາວ່າຈະບໍ່ໃຫ້ເມຍເຮັດວຽກໜັກອີກແລ້ວ...ຈະເອົາໃຈໃສ່ໃຫ້ດີກ່ວານີ້... ຕໍ່ໄປນ້ອງຈະເຮັດຕາມຄຳແນະນຳຂອງອ້າຍເອື້ອຍ ຈະບໍ່ໃຫ້ມີເຫດການແບບນີ້ອີກແລ້ວ ຂອບໃຈຫຼາຍໆ.

***<u>ສາກທີ 8 ຢູ່ເຮືອນ</u>***

**ທ້າວ ເສືອ :** ແມ່ມັນເອີ້ຍ...ມື້ນີ້ຂ້ອຍຈະໄປເປັ້ຟືນກ່ອນເດີ້...ໄປຊອກຜັກຫັກໜໍ່... ຊອກຫາປູ, ຫາປາ, ເພື່ອເຮົາຈະໄດ້ມີອາຫານພຽງພໍ ເປັນຕົ້ນແມ່ນເຈົ້າຕ້ອງກິນອາຫານທີ່ມີທາດບຳລຸງເພື່ອເຈົ້າເອງ ແລະລູກໃນທ້ອງຂອງພວກເຮົາ. ເຈົ້າເຮັດວຽກເບົາໆ ແລະ ຫາເວລາພັກຜ່ອນຢູ່ເຮືອນຖ້າເດີ... ຮ່າງກາຍຂອງເຈົ້າຍັງບໍ່ແຂງແຮງດີເທື່ອ ຢູ່ເຮືອນເກືອເປັດ, ເກືອໄກ່, ຖ້າຂ້ອຍກໍ່ໄດ້, ເຈົ້າຢ່າໄປຍົກຍໍເຄື່ອງໜັກເດີ້.

**ນາງ ປາ :** ໂດຍຜົວ ກັບມາໄວໆເດີ

***<u>ສາກທີ 10 ເມຍຖ້າຜົວ ຢູ່ເຮືອນ</u>***

**ນາງ ປາ :** ນີ້ກະໃກ້ຈະຄ່ຳແລ້ວ ອ້າຍເສືອ ຍັງບໍ່ມາ ປານນີ້ ສິງໃສລາວຄືຈະໄດ້ປາຫຼາຍ ຕິເບາະ ຈຶ່ງນານມາແທ້...

**ທ້າວ ເສືອ:** ກັບມາແລ້ວ ເມຍ ເອີ້ຍ ຂ້ອຍໄດ້ປາໂຕບັກໃຫຍ່ມາໃຫ້ເຈົ້າຕົ້ມກິນ, ເກັບຜັກມາພ້ອມ ມີໝາກກ້ວຍແດ່ໄປເກັບຢູ່ສວນມາມື້ນີ້ຂ້ອຍຈະແຕ່ງກິນໃຫ້ເຈົ້າກິນເດີ້ ນັ່ງໃນເຮືອນຖ້າເດີ້.

**ນາງ ປາ:** ເຈົ້າໆ ຄັນຊັ້ນຂ້ອຍຈະລ້າງໝາກກ້ວຍເດີ້

**ທ້າວ ເສືອ :** ມາແລ້ວໆ ອາຫານທີ່ບຳລຸງສຳລັບເມຍທີ່ຮັກຂອງຂ້ອຍ ກິນຫຼາຍໆເດີ້

**ນາງ ປາ :** ມາເປັນຕາແຊບແທ້ເດ ມີຜັກ, ມີປາ, ມີໝາກກ້ວຍ, ຈັ່ງແມ່ນມີແຕ່ແນວຂ້ອຍມັກເນາະ ຂອບໃຈເດີ້ ຜົວແພງ.

**ທ້າວ ເສືອ:** ເມຍເອີ້ຍ ມື້ອື່ນກຽມປຶ້ມຕິດຕາມສຸຂະພາບແມ່ ແລະ ເດັກເດີ້ ຂ້ອຍຈະພາເຈົ້າໄປຝາກທ້ອງ

**ນາງ ປາ:** ໂດຍຜົວທີ່ຮັກ

**ທ້າວ ເສືອ:** ກິນຫຼາຍໆເດີ້ ໝໍເພິ່ນບອກໃຫ້ເຈົ້າກິນຫຼາຍເພື່ອບຳລຸງລູກໃນທ້ອງ ແລະ ຕົວເຈົ້າເອງ, ຕໍ່ໄປນີ້ຂ້ອຍຈະແຕ່ງອາຫານແຊບໆແບບນີ້ໃຫ້ເຈົ້າກິນທຸກມື້ ເຈົ້າບໍ່ຕ້ອງເຮັດວຽກໜັກອີກເດີ ຕໍ່ໄປນີ້ຜົວ ຄືນໃນຄອບຄົວຈະຊ່ວຍແບ່ງເບົາວຽກເມຍເອງ

**ນາງ ປາ:** ໂດຍຜົວ ຮັກຜົວເດ້ ແພງເດ້

**(ທີມງານທຸກຄົນຢືນ ແລ້ວເວົ້າອອກສຽງດັ່ງໆວ່າ)**
**ສຸຂະພາບທີ່ດີຂອງແມ່ ແລະ ເດັກເປັນໜ້າທີ່ຂອງໝົດທຸກຄົນ**

**ຄຳຖາມ:**

1. ບົດລະຄອນມີຊື່ວ່າແນວໃດ? ແລະມີຈັກຕົວລະຄອນ?
2. ນາງປາລາວເປັນຫຍັງ? ເປັນຫຍັງລາວຈຶ່ງມີອາການເລືອດໄຫຼ?
3. ເປັນຫຍັງທ້າວເສືອ (ຜົວ) ຈຶ່ງໃຫ້ເມຍ (ນາງ ປາ) ໄປເອົາຟືນ? ທ້າວເສືອຄືບໍ່ໄປເອງ ລາວສາມາດໄປ ເອົາຟືນເອງໄດ້ບໍ່?
4. ແມ່ນໃຜເປັນຜູ້ແນະນຳໃຫ້ ທ້າວ ເສືອ ພາເມຍໄປໂຮງໝໍ? ເຂົາເຈົ້າໃຫ້ການຊ່ວຍເຫຼືອລາວຄືແນວໃດ?
5. ກ່ອນກັບບ້ານ ໝໍແນະນຳ ທ້າວເສືອ ແລະ ນາງ ປາແນວໃດ?
6. ສຸດທ້າຍຄອບຄົວຂອງ ທ້າວ ເສືອ ແລະ ນາງ ປາ ມີການປ່ຽນແປງແນວໃດໃນການແບ່ງວຽກ?

## ການດູແລແມ່ໄລຍະເກີດ

## ບົດລະຄອນ 2: ລູກລອດ-ແມ່ປອດໄພ

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ |
|---|---|
| ທ. ຟານ (ຜົວ)<br>ນ. ອ້ອຍ (ເມຍ)<br>ທ. ເຊືອກ (ນາຍບ້ານ)<br>ນ. ຕອງ (ຫົວໜ້າສະຫະພັນແມ່ຍິງ ອສບ)<br>ນ. ກະຕ່າຍ (ໝໍ) | 1. ຜ້າສາກ 1 ຜືນ<br>2. ເຊືອກສຳລັບມັດຜ້າສາກ 20 ແມັດ<br>3. ເຄື່ອງນຸ່ງສຳລັບນັກສະແດງ 7 ຊຸດ<br>4. ຕຸກກະຕາຢາງ 2 ໂຕ<br>5. ຜ້າອ້ອມ 2 ຜືນ<br>6. ກ້ອງນົມ 1 ກ້ອງ<br>7. ກະຕ່າເຄື່ອງນ້ອຍ 1 ອັນ<br>8. ອຸປະກອນ ສຳລັບ ການ ຖາມ - ຕອບ ຄຳຖາມ 1 ຊຸດ<br>9. ຊຸດທ່ານໝໍ 1 ຊຸດ |

**ບົດເລື່ອງໂດຍຫຍໍ້**

ຢູ່ໃນໝູ່ບ້ານແຫ່ງໜຶ່ງທີ່ຕັ້ງຢູ່ເຂດຫ່າງໄກສອກຫຼີກ ຢູ່ໃນບ້ານນັ້ນໄດ້ມີ ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ (ຄສບ) ແລະ ເຂົາເຈົ້າໄດ້ເຮັດຕາມແຜນບ້ານທີ່ໄດ້ວາງໄວ້ ຮ່ວມກັບສາທາເມືອງ, ແມ່ຍິງເມືອງ ແລະ ໂຄງການ ໃນການວາງແຜນຮັບມືສຸກເສີນເຊັ່ນ: ມີກອງທຶນສຸກເສີນ, ສັນຍາລົດ ເພື່ອໃຫ້ຄົນຢູ່ໃນຊຸມຊົນສາມາດຢືມໄດ້ໃນ ຍາມຈຳເປັນ, ເພື່ອໃຫ້ທຸກຄົນໄດ້ເຂົ້າເຖິງສະຖານທີ່ບໍລິການສາທາລະນະສຸກຫຼາຍຂຶ້ນ. ໃນໝູ່ບ້ານດັ່ງກ່າວໄດ້ມີແຜນ ພັດທະນາສາລະນະສຸກ ໂດຍສະເພາະໜ່ວຍງານແມ່ ແລະ ເດັກຂອງບ້ານ.ເມື່ອບໍ່ດົນມານີ້ ກໍ່ມີຄອບຄົວໜຶ່ງ ທີ່ເມຍ ກຳລັງຖືພາ (ທ.ຟານ ແລະ ນ.ອ້ອຍ) ມາຂໍນຳໃຊ້ລົດ ແລະ ຢືມເງິນກອງທຶນ ສຸກເສີນເພື່ອຈະໄປເກີດລູກ ຢູ່ສະຖານທີ່ບໍລິການ. ຄສບ ກໍໄດ້ອະນຸມັດ ແລະ ໄປສົ່ງເຖິງສະຖານທີ່ບໍລິການ. ໃນຂະນະທີ່ ນ. ອ້ອຍກຳລັງ ເກີດລູກຢູ່ໂຮງໝໍກໍ່ມີເຫດການທີ່ບໍ່ຄາດຄິດເກີດຂຶ້ນ ມີສາຍແຮ່ຢ່ອນອອກມາກ່ອນ ແຕ່ດີທີ່ມີແພດຊ່ຽວຊານ ແລະ ອຸປະກອນຄົບໝໍໄດ້ຜ່າຕັດເກີດລູກໃຫ້ລາວ ເຮັດໃຫ້ປອດໄພ ທັງແມ່ ແລະ ລູກ.

***<u>ສາກທີ1 ຢູ່ເຮືອນ  9916/14218,129/1433</u>***

**ນາງ ອ້ອຍ:** ພໍ່ມັນເອີຍ! ມື້ວານນີ້ຂ້ອຍໄປຮ່ວມກອງຊຸມ ຄສບ ບ້ານເພິ່ນເຜີຍແຜ່ເລື່ອງໂພຊະນາການ ແລະ ເລື່ອງ ສຸຂະພາບແມ່ ແລະ ເດັກ. ເພິ່ນເນັ້ນໜັກວ່າ ໃຫ້ໄປເກີດລູກຢູ່ໂຮງໝໍ ເພາະການ ໄປເກີດລູກຢູ່ໂຮງໝໍຫັ້ນ ມີຜົນດີຫຼາຍ ໂດຍມີແພດຜູ້ຊຳນານໃນການຊ່ວຍເກີດລູກ, ລູກກໍ່ໄດ້ ສັກຢາກັນພະຍາດ ແລະ ເຮົາກໍ່ໄດ້ຮັບ ຄຳແນະນຳຈາກແພດໝໍເລື່ອງໂພຊະນາການ ແລະ ການວາງແຜນຄອບຄົວນຳອີກ.

**ທ້າວ ຟານ**: ໂອ! … ແມ່ນຫວາ ຟັງຕາມເມຍເວົ້າຄືຈະດີເນາະ ! ຄັນຊັ້ນກ່ອນຈະໄປເກີດລູກຢູ່ໂຮງໝໍເຮົາຈະຕ້ອງກຽມຫຍັງອີກແດ່?

**ນາງ ອ້ອຍ**: ເພິ່ນບອກໃຫ້ເຮົາກຽມປື້ມຕິດຕາມສຸຂະພາບແມ່ ແລະ ເດັກ, ໃບຢັ້ງຢືນຈາກນາຍບ້ານ, ເຄື່ອງນຸ່ງຫົ່ມຂອງແມ່ ແລະ ເດັກ, ຜ້າປູນອນ, ຜ້າອ້ອມທີ່ສະອາດໃຫ້ເດັກ, ອາຫານການກິນ, ເງິນ, ລົດ

**ທ້າວ ຟານ:** ເງິນທີຈະຊື້ເຄື່ອງນຸ່ງລູກ, ຜ້າອ້ອມລູກກໍ່ພໍຈະມີຢູ່ດອກ ແຕ່ມັນຈະເຫຼືອໜ້ອຍ ຈະບໍ່ພໍສຳລັບ ການໃຊ້ຈ່າຍອື່ນໆ. ເຮົາຈະໄປເອົາເງິນມາແຕ່ໃສ່ອີກ

**ນາງ ອ້ອຍ:** ຄັນຊັ້ນເຮົາໄປຢືມນຳພີ່ນ້ອງກ່ອນ ແລ້ວຈຶ່ງເອົາເງິນທີ່ເຮົາຝາກນຳກຸ່ມທ້ອນເງິນແມ່ຍິງຂອງບ້ານເຮົາຫັ້ນມາແທນກໍ່ໄດ້. ນ້ອງໄດ້ເຂົ້າເປັນສະມາຊິກຢູ່ກຸ່ມແລ້ວ.

**ທ້າວ ຟານ**: ເພິ່ນກໍ່ຈະໃຫ້ຢືມຢູ່ບໍ?

**ນາງ ອ້ອຍ:** ໃຫ້ຢືມຢູ່ດອກ ເພາະຂ້ອຍກໍ່ແມ່ນສະມາຊິກຢູ່ໃນກຸ່ມນັ້ນ ເພິ່ນວ່າສາມາດຢືມໄດ້ ຖ້າເຮົາມີຄວາມຈຳເປັນ.

**ທ້າວ ຟານ:** ແມ່ນຫວາ.. ແຕ່ວ່າເຮົາຍັງບໍ່ມີລົດແດ່! ຈະໄປເອົານຳໃຜ?

**ນາງ ອ້ອຍ**: ເຈົ້າລອງໄປຖາມນຳນາຍບ້ານ, ຄສບ ເພິ່ນໄດ້ເຮັດສັນຍາລົດສຸກເສີນໃນເວລາຈຳເປັນ ສາມາດໄປຢືມໄດ້ ອ້າຍລອງໄປລົມນຳເພິ່ນເບິ່ງດູ !

**ທ້າວຟານ:** ໄດ້ໆໆໆ ອ້າຍຈະໄປຢືມລົດນຳ ຄສບ ສ່ວນນ້ອງໄປຢືມເງິນກອງທຶນນຳເພິ່ນໄວ້ ອ້າຍຈະໄປຫານາຍບ້ານ ກ່ອນເດີ.

***<u>ສາກທີ 2 ຢູ່ເຮືອນນາຍບ້ານ</u>***

**ທ້າວ ຟານ:** ນາຍບ້ານໆໆໆ

**ທ້າວ ເຊືອກ:** ເຈົ້າ ສະບາຍດີ ມີຫຍັງບໍ?

**ທ້າວ ຟານ:** ຂ້ອຍມາຂໍປຶກສານຳອ້າຍແດ່ໜ້ອຍໜຶ່ງ

**ທ້າວ ເຊືອກ:** ໄດ້ໆໆໆໆ ມີຫຍັງໃຫ້ຊ່ວຍ

**ທ້າວ ຟານ:** ຂ້ອຍຍາກພາເມຍຂ້ອຍໄປເກີດລູກຢູ່ໂຮງໝໍ. ຈະມາຂໍຢືມລົດອ້າຍໄປໄດ້ບໍ່

**ທ້າວ ເຊືອກ:** ໂອ.. ໄດ້ໆ ຈະໄປມື້ໃດ?

**ທ້າວ ຟານ:** ອາທິດໜ້າ.

**ທ້າວ ເຊືອກ:** ໄດ້ໆ ຈະໄປມື້ໃດລະມາຢືມມື້ນັ້ນໄດ້ເດີ

**ທ້າວ ຟານ.** ເຈົ້າໆ ຂອບໃຈ ນ້ອງຈະໄປກຽມເຄື່ອງຊ່ວຍເມຍກ່ອນ

***<u>ສາກທີ່3 ກຳລັງຈະກຽມພັບເຄື່ອງຢູ່ເຮືອນ</u>***

**ນາງ ອ້ອຍ:** ພໍ່ມັນເອີຍເງິນນ້ອງໄປຢືມມາໄດ້ແລ້ວເດີ ຂ້ອຍຮູ້ສຶກວ່າມີນ້ຳຄາວປາອອກມາຈາກຊອງຄອດ ໂອຍໆໆ ຊ່ວຍຂ້ອຍແດ່

**ທ້າວ ຟານ:** ໂອ້ຍໆໆໆ ອ້າຍຈະໄປຮ້ອງນາຍບ້ານເອົາລົດມາຮັບກ່ອນເດີ ( ແລ່ນ) ອ້າຍ ເຊືອກ ຊ່ວຍແດ່ມາ ຮັບເມຍຂ້ອຍໄປໂຮງໝໍແດ່ ເມຍຂ້ອຍນ້ຳຄາວປາແຕກແລ້ວ ໄຫຼອອກມາບັກຫຼາຍໆ

**ທ.ເຊືອກ:** ເອີ..ກຽມອອກໄປ ໄປໆໆ...ຕ໊ອກ ໆ ໆ ໆ...

***<u>ສາກທີ່4 ຢູ່ໂຮງໝໍ</u>***

**ນາງ ກະຕ່າຍ:** ສະບາຍດີ ຄືພາກັນມາຫຼາຍຄົນແທ້ເປັນຫຍັງເດ?

**ທ້າວ ຟານ:** ໝໍໆໆຊ່ວຍເມຍຂ້ອຍແດ່ໆ

**ນາງ ກະຕ່າຍ:** ເອົາເຂົ້າຫ້ອງເກີດລູກກ່ອນ ໄວໆໆໆ

**ນາງ ກະຕ່າຍ:** ໃຜເປັນພີ່ນ້ອງຄົນເຈັບ

**ທ້າວ ຟານ:** ອ້າຍໆໆ ອ້າຍນີ້ແຫຼະ, ເມຍຂ້ອຍປອດໄພແລ້ວບໍ່ໝໍ ?

**ນາງ ກະຕ່າຍ:** ຕອນນີ້ເມຍເຈົ້າຕ້ອງໄດ້ຜ່າຕັດດ່ວນ ເພາະວ່າສາຍແຮ່ຂອງເດັກຢ່ອນອອກມາກ່ອນ.

**ທ້າວ ຟານ:** ໂອ້ຍແມ່ນບໍ່ ຄືມາເປັນຕາຢ້ານແທ້. ເຮັດແນວໃດກະໄດ້ຊ່ວຍເມຍຂ້ອຍແດ່ ໃຫ້ລາວປອດໄພ

**ນາງ ກະຕ່າຍ:** ບໍ່ເປັນຫຍັງ ພວກເຮົາຈະຊ່ວຍລາວເຕັມທີ່

***<u>ສາກ 5 ຢູ່ໂຮງໝໍ</u>***

**ຜ່ານໄປ ສອງ ຊົ່ວໂມງໝໍຍ່າງອອກມາຈາກຫ້ອງຜ່າຕັດ**

**ທ້າວ ຟານ:** ໝໍ ເມຍຂ້ອຍເປັນແນວໃດແລ້ວ

**ນາງ ກະຕ່າຍ:** ໂອ... ດີແລ້ວທີ່ມາທັນ ຖ້າມາຊ້າ ເດັກອາດເສຍຊີວິດ ດີໃຈນຳເດີເດັກປອດໄພ ລູກອ້າຍເປັນຜູ້ ຊາຍ

**ທ້າວ ຟານ:** ຂອບໃຈທ່ານໝໍທີ່ຊ່ວຍລູກຂ້ອຍ

**ນາງ ກະຕ່າຍ:** ບໍ່ເປັນຫຍັງ ດີແລ້ວທີ່ມາໂຮງໝໍ ຖ້າໃຫ້ເມຍເຈົ້າເກີດລູກຢູ່ເຮືອນອາດມີຄວາມສ່ຽງ ລູກອາດ ເສຍຊີວິດ ໄດ້ເພາະຢູ່ບ້ານບໍ່ມີໝໍ ແລະ ບໍ່ມີເຄື່ອງຜ່າຕັດໃນກໍລະນີແບບນີ້. ເຊີນເຂົ້າໄປ ເຝົ້າເມຍ ເຈົ້າ ໄດ້ແລ້ວ. ຂ້ອຍຊິເອົາລູກເຈົ້າໄປອະນາໄມ, ສັກຢາ ແລ້ວຈຶ່ງເອົາມາກິນນົມ.

**ທ້າວ ຟານ:** ແລ່ນໄປເບິ່ງເມຍ

***ສາກທີ່ 6 ຢູ່ໂຮງໝໍ***

(4 ມື້ຕໍ່ມາຈະອອກໂຮງໝໍ)

**ທ້າວ ຟານ:** ໂອ້ມານອນໂຮງໝໍກໍ 4 ມື້ແລ້ວ ໝໍເພິ່ນກໍອະນຸຍາດໃຫ້ກັບບ້ານໄດ້ແລ້ວ.

**ນາງ ອ້ອຍ:** ອ້າຍຟານ ເຮົາໄປລາທ່ານໝໍບໍ່ກ່ອນກັບບ້ານກ່ອນ ຈະຂອບໃຈເພິ່ນ ກ່ອນອອກໂຮງໝໍເນາະ

**ທ້າວ ຟານ:** ດີຄືກັນ ທ່ານໝໍມາພໍດີ ສະບາຍດີ ທ່ານໝໍ ຈະມາລາທ່ານກ່ອນກັບບ້ານ ຂອບໃຈເດີທີ ຊ່ວຍຊີວິດເມຍ ແລະ ລູກຂ້ອຍບໍ່ໄດ້ທ່ານໝໍຊ່ວຍຈະລູກຂ້ອຍອາດເສຍຊີວິດໄປແລ້ວ

**ນາງ ກະຕ່າຍ:** ເຈົ້າບໍ່ເປັນຫຍັງ ໄປຮອດເຮືອນແລ້ວ ດູແລເມຍໃຫ້ດີເດີ ບໍ່ໃຫ້ເມຍເຮັດວຽກໜັກ, ພັກຜ່ອນໃຫ້ພຽງພໍ, ກິນອາຫານທີ່ມີທາດບຳລຸງຫຼາຍໆເຊັ່ນ: ຜັກ, ປາ, ໝາກໄມ້.
ຖ້າມີອາການຜິດປົກກະຕິໃຫ້ກັບມາໂຮງໝໍທັນທີໂລດເດີ້. ອະນາໄມລູກນ້ອຍໃຫ້ສະອາດ ຖ້າອາກາດຮ້ອນໃຫ້ອາບນ້ຳອຸ່ນ 2 ຄັ້ງ ຖ້າອາກາດໜາວອາບນ້ຳອຸ່ນ 1 ຄັ້ງກະພໍ, ອະນາໄມສາຍບືເດັກ ບໍ່ໃຫ້ເອົາຫຍັງໃສ່ສາຍບືເດີ້ ມີແຕ່ເອົາຜ້າສະອາດເຊັດໃຫ້ແຫ້ງ, ຮັກສາຄວາມອຸ່ນລູກຕະຫຼອດເວລາເດີ້.

**ທ້າວຟານ+ນາງອ້ອຍ:** ເຈົ້າໆ... ຂອບໃຈໆທ່ານໝໍ ກັບກ່ອນເດີ

**ນາງ ກະຕ່າຍ:** ເຈົ້າ... ໂຊກດີ

***ສາກທີ່ 7 ຢູ່ບ້ານ***

**ທ.ລອຍ:** ເອື້ອຍຕອງ ເຮົາໄປຫຼິ້ນຢູ່ເຮືອນທ້າວຟານໄປ... ໄດ້ຍິນວ່າເພິ່ນໄປໂຮງໝໍມາແຕ່ ໂຮງໝໍ ແລະ ຮອດເຮືອນແລ້ວ.

**ນາງ ຕອງ:** ໄປໆ... ຢາກເຫັນວ່າເປັນຜູ້ຍິງ ຫຼື ຊາຍ.

***ສາກ 8 ເຮືອນທ້າວຟານ-ນາງອ້ອຍ :***

**ນາງ ຕອງ:** ຟານ ເອີຍ... ໄດ້ລູກຍິງ ຫຼື ຊາຍ.

**ທ້າວ ຟານ:** ໄດ້ລູກຊາຍ.

**ນ.ຕອງ:** ໂອໆໆໆ... ຕາແພງແທ້ ອູ້ມແດ່ດູຫັ້ນ, ໜ້າຄືພໍ່ມັນເລີຍເນາະ, ດຳຄືພໍ່ມັນ ເລີຍນໍ ...ບໍ່ໄດ້ແນວແມ່ຈັກໜ້ອຍເລີຍ.

**ທ້າວ ຟານ:** 5555 ແມ່ມັນຮັກຂ້ອຍຫຼາຍເດ ກໍ່ໄດ້ແນວຂ້ອຍລະເນາະ!

**ທ.ເຊືອກ:** ເປັນຈັ່ງໃດ? ໄປໂຮງໝໍເພິ່ນແກ້ໄຂແບບໃດຈຶ່ງປອດໄພ.

**ນ.ອ້ອຍ:** ສາຍແຮ່ຢ່ອນອອກມາກ່ອນ ເພິ່ນກໍ່ເລີຍເອົາຂ້ອຍເຂົ້າຫ້ອງຜ່າຕັດດ່ວນລູກເລີຍປອດໄພ, ຖ້າເຮົາໄປບໍ່ທັນ ຈະມີຄວາມສ່ຽງ, ລູກອາດເສຍຊີວິດໄດ້, ຖ້າເກີດຢູ່ເຮືອນ ເຮົາ ແລະ ລູກຈະບໍ່ປອດໄພເພາະບໍ່ມີເຄື່ອງມືຜ່າຕັດ ແລະ ບໍ່ມີອຸປະກອນການເກີດ, ແຕ່ນີ້ເຮົາໄປໂຮງໝໍ ແລະ ໝໍເພິ່ນກໍ່ເກັ່ງ, ມີຄວາມຊຳນານຊ່ວຍໃນການຜ່າຕັດລູກຂ້ອຍຈຶ່ງປອດໄພ, ຕ້ອງຂອບໃຈເພິ່ນຫຼາຍໆ ເພິ່ນໃຈດີຍິ້ມແຍ້ມແຈ່ມໃສຕ້ອນຮັບຢ່າງດີ ຂອບໃຈ ເອື້ອຍຕອງ ແລະ ອ້າຍເຊືອກ ຫຼາຍໆເດີ້ ທີ່ໃຫ້ການຊ່ວຍເຫຼືອຄອບຄົວຂອງຂ້ອຍ.

**ນາງ ຕອງ:** ບໍ່ເປັນຫຍັງ ດີແລ້ວທີ່ປອດໄພ ເຮົາຄົນບ້ານດຽວກັນກໍ່ຕ້ອງຊ່ວຍເຫຼືອກັນ ລວມບ້ານຄັ້ງຕໍ່ໄປ, ຈະໄດ້ລົມ ກັບ ຄສບ ແລະ ໃຫ້ເອົາບົດຮຽນນີ້ໄປເຜີຍແຜ່ໃຫ້ຊາວບ້ານຮູ້ ແລະ ກໍ່ເປັນການດີ ທີ່ມີແຜນກະກຽມລ່ວງໜ້າ ມັນເປັນການສ້າງຄວາມເຂັ້ມແຂງ ໃຫ້ແກ່ຊຸມຊົນເຮົາໃນການ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

(ສຸຂະພາບທີ່ດີຂອງແມ່ ແລະ ເດັກເປັນໜ້າທີ່ຂອງໝົດທຸກຄົນ)

**ຄຳຖາມ:**

1. ຕົວລະຄອນມີຊື່ຫຍັງແດ່? ລະຄອນເວົ້າເຖິງຫຍັງແດ່?
2. ນາງອ້ອຍ ແລະ ທ້າວຟານໄດ້ກຽມຫຍັງກ່ອນຈະໄປເກີດລູກຢູ່ສະຖານທີບໍລິການ? ລາວມີອາການ ແບບໃດກ່ອນຈະເກີດລູກ? ຖ້ານາງອ້ອຍບໍ່ໄປໂຮງໝໍລາວຈະເປັນແນວໃດ?
3. ໃຜໃຫ້ການຊ່ວຍເຫຼືອລາວໄປໂຮງໝໍ? ໝໍໄດ້ໃຫ້ການຊ່ວຍເຫຼືອຫຍັງແດ່ລູກລາວຈຶ່ງປອດໄພ? ໝໍໄດ້ແນະນຳຫຍັງກ່ອນລາວຈະກັບບ້ານ.

**ການດູແລແມ່ຫຼັງເກີດ**

**ບົດລະຄອນ 3: ຜົວດີ ເມຍຮັກ**

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ |
|---|---|
| 1. ທ. ໄກ່ (ຄອບຄົວສາທາ)<br>2. ນ. ເປັດ (ຄອບຄົວສາທາ)<br>3. ທ. ລີງ (ຄອບຄົວໄວຮັດ)<br>4. ນ. ນົກ (ຄອບຄົວໄວຮັດ)<br>5. ນ.ເຕົ່າ (ຫົວໜ້າສະຫະພັນແມ່ຍິງ)<br>6. ນ.ເຫັດບີ (ແມ່)<br>7. ນ.ດອກໄມ້ (ໝໍ) | ຜ້າສາກ (ພາບເບື້ອງຫຼັງ) 2,5 X 4m 1 ຜືນ<br>2. ເຊືອກສຳລັບມັດຜ້າສາກ 20 ແມັດ<br>3. ເຄື່ອງນຸ່ງສຳລັບນັກສະແດງ 7 ຊຸດ<br>4. ຕຸກກະຕາເດັກເກີດໃໝ່ 2 ໂຕ<br>5. ຜ້າອ້ອມ 2 ຜືນ<br>6. ຈັກໄຟຟ້າ 1 ອັນ<br>7. ຕູ້ລຳໂພງ 1 ອັນ<br>8. ຄອມພິວເຕີ 1 ເຄື່ອງ |

| | |
|---|---|
| | 9. ກະຕ່າເຄື່ອງນ້ອຍ 1 ອັນ<br>10. ສະລິບໃໝ່ 1 ຜືນ<br>11. ຂອງຂັວນສຳລັບການ ຖາມ - ຕອບ ຄຳຖາມ<br>- ຜ້າເຊັດນ້ອຍ 10 ຜືນ<br>- ສະບູ 10 ກ້ອນ |

**ບົດເລື່ອງໂດຍຫຍໍ້**

ໃນໝູ່ບ້ານແຫ່ງໜຶ່ງ ມີ 2 ຄອບຄົວທີ່ຫາກໍ່ເກີດລູກໃໝ່, ຄອບຄົວສາທາ (ທີ່ໃຊ້ບໍລິການຢູ່ສະຖານທີ່ບໍລິການ ສາທາ) ຜົວໄດ້ພາເມຍໄປກວດຫຼັງເກີດ ແລະ ຜົວກໍ່ໄດ້ເອົາໃຈໃສ່ເບິ່ງແຍງ ດູແລ ລູກ-ເມຍ ເປັນຢ່າງດີ ແລະ ຊ່ວຍວຽກເມຍ ໃນໄລຍະລູກຍັງນ້ອຍ. ສ່ວນຄອບຄົວໄວຣັດ (ທີ່ບໍ່ເຄີຍເຂົ້າເຖິງການບໍລິການສາທາລະນະສຸກ), ຜົວບໍ່ພາເມຍໄປ ກວດຫຼັງເກີດ ແລະ ບໍ່ຄ່ອຍເອົາໃຈໃສ່ໃນການດູແລເມຍ ຈຶ່ງເຮັດໃຫ້ລາວມີອາການ ຜິດປົກກະຕິ.
ໃນມື້ໜຶ່ງ ຄອບຄົວຂອງໄວຣັດ ໄດ້ເກີດເຫດການບໍ່ຄາດຄິດ ແລະ ມາມື້ໜຶ່ງຄອບຄົວທີ່ໄດ້ໃຊ້ບໍລິການສາທາ ໄດ້ແລກປ່ຽນປະສົບການ ຫຼັງຈາກນັ້ນ ລາວຈຶ່ງໄດ້ເຂົ້າຮວມກອງປະຊຸມ ແລະ ລາວກໍ່ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບສັນຍານອັນຕະລາຍ. ມື້ຕໍ່ມາລາວໄດ້ໄປປຶກສາກັບ ຄສບ ແລະ ຂໍຄວາມຊ່ວຍເຫຼືອ ພາເມຍໄປກວດຫຼັງເກີດຢູ່ສຸກສາລາ ລາວມີຄວາມດີໃຈທີ່ຊຸມຊົນມີຄວາມສາມັກຄີ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ແລະ ບ້ານມີແຜນຮັບມື ຕໍ່ພາວະສຸກເສີນ.

- ***<u>ສາກທີ 1: ຄອບຄົວ ທ.ໄກ່ ແລະ ນ.ເປັດ ພາເມຍໄປກວດຫຼັງເກີດຢູ່ສຸກສາລາ (ຢູ່ບ້ານ)</u>***

**ທ.ໄກ່:** ແມ່ອີ່ນາງ ເຮົາໄປເກີດລູກຢູ່ໂຮງໝໍມາໄດ້ 1ອາທິດແລ້ວ ແພດເພິ່ນນັດໃຫ້ເຮົາໄປກວດຫຼັງເກີດ ຄືນໃໝ່ໃດຫັ້ນ ອ້າຍວ່າຈະພານ້ອງໄປກວດມື້ນີ້.

**ນ. ເປັດ:** ແມ່ນໃດເນາະ ນ້ອງລືມເລີຍ ແຕ່ອ້າຍວ່າມື້ນີ້ ຈະເຂົ້າປ່າໄປຊອກຫາອາຫານບໍ່

**ທ.ໄກ່:** ກະແມ່ນຢູ່ ແຕ່ສຸຂະພາບເຈົ້າ ມັນສຳຄັນກວ່າສິ່ງອື່ນໆໃດ ໄປໂຮງໝໍມາຈຶ່ງໄປຊອກຫາກິນກະໄດ້

**ນ. ເປັດ:** ໂດຍໆໆ... ນອ້ງກຽມເຄື່ອງລູກກອ່ນເດີ້ ໄປໆ (ສຽງລົດຈັກປະກອບ)

- ***<u>ສາກທີ 2: ຄອບຄົວ ທ.ລີງ, ນ.ນົກ ບໍ່ພາເມຍໄປກວດຫຼັງເກີດຢູ່ສຸກສາລາ (ຢູ່ບ້ານ)</u>***

**ນ. ນົກ:** ໂອ່ຍ.......... ໂອ່ຍ.........ເຈັບຫົວແທ້ເດ້, ເຈັບປັ້ນທ້ອງນອ້ຍແດ່ ໂອຍ..ຕັ້ງແຕ່ເກີດລູກມານີ້ ຮູ້ສຶກອອ່ນເພຍຄືທໍລະມານແທ້ເດ້ນໍ້...

**ທ. ລີງ:** ແມ່ແອນ້ອຍ ແມ່ນເຈົ້າຈົ່ມອີ່ຫຍັງເກາະ! ເອີ... ເຈົ້າກໍ່ເກີດລູກມາຢູ່ເຮືອນກະດົນແລ້ວ ເຈົ້າໄປເຮັດວຽກຄືເພິ່ນກະໄດ້ແລ້ວຕີ... ເບິ່ງຄົນອື່ນແດ່ເພິ່ນພາກັນໄປໄຮ່ໄປສວນໝົດແລ້ວ

**ນ.ນົກ:** ເອີ...ມັນກໍ່ແມ່ນພໍ່ແອນ້ອຍເອີ້ຍ...ແຕ່ຄົນອື່ນເຂົາກໍ່ບໍ່ແມ່ນແມ່ລູກອ່ອນຄືເຮົາ ຈະທຽບໃສ່ເຂົາກະບໍ່ຖືກ ນ້ອງຍັງຮູ້ສຶກເມື່ອຍ ບໍ່ມີແຮງຈະເຮັດວຽກໜັກເທື່ອ ໃຫ້ນ້ອງພັກຜ່ອນຈັກ 3 ອາທິດກອ່ນຈຶ່ງຈະໄປ.

**ທ.ລີງ:** ເຈົ້າກະພັກໄດ້ 2-3ມື້ ແລ້ວເດ... ຖ້າເຈົ້າພັກດົນຫຼາຍຈະມີອີ່ຫຍັງກິນຄືເພິ່ນ... ຕອນແລງໄປເກັບຜັກຢູ່ສວນພຸ້ນເດີ້ ແລະ ໄປຕັດຟືນພ້ອມ.

**ນ.ນິກ:** ຈັກໜ້ອຍ ຂ້ອຍອາບນ້ຳໃຫ້ລູກແລ້ວຈຶ່ງຈະໄປດອກ.

➢ ***<u>ສາກທີ 3 : ຄອບຄົວທ້າວໄກ່ ຫຼັງເກີດລູກໄດ້ 6 ອາທິດ (ຢູ່ບ້ານ)</u>***

**ນ. ເປັດ:** ແມ່ເອີ້ຍ... ລູກໄດ້ຍິນຄົນອື່ນ ແລະ ຄົນເຖົ້າເຂົາມັກຈົ່ມວ່າເກີດລູກມາໄດ້ໜຶ່ງອາທິດມັກເຈັບຫົວ, ເຕົ້ານົມແດງ ແລະ ໃຄ່ບວມ ບາງຄົນຈົ່ມວ່າມີເລືອດໄຫຼທາງຊ່ອງຄອດແດ່ ເຮົາເກີດລູກມາໄດ້ 6 ອາທິດລະ ກໍ່ບໍ່ເຫັນຈະເປັນຄືຄົນອື່ນເຂົາເວົ້າ.

**ນ.ເຫັດບີ:** ດີແລ້ວລູກເອີ້ຍ...ທີ່ບໍ່ເຈັບບໍ່ເປັນນາ..ເປັນໂຊກລາບອັນປະເສີດແລ້ວ... ທີ່ໄດ້ລູກເຂີຍໄກ່... ມາເປັນຜົວເຈົ້ານາ... ລາວຮູ້ຈັກພາລູກພາເມຍໄປຝາກທ້ອງ, ໄປເກີດລູກຢູ່ໂຮງໝໍ ແລະ ຍັງພາໄປກວດຫຼັງເກີດອີກ.

**ນ. ເປັດ:** ໂອ່ຍ... ອີ່ແມ່ກະຍ້ອງແຕ່ລູກເຂີຍຫັ້ນ ເອົາ ອີ່ແມ່..ເອົາຫຼານແດ່..ລູກຈະໄປຊ່ວຍ ອ້າຍ ໄກ່ແຕ່ງກິນ ອ້າຍໄກ່ ອ້າຍໄກ່ ເຈົ້າແຕ່ງຫຍັງກິນ?

**ທ.ໄກ່:** ຂ້ອຍຕຳແຈ່ວໝາກກອກ (ໂປ໊ກ......) ແລະ ຕົ້ມໄກ່...

**ນ.ເປັດ:** ຄືມາເປັນຕາແຊບແທ້ເດ ມີຫຍັງໃຫ້ຊ່ວຍບໍ່?

**ທ.ໄກ່:** ບໍ່ມີຫຍັງດອກ ໄປຖ້າຢູ່ພຸ້ນ ຂ້ອຍແຕ່ງແລ້ວ ຈະຫ້າງພາເຂົ້າໄປໃຫ້ກິນເດີ້. ເອີແມ່ອີ່ນາງເຈົ້າເຂົ້າໄປໃນສ້ວມນອນ ແລ້ວເບິ່ງປື້ມຕິດຕາມເຈົ້າ ແລະ ລູກ ວ່າຮອດມື້ເພິ່ນນັດໄປກວດແລ້ວບໍ່?

**ນ.ເປັດ:** ໂດຍໆ...ຍ່າງ (ຕ໋ອກ....) ໂອ... ພໍ່ອີ່ນາງ ພໍດີແມ່ນມື້ນີ້ລະເດ້ມື້ສຸດທ້າຍ ທີ່ເພິ່ນນັດເຮົາໄປກວດ

**ທ.ໄກ່:** ໂອ້... ແມ່ນບໍ່...ມາໆ... ກິນເຂົ້າແລ້ວຈຶ່ງໄປ ຢ້ານຝົນຕົກ.

➢ ***<u>ສາກທີ 4: ຄອບຄົວໄວຣັດ ຫຼັງເກີດລູກໄດ້ 6 ມື້ (ຢູ່ບ້ານ)</u>***

**ນາງ ນິກ:** ອ້າຍລີງ... ຂອ້ຍຮູ້ສຶກວ່າມີນ້ຳຫຍັງກະບໍ່ຮູ້ອອກທາງຊອງຄອດ ແລະ ມີກິ່ນເໝັນໆອີກແຖມ ວິນຫົວ ແດ່, ຫາຍໃຈແນວໃດກໍບໍ່ອີ່ມບໍ່ເຕັມຈັກເທື່ອ... ແລະ ຫາຍໃຈຍາກ ອ້າຍລີງ ເອີ່ຍ... ພາຂ້ອຍໄປກວດແດ່ເຖາະ...

**ທ.ລີງ:** ເຈົ້າໄປນັ່ງໃສ່ນ້ຳມາຕີເບາະ! ວິນຫົວ ຫັ້ນກິນຢາໃສ່ລະຫວາ?

**ນ.ນິກ:** ຂ້ອຍກິນຢາໃສ່ແລ້ວ... ແຕ່ບໍ່ຮູ້ສຶກດີຂຶ້ນມາເລີຍ... ພໍ່ມັນເອີຍພາຂ້ອຍໄປໂຮງໝໍສາ... ຂ້ອຍເຈັບຈົນຈະອົດບໍ່ໄຫວແລ້ວ.

**ທ.ລີງ:** ກິນຢາພື້ນເມືອງໃສ່ອີກດູ... ບາງທີມັນອາດຈະດີຂຶ້ນ.

**ນາງ ນິກ:** ບໍ່ດີຂຶ້ນເລີຍ.. ອ້າຍເອີຍ.

**<u>ທ້າວໄກ່ ຍ່າງມາເຮືອນ ທ້າວລີງ</u>**

**ທ ໄກ່:** ລີງໆລີ້ງເອີຍ....ຢູ່ຮືອນບໍ **?**

**ທ.ລີງ:** ຢູ່ໆໆ... ຂຶ້ນມາຫຼິ້ນເຮືອນແມ້... ແມ່ເດັກນ້ອຍເຂົາບໍ່ສະບາຍ ເຈັບຫົວ, ວິນຫົວ, ມີ ເລືອດໄຫຼແດ່ ກິນຢາໃສ່ຫຼາຍແລ້ວບໍ່ດີຂຶ້ນເລີຍ... ຈັກເປັນຫຍັງກະບໍ່ຮູ້..

**ທ ໄກ່:** ໂອ... ແມ່ນຫວາເປັນຫຍັງວ່າເປັນແນວນັ້ນ... ຢ່າໃຫ້ເມຍເຮັດວຽກໜັກແມ້...ເມຍຫາກະເກີດລູກເກີດເຕົ້າ... ບໍ່ໄດ້ພັກຜ່ອນກໍ່ມີອາການເຈັບເປັນແບບນີ້ຫັ້ນລະ... ເບິ່ງຄອບຄົວເຮົາແມ້ ເຮົາບໍ່ເຄີຍໃຫ້ເມຍເຮັດວຽກໜັກ... ຫຼັງເກີດລູກໃໝ່ໆ... ເມຍເຮົາຕ້ອງພັກຜ່ອນ, ພາໄປກວດຫຼັງເກີດເລື້ອຍໆ ເມຍເຮົາຈຶ່ງບໍ່ເຈັບເປັນ.. ສຸຂະພາບແຂງແຮງ, ເຈົ້າເດ້ພາເມຍໄປກວດຢູ່ໂຮງໝໍແລ້ວຫວາ? ຕັ້ງແຕ່ເກີດລູກມາຫັ້ນ?

**ທ້າວ ລີງ:** ບໍ່ໄດ້ພາໄປເລີຍ ສ່ວນຫຼາຍກໍ່ຄາວຽກໄຮ່, ວຽກສວນ ເມຍຊໍ້າພັດມາເຈັບມາເປັນແບບນີ້ຈະໄປຊອກຫາກິນໃສກະບໍ່ໄດ້ ເງິນກໍ່ບໍ່ມີ ບໍ່ຮູ້ຈະໄປຂໍຢືມນຳຜູ້ໃດ

**ທ ໄກ່:** ບໍ່ໄດ້...ບໍ່ໄດ້... ບໍ່ໄດ້... ຖ້າເປັນແບບນີ້ເມຍເຈົ້າອາດຕາຍໄດ້... ພາລາວໄປໂຮງໝໍໂລດ, ເບິ່ງໜ້າຕາຂອງເມຍເຈົ້າ..ເຫຼືອງໝົດແລ້ວ.

**ທ. ລີງ:** ຂ້ອຍກະຢາກພາໄປຢູ່ ແຕ່ຂ້ອຍບໍ່ມີເງິນ, ບໍ່ມີລົດ ຈະໄປຢືມໃຜ?

**ທ້າວໄກ່:** ໄປປຶກສານຳນາຍບ້ານເພິ່ນເບິ່ງແມ້... ລົດຫັ້ນ... ເພິ່ນມີສັນຍາລົດທີເຮັດໄວ້ຢູ່ບ້ານ, ເງິນກໍ່ໄປຢືມນຳຫົວໜ້າແມ່ຍິງ, ເພິ່ນມີເງິນກອງທຶນສຸກເສີນໃຫ້ຢືມ, ຂ້ອຍກໍ່ໄປຢືມຊ່ວງຈຳເປັນ.

**ທ້າວ ລີງ :** ຂອບໃຈເດີ້...ທີ່ມາບອກ, ຂ້ອຍຈະໄປປຶກສານຳ ຄສບ ເພິ່ນກ່ອນ.

**ທ້າວໄກ່ :** ໄປໂລດໆ... ຂ້ອຍຈະເບິ່ງທາງນີ້ໃຫ້.

- ***<u>ສາກທີ 5: (ຢູ່ເຮືອນນາຍບ້ານ)</u>***

**ທ້າວລີງ :** ນາຍບ້ານໆ... ຢູ່ບໍ່...ນາຍບ້ານ..

**ທ້າວ ຈອມໄຊ່:** ຢູ່ໆໆ...ມີຫຍັງລີງ...

**ທ້າວ ລີງ :** ນ້ອງຈະມາຂໍຢືມລົດໄປສົ່ງເມຍຢູ່ໂຮງໝໍ...ເມຍນ້ອງລາວເຈັບຫົວແຮງ, ຫາຍໃຈບໍ່ອອກ, ມີນໍ້າໄຫຼອອກມາຈາກຊ່ອງຄອດ**...**

**ທ້າວ ຈອມໄຊ່:** ແມ່ນຫວາ... ໄດ້ໆໆໆ... ໄປຮ້ອງນາງອຽນແດ່ລາວກໍ່ເປັນ ຄສບ ມີຫຍັງກະຊ່ວຍກັນເລີຍໃຫ້ໄປເບິ່ງນຳກັນ (ສຽງລົດ.....ໄປຮັບນາງອຽນ)

**ທ້າວ ຈອມໄຊ່:** ອຽນ ອຽນ ອຽນ ....

**ນາງ ອຽນ:** ມີຫຍັງນາຍບ້ານ ມີຫຍັງ ບໍ່?

**ທ້າວ ຈອມໄຊ່:** ພວກຂ້ອຍຈະມາຮັບເຈົ້າ, ໄປເບິ່ງເມຍທ້າວລີງ ເມຍລາວເຈັບ... ຈະພາລາວໄປໂຮງໝໍຂຶ້ນມາໄວໆ.

**ນາງ ອຽນ :** ເຈົ້າໆໆໆ ....(ແລ່ນຂຶ້ນລົດ)

- ***<u>ສາກທີ 6: (ຢູ່ເຮືອນຄອບຄົວໄວຮັດ)</u>***

**ນ.ເປັດ:** ໂອ້ຍ ວິນຫົວແຮງເດ້ ປານໃດ ອ້າຍລີງຈະມາເບາະ ອ້າຍໄກ່

**ທ້າວໄກ່:** ກະຍັງວ່າຄືດີນແທ້ ...ໂອ... ຫັ້ນເດ້....ມາຫັ້ນເດ້....

**ທ້າວລີງ:** ມາໆໆໆໆ.... ຍົກລາວຂຶ້ນລົດ...ອີບໆໆໆ

➢ ***<u>ສາກທີ 7 ມາໂຮງໝໍ</u>***

**ນ . ດອກໄມ້:** ເຈົ້າສະບາຍດີ... ມີຫຍັງໃຫ້ນ້ອງຊ່ວຍບໍ່ຄືມາກັນຫຼາຍຄົນແທ້

**ທ້າວລີງ:** ຊ່ວຍເມຍຂ້ອຍແດ່... ເມຍຂ້ອຍລາວຫາຍໃຈບໍ່ອອກ

**ນ ດອກໄມ້:** ເຊີນໆ... ເຂົ້າໄປຫ້ອງກວດເລີຍ.

➢ ***<u>ສາກທີ 8 ຢູ່ໂຮງໝໍ</u>***

**ທ້າວລີງ:** ໂອ້ຍ ເຂົ້າໄປເປັນຊົ່ວໂມງແລ້ວ ຄືຍັງບໍ່ອອກມາຈາກຫ້ອງກວດປານນີ້ ?

**ນາງ ດອກໄມ້:** ໃຜເປັນຜົວ ນາງ ເປັດ ...ຂໍລົມນຳແດ່ເດີ້...

**ທ້າວ ລີງ:** ອ້າຍໆ.... ລາວເປັນຈັ່ງໃດໝໍ, ອາການດີຂຶ້ນແລ້ວຫວາ? ..

**ນ ດອກໄມ້:** ແມ່ນແລ້ວ.... ປອດໄພແລ້ວ... ຖ້າອ້າຍບໍ່ພາມາໂຮງໝໍໄວ... ອາການຂອງເອື້ອຍເພິ່ນອາດຈະຮຸນແຮງເຖິງກັບເສຍຊີວິດໄດ້... ຕໍ່ໄປອ້າຍຄວນພາເມຍມາກວດຫຼັງເກີດແດ່... ເພື່ອຕິດຕາມອາການ ແລະ ບາດແຜຂອງລາວ...ບໍ່ຄວນໃຫ້ເມຍເຮັດວຽກໜັກ, ໃຫ້ພັກຜ່ອນພຽງພໍ,

ກິນອາຫານທີ່ມີທາດບຳລຸງເຊັ່ນ: ກິນຊີ້ນ, ກິນປາ, ກິນຜັກ, ກິນໝາກໄມ້... ທີ່ສຳຄັນ ເນາະອ້າຍ...ຢ່າງໜ້ອຍສຸດ 40-45 ມື້ ຫຼັງເກີດລູກ, ອ້າຍຈຶ່ງສາມາດຮ່ວມເພດກັບເມຍ ອ້າຍໄດ້ເດີ້... ເພື່ອໃຫ້ຮ່າງກາຍຂອງເມຍອ້າຍແຂງແຮງ,

**ທ້າວລີງ:** ເຈົ້າໆໆໆ... ຕໍ່ໄປອ້າຍຈະດູແລເມຍຕາມຄຳແນະນຳຂອງທ່ານໝໍ ຂອບໃຈເດີ້...

**ສຸຂະພາບທີ່ດີຂອງແມ່ ແລະ ເດັກເປັນໜ້າທີ່ຂອງໝົດທຸກຄົນ**

**<u>ຄຳຖາມ</u>**

1. ທ້າວໄກ່ເອົາໃຈໃສ່ເມຍແບບໃດ? ເປັນຫຍັງຄອບຄົວຂອງທ້າວໄກ່ຈຶ່ງມີສຸຂະພາບດີ?
2. ນາງນົກລາວເປັນຫຍັງຈຶ່ງມີອາການເຈັບເປັນ? ຜົວຂອງລາວໄດ້ເອົາໃຈໃສ່ລາວບໍ່?
3. ໃຜເປັນຄົນມາແນະນຳໃຫ້ທ້າວລີງພາເມຍໄປໂຮງໝໍ?ມີໃຜແດ່ ໃຫ້ຄວາມຊ່ວຍເຫຼືອຄອບຄົວ ຂອງນາງນົກ? ທ້າວລີງໄປເອົາເງິນ ແລະ ລົດນຳໃຜ? ຖ້ານາງນົກບໍ່ໄປໂຮງໝໍທັນລາວຈະເປັນແບບໃດ?
4. ໝໍໄດ້ແນະນຳວ່າສາມາດມີເພດສຳພັນກັບເມຍຈັກມື້ຫຼັງເກີດ? ຍ້ອນຫັຍງ?

**ການດູແລເດັກເກີດໃໝ່**
**ບົດລະຄອນ 4: ພໍ່ປ່ຽນເພື່ອລູກ**

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ |
| --- | --- |
| 1. ທ. ຈັກ (ຄອບຄົວ 1)<br>2. ນ. ຈຳປີ (ຄອບຄົວ 1)<br>3. ທ. ຊົມ (ຄອບຄົວ 2)<br>4. ນ. ປາອໍ (ຄອບຄົວ 2)<br>5. ທ. ຈີລິກ (ນາຍບ້ານ)<br>6. ນ. ດອກຮັກ (ຫົວໜ້າສະຫະພັນແມ່ຍິງ) | 1. ຜ້າສາກ (ພາບເບື້ອງຫຼັງ) 2,5 X 4m 1 ຜືນ<br>2. ເຊືອກສຳລັບມັດຜ້າສາກ 20 ແມັດ<br>3. ເຄື່ອງນຸ່ງສຳລັບນັກສະແດງ 7 ຊຸດ<br>4. ຕຸກກະຕາເດັກເກີດໃໝ່ 2 ໂຕ<br>5. ຜ້າອ້ອມ 2 ຜືນ<br>6. ກ້ອງນົມ 1 ກ້ອງ<br>7. ຈັກໄຟຟ້າ 1 ອັນ<br>8. ຕູ້ລຳໂພງ 1 ອັນ<br>9. ຄອມພິວເຕີ 1 ເຄື່ອງ<br>10. ກະຕ່າເຄື່ອງນ້ອຍ 1 ອັນ<br>11. ສະລິບໃໝ່ 1 ຜືນ<br>12. ຂອງຂັວນສຳລັບການ ຖາມ - ຕອບ ຄຳຖາມ<br>- ຜ້າເຊັດນ້ອຍ 10 ຜືນ<br>- ສະບູ 10 ກ້ອນ |

## ບົດເລື່ອງໂດຍຫຍໍ້

ໃນບ້ານແຫ່ງໜຶ່ງ ມີ 2 ຄອບຄົວທີ່ຫາກໍ່ເກີດລູກໃໝ່, ຄອບຄົວທີ 1 ໄດ້ໄປເກີດລູກຢູ່ສຸກສາລາ ເຊິ່ງເປັນ ແພດສຸກສາລາຊ່ວຍເກີດໃຫ້ ແມ່ ແລະ ເດັກມີສຸຂະພາບສົມບູນແຂງແຮງ ຫຼັງຈາກກັບມາບ້ານຜົວກໍ່ໄດ້ເອົາໃຈໃສ່ເບິ່ງແຍງດູແລລູກເມຍເປັນຢ່າງດີ ແລະ ຊ່ວຍວຽກເມຍໃນໄລຍະລູກຍັງນ້ອຍ. ສ່ວນຄອບຄົວທີ 2 ເກີດລູກຢູ່ບ້ານໂດຍມີຄົນເຖົ້າຢູ່ບ້ານຊ່ວຍເກີດເຮັດໃຫ້ ເດັກບໍ່ແຂງແຮງ, ຂີ້ໄຫ້ ແລະ ເຈັບເປັນຕະຫຼອດ, ແມ່ບໍ່ມີເວລາ ລ້ຽງລູກເພາະມີວຽກຫຼາຍ, ຜົວກໍ່ບໍ່ຄ່ອຍເອົາໃຈໃສ່ຊ່ວຍລ້ຽງລູກ ຫຼື ຊ່ວຍວຽກເຮືອນເລີຍ.

ມື້ໜຶ່ງ ນາຍບ້ານ ແລະ ຄສບ ໄດ້ເອີ້ນປະຊຸມບ້ານ ເຜີຍແຜ່ວຽກງານແມ່ ແລະ ເດັກ ໂດຍສະເພາະແມ່ນການ ດູແລເດັກເກີດໃໝ່ ແລະ ເຂົ້າເຖິງສະຖານທີ່ບໍລິການ

ແມ່ຄອບຄົວທີ 2 ມີຄວາມສົນໃຈຢາກຮູ້ວ່າເປັນຫຍັງລູກຕົນຈຶ່ງບໍ່ສະບາຍຕະຫຼອດ ຈຶ່ງໄດ້ໄປຖາມແມ່ຄອບຄົວທີ 1 ລາວຈຶ່ງໄດ້ອະທິບາຍໃຫ້ຟັງວ່າ ຕົນໄດ້ໄປເກີດລູກຢູ່ສຸກສາລາ ແມ່ ແລະ ເດັກ ໄດ້ຮັບການສັກຢາວັກແຊັງ, ເດັກໄດ້ກິນ ຫົວນ້ຳນົມເຫຼືອງ, ເດັກກິນນົມແມ່ພາຍໃນ 1 ຊົ່ວໂມງ ແລະ ໝໍຍັງໄດ້ໃຫ້ຄຳແນະນຳໃນການ ດູແລເດັກເຊັ່ນ: ໃຫ້ລູກກິນນົມແມ່ພຽງຢ່າງດຽວຕັ້ງແຕ່ມື້ເກີດຈົນຮອດ 6 ເດືອນ, ໃຫ້ເດັກກິນນົມແມ່ຢ່າງໜ້ອຍ 8 ເທື່ອ/ມື້ ຫຼືຕາມຄວາມຕ້ອງການຂອງເດັກ, ຮັກສາສາຍບືໃຫ້ແຫ້ງ, ນຸ່ງເຄື່ອງອຸ່ນໃຫ້ລູກສະເໝີ, ຮັກສາຄວາມ ສະອາດຮ່າງກາຍ, ລ້າງມື ແລະ ລ້າງເຕົ້ານົມທຸກຄັ້ງກ່ອນເອົານົມໃຫ້ລູກກິນ ຖ້າລູກຫາກເຈັບເປັນຕ້ອງ ພາໄປຫາໝໍຢູ່ສຸກສາລາ ຫຼື ໂຮງໝໍເມືອງທັນທີ.

ຫຼັງຈາກນັ້ນ ລາວຈຶ່ງໄດ້ໄປປຶກສາກັບຜົວລາວ ເລື່ອງຈະພາລູກໄປໂຮງໝໍ ແຕ່ຜົວກໍ່ຍັງບໍ່ສົນໃຈ ລາວຈຶ່ງໄປປຶກສາກັບ ຄສບ ເພື່ອຫາວິທີທາງແກ້ໄຂ ດັ່ງນັ້ນ ຄສບ ຈຶ່ງໄດ້ໃຫ້ຄຳແນະນຳແກ່ ນ. ປາອໍ ເພື່ອໄປໂອ້ລົມກັບເປັນຜົວໃຫ້

ເຂົ້າໃຈ ຈາກນັ້ນ ຜົວຂອງລາວຈຶ່ງຍອມຮັບ ແລະ ຮັບປາກວ່າຈະປ່ຽນແປງຕົວເອງເອົາໃຈໃສ່ລູກເມຍ ແລະ ເຮັດວຽກ ຊ່ວຍຫຼາຍຂຶ້ນ.

**<u>ສາກທີ 1: ຄອບຄົວທີ 1 ພາເມຍໄປເກີດລູກຢູ່ສຸກສາລາ</u>**

- **ນ. ຈໍາປີ:** ໂອ່ຍ.......... ໂອ່ຍ......... ເຈັບທ້ອງເດ່ ອ້າຍ ຈັກ ຊ່ວຍຂ້ອຍແດ່ ຂ້ອຍເຈັບທ້ອງ
- **ທ. ຈັກ:** ຫ໊ະ !! ເຈັບທ້ອງຈະເກີດລູກລະຕີນີ ?? ອ້າຍ ຈີລີກ, ເອື້ອຍ ດອກຮັກ ຊ່ວຍແດ່ເມຍຂ້ອຍເຈັບທ້ອງຈະເກີດລູກແລ້ວ ຈະພາເມຍໄປເກີດລູກຢູ່ສຸກສາລາ
- **ທ. ຈີລີກ ແລະ ນ. ດອກຮັກ:** ອ່າວ !! ຈະເກີດແຫລະ ?? ຄືວ່າໝໍວ່ານັດອີກ 3 ມື້ ດີແຕ່ມີທີ່ເຮັດສັນຍາເພື່ອຊ່ວຍສຸກເສີນໄວ້ ໄປໆ ຂ້ຽວໄປ (ສຽງລົດແຕ໊ກໆປະກອບ)

**<u>ສາກທີ 2: ຄອບຄົວທີ 2 ເກີດລູກຢູ່ເຮືອນ</u>**

- **ນ. ປາອໍ:** ໂອ່ຍ.......... ໂອ່ຍ......... ເຈັບທ້ອງເດ່ ອ້າຍ ຊີມ ຊ່ວຍຂ້ອຍແດ່ ຂ້ອຍເຈັບທ້ອງ ໄປເອີ້ນອີ່ແມ່ມາເບິ່ງຂ້ອຍແດ່
- **ທ. ຊີມ:** ເອີໆ ດ່ຽວຂ້ອຍຈະໄປເອີ້ນອີ່ແມ່ມາເບິ່ງກ່ອນ ແມ່ ແມ່ເອີ່ຍ ມາເບິ່ງເມຍລູກແດ່ ເມຍລູກລາວຈະເກີດລູກແລ້ວ ຊ່ວຍແດ່
- **ແມ່ເຖົ້າ:** ໂອ່........... ຈະເກີດລະຕີນີ ?? ໃສເບິ່ງດູ ໂອ່ !! ຫົວຈະອອກແລ້ວ ອ່າວ!! ເບັ່ງເດີ ............ ອື............
- **ນ. ປາອໍ**: ອື.......... ອື........................... (ສຽງເດັກນ້ອຍໄຫ້ປະກອບ)
- **ແມ່ເຖົ້າ:** ໂອ່ ເກີດມາແລ້ວ ເປັນຜູ້ຍິງ ຕຸ້ຍງາມຄືແມ່ເຖົ້າເລີຍ 5555, ນໍ້ານົມເຫຼືອງຫັ້ນບີບຖິ້ມກ່ອນເດີຈັກໜ່ອຍລູກຈະເຈັບທ້ອງ, (ສຽງເດັກນ້ອຍໄຫ້ປະກອບ) ໄປໆ ໄປນອນພັກຢູ່ໃນຫ້ອງສາ (ທຸກຄົນຍ່າງອອກໄປ)

**<u>ສາກທີ 3: ຄອບຄົວທີ 1 ຫຼັງເກີດລູກໄດ້ 3 ເດືອນ ຢູ່ເຮືອນ</u>**

- **ນ. ຈໍາປີ:** ແພງ....... ລູກອີແມ່ນະ ໜ້າຮັກຕາຊັງແທ້ ກິນນົມອີ່ມລະກະນອນ ເບິ່ງແມະ !! ໜ້າຮັກເບາະ ?? ເກີດລູກມາກະ 3 ເດືອນລະ ລູກກະຕຸ້ຍໆບໍເຈັບບໍ່ເປັນຈັກເທື່ອ
- **ທ. ຈັກ:** ແມ່ນາງນ້ອຍເຈົ້າເວົ້າອີຫຍັງຜູ້ດຽວ ??
- **ນ. ຈໍາປີ:** ໂອ່ຍ... ບໍ່ໄດ້ເວົ້າຫຍັງດອກພໍ່ນາງນ້ອຍ ເວົ້າອີນາງນ້ອຍມັນຕຸ້ຍພີດີງາມ ບໍ່ເຈັບບໍ່ເປັນຈັກເທື່ອ ແມ່ນເຈົ້າໄປໃສມາຫັ້ນ ??
- **ທ. ຈັກ:** ຂ້ອຍໄປໄຮ່ (ໄປນາ), ໄປສວນມາ ນີ້ຂ້ອຍເກັບຜັກຢູ່ສວນມາແດ່ບັກຫຼາຍໆ ດຽວຂ້ອຍຈະໄປເກືອໝູເກືອເປັດເກືອໄກ່ ແລ້ວຈະເອົາເຄື່ອງເຈົ້າກັບລູກໄປຊັກກ່ອນ ລະຈະຊ່ວຍເຈົ້າແຕ່ງກິນເດົ້
- **ນ. ຈໍາປີ:** ໂດຍ ພໍ່ນາງນ້ອຍ ມາໄວໆເດົ້ ດ່ຽວຂ້ອຍຈະສ້ອມຜັກຖ້າ

❖ **<u>ສາກທີ 4: ຄອບຄົວທີ 2 ຫຼັງເກີດລູກໄດ້ 3 ເດືອນຢູ່ເຮືອນ</u>**

- **ນ. ປາອໍ:** (ສຽງເດັກນ້ອຍໄຫ້ປະກອບ) ໂອ່ແພງ........ ລູກເອີ່ຍ !! ເຈົ້າຄືວ່າມາເຈັບມາເປັນຕະຫຼອດແທ້ເດ່ ອີຕົບເຈົ້າເດ່...... ອ້າຍ ຊີມ ເອີ່ຍ !! ອ້າຍ ຊີມ ມາຊ່ວຍຂ້ອຍເອົາລູກ ຈັກລູກເປັນຫຍັງບໍ່ຮູ້ໄຫ້ບໍ່ເຊົາຈັກເທື່ອ
- **ທ. ຊີມ:** ໂອ່ຍ ບໍ່ເປັນຫຍັງດອກ ເດັກນ້ອຍມັນກະຂີ້ໄຫ້ເປັນທຳມະດາ
- **ນ. ປາອໍ:** ມັນບໍ່ທຳມະດາແລ້ວອ້າຍເອີ່ຍ..... ມື້ວານນີ້ໄປຫາໝໍເຢົາເບິ່ງໃຫ້ເພິ່ນວ່າຜິດຜີ ດຽວນີ້ເພິ່ນບອກໃຫ້ເອົາໝູປົວ ເຮົາຈິໄດ້ເອົາໝູນ້ອຍເຮົາມາຂ້າໄດ່ອ້າຍຊີມ
- **ທ. ຊີມ:** ໂອ່ຍເນາະ ຈະໄດ້ເສຍໝູອີກລະ ເທື່ອເລ່ວກໍ່ຫາກະຂ້າເປັດ ໄປ 3 ໂຕ, ໄກ່ອີກ 7 ໂຕ, ໝູກໍ່ໝົດ 2 ໂຕລະ ຍັງແຕ່ໝູນ້ອຍໂຕດຽວກໍ່ຈະໄດ້ຂ້າມັນຊ້ຳເນາະ ຕັ້ງແຕ່ມີລູກມານີ້ໝົດເງິນໝົດຄຳນຳຫຼາຍລະເດ້
- **ນ. ປາອໍ:** ເຮັດແນວໃດໄດ້ ລູກກໍ່ໄຫ້ຕະຫຼອດປົວຈັ່ງໃດກະບໍ່ດີຈັກເທື່ອ ເຈົ້າກໍ່ບໍ່ຕ້ອງໄປເລາະກິນແຕ່ເຫຼົ້າຫຼາຍ ມີເວລາກໍ່ຊ່ວຍຂ້ອຍເອົາລູກເຮັດວຽກຢ້າວວຽກເຮືອນຊ່ວຍແດ່
- **ທ. ຊີມ:** ເຈົ້າບໍ່ຕ້ອງມາເວົ້າ ອັນນີ້ມັນເປັນເລື່ອງທຳມະດາຂອງຜູ້ຊາຍ ເອົາລູກເຮັດວຽກຢ້າວການເຮືອນແມ່ນວຽກຂອງຜູ້ຍິງເຈົ້າກະເຮັດໄປໂລດ ເບິ່ງລູກຫັ້ນຄືງບັກເປື້ອນໆ ກໍ່ບໍ່ອາບບໍ່ລ້າງໃຫ້ລູກ ຮຶມ...... ເວົ້າມາລະສິ້ມສົບໄປຊອກສັງສັນນຳສຽວກ່ອນ
- **ນ. ປາອໍ:** ອ້າຍຊີມ...... ອ້າຍຊີມ ເຈົ້າຈະໄປໃສ ? ມັນຈະຄ່ຳແລ້ວນິ ເຈົ້າຫາກໍ່ໄປມາໝົດມື້ຈະອອກໄປອີກລະຫວາ ອ້າຍຊີມ.........

❖ <u>ສາກທີ 5: ລວມບ້ານ</u>

- **ທ. ຈິລີກ (ນາຍບ້ານ):** (ປະກາດໂທລະໂຄ່ງ) ສະບາຍດີ ພໍ່ແມ່ພີ່ນ້ອງ ກິນເຂົ້າກິນນ້ຳແລ້ວພາກັນມາລວມແດ່ເດີ...... ລວມເດີ ລ່ວມເດີ........ (ແລ້ວທຸກຄົນຍ່າງເຂົ້າສາກ)
- **ທ. ຈິລີກ:** ສະບາຍດີພໍ່ແມ່ພີ່ນ້ອງໝົດທຸກຄົນ ພາກັນມາຄົບໝົດລະຕິ ??
- **ຊາວບ້ານ:** ຄົບ............ (ສຽງເດັກນ້ອຍໄຫ້)
- **ທ. ຈິລີກ:** ທີ່ເອີ້ນທຸກຄົນມາລວມໃນມື້ນີ້ແມ່ນທາງ ຄສບ ເຮົາຈະໄດ້ມາເຜີຍແຜ່ກ່ຽວກັບການເບິ່ງແຍງດູແລເດັກເກີດໃໝ່ ຕໍ່ໄປແມ່ນໃຫ້ ນ. ອ່ອນ ຫົວໜ້າສະຫະພັນບ້ານເຮົາ ເປັນຜູ້ເວົ້າໃຫ້ຟັງເນາະ
- **ນ. ດອກຮັກ:** ສະບາຍດີ ໝົດທຸກຄົນ ຖ້າຜູ້ໃດຖືພາຈະເກີດລູກແມ່ນໄປເກີດລູກຢູ່ສຸກສາລາ ຫຼື ໂຮງໝໍເມືອງ ແມ່ ແລະ ລູກຈະປອດໄພ ເພາະມີທ່ານ ໝໍ ທີ່ຊ່ຽວຊານເພິ່ນເກີດໃຫ້ ແລະ ຫາກເຈັບເປັນຕ້ອງພາໄປຫາໝໍຢູ່ສຸກສາລາ ຫຼື ໂຮງໝໍເມືອງທັນທີ.
- **ນ. ປາອໍ:** ເອື້ອຍ ດອກຮັກ ຂໍຖາມແດ່ຈັກເປັນຫຍັງຫຸ ລູກຂ້ອຍລາວຂີ້ໄຫ້ເອົາແທ້ເອົາວ່າ ມັກເຈັບຕະຫຼອດ ເອົານົມໃຫ້ກິນກໍ່ບໍ່ກິນ ມີແຕ່ຫຍ້ຳເຂົ້າໃຫ້ກິນຈິ່ງກິນໜ້ອຍໜຶ່ງ ນົມເສີມກໍ່ຊື້ໃຫ້ກິນກໍ່ຍັງບໍ່ຕຸ້ຍ  (ສຽງເດັກນ້ອຍໄຫ້)
- **ນ. ດອກຮັກ:** ເຈົ້າໄປເກີດລູກຢູ່ໃສ ? ລູກເຈົ້າໄດ້ກິນນ້ຳນົມເຫຼືອງບໍ ? ລູກເຈົ້າໄດ້ຮັບການສັກຢາກັນພະຍາດແລ້ວບໍ ?
- **ນ. ປາອໍ:** ຕອນເກີດຂ້ອຍກໍ່ເກີດຢູ່ບ້ານ, ນ້ຳນົມເຫຼືອງກໍ່ບໍ່ໄດ້ກິນ ຂ້ອຍບີບຖິ້ມເພາະແມ່ຍ່າບອກວ່າໃຫ້ລູກກິນແລ້ວລູກຈະເຈັບທ້ອງ, ຢາກໍ່ບໍ່ໄດ້ສັກຈັກເທື່ອ ຂ້ອຍກໍ່ລ້ຽງຕາມມີຕາມເກີດນີ້ແຫຼະ
- **ນ. ດອກຮັກ:** ໂອ່ສິມພໍວ່າແຫລະ ເບິ່ງລູກ ທ. ຈັກ ກັບ ນ. ຈຳປີ ແນະຕຸ້ພິດງາມເອົາແທ້ເອົາວ່າ ນ. ເຈຶ່ຍເຈົ້າເຮັດແນວໃດລູກເຈົ້າຄືແຂງແຮງແທ້ ບໍ່ເຈັບບໍ່ເປັນຈັກເທື່ອ ? ເວົ້າໃຫ້ ນ. ປາອໍ ເພິ່ນຟັງແດ່ດຸ

- **ທ. ຈັກ:** ຂ້ອຍກໍ່ບໍ່ໄດ້ເຮັດຫຍັງຫຼາຍ ຕອນເກີດຂ້ອຍກໍ່ພາເມຍໄປເກີດຢູ່ສຸກສາລາ ທ່ານໝໍເພິ່ນຊ່ວຍເກີດໃຫ້ ຫຼັງຈາກເກີດແລ້ວເພິ່ນກໍ່ເອົາລູກມາກິນນົມ ເພິ່ນວ່າຕ້ອງກິນທັນທີຫລັງເກີດ ຫຼື ພາຍໃນ 1 ຊົ່ວໂມງໃຫ້ລູກໄດ້ກິນນໍ້ານົມເຫຼືອງຫ້າມບີບຖິ້ມເດັດຂາດເພາະມັນຈະສ້າງພູມຕ້ານທານໃຫ້ລູກເຮັດໃຫ້ລູກແຂງແຮງເພິ່ນຊັກຢາກັນພະຍາດໃຫ້ລູກອີກ ແລະ ເພິ່ນຍັງໄດ້ໃຫ້ຄໍາແນະນໍາວ່າ: ໃຫ້ລູກກິນນົມແມ່ພຽງຢ່າງດຽວຕັ້ງແຕ່ມື້ເກີດຈົນຮອດ 6 ເດືອນ, ໃຫ້ລູກກິນນົມແມ່ຢ່າງໜ້ອຍ 8 ເທື່ອ/ມື້ ຫຼື ຕາມຄວາມຕ້ອງການຂອງເດັກ, ຮັກສາສາຍບືໃຫ້ແຫ້ງ, ນຸ່ງເຄື່ອງອຸ່ນໃຫ້ລູກສະເໝີ, ຮັກສາຄວາມສະອາດຮ່າງກາຍ, ລ້າງມື ແລະ ລ້າງເຕົ້ານົມທຸກຄັ້ງກ່ອນເອົານົມໃຫ້ລູກກິນ ຖ້າລູກຫາກເຈັບເປັນຕ້ອງພາໄປຫາໝໍຢູ່ສຸກສາລາ ຫຼື ໂຮງໝໍເມືອງທັນທີ ເຮັດພຽງສໍ່ານີ້ລູກກໍ່ມີສຸຂະພາບທີ່ດີແລ້ວ
- **ນ. ດອກຮັກ:** ນ. ປາອໍ ເຈົ້າໄດ້ເບິ່ງແຍງດູແລລູກເຈົ້າແນວນີ້ບໍ ??
- **ນ. ປາອໍ:** ບໍ່ ຂ້ອຍບໍ່ເຄີຍຮູ້ມາກ່ອນເລີຍວ່າຈະຕ້ອງເຮັດແນວໃດ ເພາະຂ້ອຍກໍ່ລ້ຽງຕາມທີ່ຜູ້ເຖົ້າຜູ້ແກ່ເພິ່ນແນະນໍາມາ
- **ທ. ຈິລິກ:** ດຽວນີ້ໃຫ້ເຈົ້າກັບໄປເຮືອນແລ້ວໄປປຶກສາຜົວເຈົ້າເບິ່ງວ່າລູກເຈົ້າມັກເຈັບມັກເປັນແນວນີ້ແນວໃດກໍ່ໃຫ້ພາລູກໄປປົວຢູ່ສຸກສາລາສາ
- **ນ. ປາອໍ:** ໂດຍໆ ຂ້ອຍຈິຟ້າວໄປລົມກັບຜົວກ່ອນຊັ້ນນະ ຂອບໃຈຫຼາຍໆເດີທີ່ໃຫ້ຄໍາແນະນໍາ ໄປກ່ອນ (ສຽງເດັກນ້ອຍໄຫ້) (ນ. ດົງຍ່າງອອກໄປ)
- **ທ. ຈິລິກ:** ອ່າວ !! ຖ້າບໍ່ມີຫຍັງແລ້ວກໍ່ເລີກໄປເຮືອນໃຜເຮືອນມັນສາເດີ (ທຸກຄົນຍ່າງອອກໄປ)

❖ <u>**ສາກທີ 6: ນ. ປາອໍໄປປຶກສາຜົວຢູ່ເຮືອນ**</u>

- **ນ. ປາອໍ:** ອ້າຍ ຊິມ ເອີ່ຍ !! ມື້ກີ້ນີ້ຂ້ອຍໄປລວມບ້ານ ຄສບ ເພິ່ນບອກລູກເຮົາບໍ່ສະບາຍຍ້ອນລູກເຮົາບໍ່ໄດ້ສັກຢາວັກແຊັງ, ບໍ່ໄດ້ກິນນໍ້ານົມເຫຼືອງ ແລະ ລູກຍັງບໍ່ຮອດ 6 ເດືອນລະເຮົາເອົາອັນອື່ນໃຫ້ລູກກິນກ່ອນອີກເຮັດໃຫ້ລູກເຮົາມັກເຈັບມັກເປັນຕະຫຼອດ ເພິ່ນຍັງບອກອີກວ່າຖ້າລູກເຮົາເຈັບໃຫ້ຮີບພາໄປກວດສຸກສາລາໄດ໋
- **ທ. ຊິມ:** ໂອ້ຍ ບໍ່ເປັນຫຍັງດອກບໍ່ຕ້ອງໄປກວດກະໄດ້ ມັນກໍ່ເຈັບເປັນຕາມພາສາເດັກນ້ອຍຫັ້ນແຫຼະ
- **ນ. ປາອໍ:** ແຕ່ລູກເຮົາເປັນແບບນີ້ມາດົນລະໄດ໋ຂ້ອຍລະຢ້ານລູກຈະເປັນຫຍັງຫຼາຍ ເປັນແນວໃດມື້ອື່ນເຮົາພາລູກໄປສຸກສາລາສາເນາະ
- **ທ. ຊິມ:** ໂອ່ຍ !! ເງິນຄໍາກະແຫ່ງບໍ່ມີຢູ່, ລົດກໍ່ບໍ່ມີ ເສຍເວລາໄປໂລະປ່າແດ່ ຖ້າເຈົ້າຢາກພາໄປເຈົ້າໄປຄົນດຽວໂລດ (ຍ່າງອອກໄປ)
- **ນ. ປາອໍ**: ຂ້ອຍລະຍອມໃຈເຈົ້າແທ້ໂອ່ ອີຕົນລູກແທ້ເດ່ ມື້ອື່ນເຊົ້າຈະໄດ້ໄປປຶກສານໍາ ຄສບ ເບິ່ງກ່ອນມື້ນີ້ໄປນອນກ່ອນ (ຍ່າງອອກໄປ)

❖ <u>**ສາກທີ 7: ນ. ປາອໍໄປຂໍຄໍາປຶກສານໍາ ຄສບ ຢູ່ເຮືອນນາຍບ້ານ**</u>

(ສຽງໄກ່ຂັນ)

- **ນ. ປາອໍ:** ອ້າຍ ຈິລິກ ເອີ່ຍຢູ່ບໍ !! ອ້າຍ ຈິລິກ
- **ທ. ຈິລິກ (ນາຍບ້ານ)**: ເອີໆ ຢູ່ໆ ແມ່ນໃຜມາເອີ້ນແຕ່ເຊົ້າແທ້ ອ່າວ !! ນ. ປາອໍ ມີຫຍັງໃຫ້ຊ່ວຍບໍ ??
- **ນ. ປາອໍ:** ດຽວນີ້ລູກຂ້ອຍເຈັບໜັກ ນົມແມ່ກໍບໍ່ກິນ (ສຽງເດັກນ້ອຍໄຫ້) ຢາກພາໄປສຸກສາລາຜົວກໍບໍ່ພາໄປ ບໍ່ສົນໃຈຫຍັງເລີຍຢາກຂໍປຶກສາຫາລືນໍາອ້າຍວ່ານ້ອງຄວນຈະເຮັດແບບໃດດີ ?
- **ທ. ຈິລິກ (ນາຍບ້ານ)**: ລະນ້ອງໄດ້ລົມແນວໃດກັບຜົວ ?

- **ນ. ປາອໍ:** ນ້ອງກໍ່ໄດ້ບອກລາວວ່າລູກບໍ່ສະບາຍໃຫ້ພາໄປໂຮງໝໍແດ່ ແຕ່ລາວກໍ່ບໍ່ສົນໃຈ
- **ທ. ຈີລີກາ**: ໂອ່ ອ້າຍວ່າລູກພວກເຈົ້ານີ້ເປັນຫຼາຍລະເດີ ໃຫ້ຄ້ຽວພາໄປສຸກສາລາ ຫຼື ໂຮງໝໍສາ ຈັກໜ່ອຍລູກເຈົ້າເປັນຫຍັງມານີ້ ຄົນທີ່ຈະເສຍໃຈກໍ່ຄືພວກເຈົ້າເອງໄດ໋
- **ນ. ປາອໍ:** ລາວເວົ້າແຕ່ວ່າບໍ່ມີເງິນບໍ່ມີລົດ ລະບໍ່ໄປ ນ້ອງກໍ່ບໍ່ຮູ້ຈະເຮັດແນວໃດແລ້ວ
- **ທ. ຈີລີກາ:** ຊັ້ນອ້າຍຈະແນະນຳນ້ອງແນວນີ້ ໃຫ້ໃຊ້ເຫດໃຊ້ຜົນລົມກັບລາວ ຖ້າຫາກວ່າແມ່ນບັນຫາເລື່ອງລົດເລື່ອງເງິນແມ່ນບໍ່ໃຫ້ອຸກໃຈ ດຽວນີ້ເຮົາມີກອງທຶນບ້ານທີ່ສາມາດຢືມຊ່ວຍໄດ້ໃນເວລາສຸກເສີນ ແລະ ເຮົາກໍ່ຍັງມີສັນຍາລົດທີ່ຊ່ວຍເຫຼືອຮັບສົ່ງໄປສຸກສາລາ ຫຼື ໂຮງໝໍອີກດ້ວຍ
- **ນ. ປາອໍ:** ໂອ່ຖ້າທາງ ຄສບ ບ້ານເຮົາມີການຊ່ວຍເຫຼືອຄືແບບນີ້ ຂ້ອຍກໍ່ຈະກັບໄປປຶກສາຜົວຂ້ອຍອີກກ່ອນ ຂອບໃຈຫຼາຍໆເດີນາຍບ້ານ (ຍ່າງອອກໄປ)
- **ທ. ຈີລີກາ**: ເອີໆບໍ່ເປັນຫຍັງ ມີຫຍັງກໍ່ຊ່ວຍເຫຼືອກັນ (ຍ່າງອອກໄປ)

❖ **<u>ສາກທີ 8: ນ. ປາອໍ ໂອ້ລົມຕໍ່ລອງກັບຜົວເລື່ອງພາລູກໄປໂຮງໝໍ</u>**

- **ນ. ປາອໍ:** ອ້າຍ ຊິມເອີ່ຍ ອ້າຍຊິມ !! ອ້າຍຊິມຢູ່ໃສແລ້ວ
- **ທ. ຊິມ:** ມີຫຍັງປາອໍ ??
- **ນ. ປາອໍ:** ກີ້ນີ້ຂ້ອຍໄດ້ໄປປຶກສາກັບນາຍບ້ານມາເພິ່ນວ່າໃຫ້ຟ້າວພາລູກເຮົາໄປໂຮງໝໍສາ ຈັກໜ່ອຍເປັນຫຼາຍມາລະຈະຫຍຸ້ງຍາກ
- **ທ. ຊິມ:** ເອົາອີກແລ້ວ ມາເວົ້ານຳແຕ່ເລື່ອງນີ້ອີກແລ້ວ
- **ນ. ປາອໍ:** ອ້າຍຊິມເອີ່ຍ !! ໃສຕອນເອົາກັນເຈົ້າຄືເວົ້າວ່າຈະຮັກລູກຮັກເມຍ ຈະເບິ່ງແຍງດູແລເອົາໃຈໃສ່ ແຕ່ຜັດມາຮອດດຽວນີ້ລູກເຈັບລູກເປັນຄືບໍ່ເອົາໃຈໃສ່ ເຈົ້າບໍ່ຮັກລູກແດ່ບໍ ? ຖ້າລູກເປັນຫຍັງຮ້າຍແຮງມາດຸເຈົ້າຈະເຮັດແນວໃດ ?
- **ທ. ຊິມ:** ແລ້ວຈະໄປໂຮງໝໍ ຫຼື ສຸກສາລາແນວໃດ ໃນເມື່ອເຮົາບໍ່ມີລົດບໍ່ມີເງິນ ?
- **ນ. ປາອໍ:** ໂອ່ !! ອັນນັ້ນບໍ່ໃຫ້ເປັນຫ່ວງ ນາຍບ້ານເພິ່ນບອກວ່າ ທາງ ຄສບ ເພິ່ນໄດ້ມີກອງທຶນສຸກເສີນ ແລະ ສັນຍາລົດທີ່ຊ່ວຍໄປສົ່ງຄົນເຈັບໄປສຸກສາລາ ຫຼື ໂຮງໝໍ ເຮົາສາມາດໄປເອົານຳເພິ່ນໄດ້
- **ທ. ຊິມ:** ໂອ່ ດີແລ້ວທີ່ເພິ່ນໃຫ້ການຊ່ວຍເຫຼືອເຮົາແບບນີ້ ຂ້ອຍຂໍໂທດເດີ ປາອໍ ທີ່ຜ່ານມາຂ້ອຍເມົາແຕ່ຫຼິ້ນແຕ່ກິນບໍ່ສົນໃຈລູກເມຍ ແຕ່ນີ້ຕໍ່ໄປຂ້ອຍຈະປ່ຽນແປງຕົວເອງເຫຼົ້າເບຍກໍ່ຈະບໍ່ກິນແລ້ວ ແລະ ເລື່ອງໜ້າວຽກໃນຄອບຄົວເຮົາ ຂ້ອຍກໍ່ຈະແບ່ງເບົາກັບເຈົ້າ ບໍ່ມີຫຍັງດອກທີ່ເປັນວຽກຂອງຜົວ ຫຼື ເມຍຢ່າງດຽວ. ມື້ນີ້ພວກເຮົາ ຈະພາລູກໄປປົວຢູ່ສຸກສາລາ ຂ້ອຍກໍ່ຈະເອົາໃຈໃສ່ລູກເມຍ ຊ່ວຍເມຍເອົາລູກ ເຮັດວຽກຫາເງິນ ແລະ ມື້ໜ້າຖ້າມື້ໜ້າເຈົ້າຖືພາອີກຂ້ອຍຈະພາເຈົ້າໄປຝາກທ້ອງເກີດລູກຢູ່ສຸກສາລາເດີ ເພື່ອລູກເຮົາຈະໄດ້ມີສຸຂະພາບແຂງແຮງສົມບູນຄືລູກຄົນອື່ນ ຂອບໃຈຫຼາຍໆເດີທີ່ຊ່ວຍເຕືອນສະຕິຂ້ອຍ.
- **ນ. ປາອໍ:** ໂດຍ ບໍ່ເປັນຫຍັງເຮົາເປັນຜົວເມຍກັນມີຫຍັງກໍ່ປຶກສາຫາລືກັນ ຊ່ວຍເຫຼືອເຊິ່ງກັນແຫຼະກັນເນາະ
- **ທ. ຊິມ:** ໂດຍ ເມຍຮັກ.

**"ສຸຂະພາບທີ່ດີຂອງແມ່ ແລະ ເດັກເປັນໜ້າທີ່ຂອງໝົດທຸກຄົນ"**

❖ **<u>ຄຳຖາມ</u>**

1. ລະຄອນເລື່ອງນີ້ໄດ້ເວົ້າເຖິງຫຍັງແດ່ ?
2. ທ. ຈັກ ແລະ ທ. ຊິມ ແຕກຕ່າງກັນແນວໃດ ?

3. ນ. ຈຳປີໄປເກີດລູກຢູ່ໃສ ? ສຸຂະພາບຂອງລູກລາວເປັນແນວໃດ ? ຍ້ອນຫຍັງ ?
4. ນ. ປາອໍໄປເກີດລູກຢູ່ໃສ ? ສຸຂະພາບຂອງລູກລາວເປັນແນວໃດ ? ຍ້ອນຫຍັງ ?
5. ທ. ຈັກ ແລະ ນ. ຈຳປີໄດ້ແນະນຳກ່ຽວກັບການລ້ຽງລູກໃຫ້ກັບ ນ. ປາອໍ ແນວໃດ ? ແລ້ວ ນ. ປາອໍ ລາວເຮັດແນວໃດ ຕໍ່ ?
6. ນ. ປາອໍ ລາວເວົ້າແນວໃດກັບຜົວລາວ ຜົວລາວຈຶ່ງປ່ຽນໃຈພາລູກໄປໂຮງໝໍ ແລະ ລາວໄດ້ຮັບປາກວ່າແນວໃດແດ່

## ການດູແລເດັກນ້ອຍ

## ບົດລະຄອນ 5: ບໍ່ມີອີກແລ້ວເດັກນ້ອຍຂາດສານອາຫານ

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ | |
|---|---|---|
| 1. ນ. ຮອດ (ແມ່ຂອງ ທ. ໄຫ) | 1. ຜ້າສາກ (ພາບເບື້ອງຫຼັງ) 2,5 X 4m | 1 ຜືນ |
| 2. ທ. ໄຫ (ລູກຂອງ ນ. ຮອດ) | 2. ເຊືອກສຳລັບມັດຜ້າສາກ | 20 ແມັດ |
| 3. ທ. ບ່ວງ (ຜົວ ນ. ຖູ່) | 3. ເຄື່ອງນຸ່ງສຳລັບນັກສະແດງ | 7 ຊຸດ |
| 4. ນ. ຖູ່ (ເມຍ ທ. ບ່ວງ) | 4. ຕຸກກະຕາເດັກນ້ອຍ (ປີປາຍ) | 1 ໂຕ |
| 5. ທ. ຖ້ອຍ (ລູກຂອງ ທ. ຖູ່ ແລະ ນ. ບ່ວງ) | 5. ຜ້າເຈ່ເດັກນ້ອຍ | 3 ຜືນ |
| 6. ທ. ໂຕະ (ນາຍບ້ານ) | 6. ຈັກໄຟຟ້າ | 1 ອັນ |
| 7. ນ. ຕັ່ງ (ແພດສຸກສາລາ) | 7. ຕູ້ລຳໂພງ ນ້ອຍ | 1 ອັນ |
| 8. ຊາວບ້ານເຂົ້າຮ່ວມກອງປະຊຸມ 3 ຄົນ (ຮັບບົດໂດຍຊາວບ້ານ) | 8. ຄອມພິວເຕີ | 1 ເຄື່ອງ |
| | 9. ອຸປະກອນສຳລັບການ ຖາມ - ຕອບ ຄຳຖາມ | |
| | - ຜ້າເຊັດນ້ອຍ | 10 ຜືນ |
| | - ສະບູ | 10 ກ້ອນ |

### ບົດເລື່ອງໂດຍຫຍໍ້

ໃນບ້ານແຫ່ງໜຶ່ງ ຊາວບ້ານມີອາຊີບເຮັດໄຮ່ເຮັດສວນ ແລະ ຫາກິນຕາມທຳມະຊາດ ວິທີການລ້ຽງລູກກໍ່ລ້ຽງ ໂດຍຕາມປົກກະຕິທີ່ຄົນເຖົ້າຄົນແກ່ເຄີຍລ້ຽງກັນມາ ແຕ່ລະມື້ເຂົາເຈົ້າກໍ່ມີແຕ່ເຮັດວຽກ ໄປໄຮ່ ໄປສວນ ໂດຍທີ່ ບໍ່ຮູ້ວິທີການດູແລເອົາໃຈໃສ່ຢ່າງຖືກຕ້ອງ, ບໍ່ໄດ້ເຂົ້າເຖິງການບໍລິການດ້ານສາທາລະນະສຸກ ເຮັດໃຫ້ເດັກນ້ອຍ ໃນບ້ານນີ້ຂາດສານອາຫານ ແລະ ເຈັບປ່ວຍຢູ່ຕະຫຼອດ

ມື້ໜຶ່ງ ທ່ານໝໍໄດ້ລົງສັກຢາຢູ່ບ້ານ ນາຍບ້ານຈຶ່ງໄດ້ປະກາດໃຫ້ຊາວບ້ານທຸກຄົນພາລູກພາຫຼານ ມາຮັບການສັກຢາກັນພະຍາດ ແຕ່ຊາວບ້ານສ່ວນຫຼາຍກໍ່ບໍ່ໄດ້ພາລູກຫຼານໄປ, ລະຫວ່າງທາງທີ່ ນ. ຮອດ ພາລູກຂອງລາວໄປສັກຢານັ້ນກໍ່ໄດ້ພົບກັບ ຄອບຄົວຂອງ ທ. ບ່ວງ ແລະ ນ. ຖູ່ ທີ່ກຳລັງຈະໄປໄຮ່ ນ. ຮອດ ກໍ່ໄດ້ຊັກຊວນພວກເຂົາ ໃຫ້ພາ

ລູກໄປສັກຢາ ແຕ່ດ້ວຍຄວາມບໍ່ເຂົ້າໃຈ ທ. ບ່ວງ ແລະ ນ. ຖູ່ ກໍ່ບໍ່ໃຫ້ຄວາມສົນໃຈທີ່ຈະພາລູກໄປສັກຢາ ແລ້ວພາກັນໄປໄຮ່, ຕໍ່ມາ ນ. ຮອດ ໄດ້ອະທິບາຍກ່ຽວກັບເລື່ອງທ່ານໝໍແນະນໍາມາ ໃຫ້ກັບ ທ. ບ່ວງ ແລະ ນ. ຖູ່ຟັງ ແລ້ວຍັງຊຸກຍູ້ໃຫ້ເຂົາເຈົ້າເຂົ້າຮ່ວມກອງປະຊຸມທີ່ນາຍບ້ານຈະອະທິບາຍກ່ຽວກັບການດູແລເດັກລຸ່ມ 5 ປີ ແຕ່ເຂົາເຈົ້າ ກໍ່ບໍ່ໄປເຂົ້າຮ່ວມເພາະຈະຕ້ອງນອນໄຮ່.

ມື້ໜຶ່ງ ທ. ຖ້ອຍ ລູກຂອງ ທ. ບ່ວງ ແລະ ນ. ຖູ່ ກໍ່ເປັນໄຂ້ ແລະ ເກີດອາການຊັກ ນາຍບ້ານຈຶ່ງໄດ້ແນະນໍາໃຫ້ ພາໄປສຸກສາລາໂດຍດ່ວນ ທ່ານໝໍໄດ້ເວົ້າວ່າ: ລູກຂອງເຂົາເຈົ້າເປັນໄຂ້ຮ້ອນ ຈົນເກີດອາການຊັກ ເນື່ອງຈາກ ບໍ່ໄດ້ຮັບສານອາຫານພຽງພໍ ແລະ ບໍ່ໄດ້ຮັບການສັກຢາກັນພະຍາດ ຈຶ່ງເຮັດໃຫ້ເດັກຂາດສານອາຫານ ແລະ ພູມຕ້ານທານຕໍ່າ , ທ່ານໝໍໄດ້ໃຫ້ຄໍາແນະນໍາໃຫ້ ທ. ບ່ວງ ແລະ ນ. ຖູ່ ໃຫ້ເອົາໃຈໃສ່ເບິ່ງແຍງດູແລລູກ, ໃຫ້ລູກ ໄດ້ກິນອາຫານ 6 ໝວດໝູ່, ພາລູກມາຮັບການສັກຢາກັນພະຍາດ ແລະ ຖ້າຫາກເຈັບເປັນແມ່ນໃຫ້ພາລູກມາ ສຸກສາລາ ຫຼື ໂຮງໝໍເມືອງ, ທ. ບ່ວງ ແລະ ນ. ຖູ່ ໄດ້ຮັບຮູ້ ແລະ ເຂົ້າໃຈ ແລ້ວໄດ້ຮັບປາກວ່າຈະເອົາໃຈໃສ່ດູແລ ລູກຕາມທີ່ທ່ານໝໍແນະນໍາ.

❖ <u>**ສາກທີ 1: ຊາວບ້ານລົມກັນເລື່ອງພາລູກໄປສັກຢາກັນພະຍາດ (ຢູ່ບ້ານ)**</u>

- **ທ. ໂຕະ:** (ສຽງເພງປະກອບ) (ປະກາດໂທລະໂຄ່ງ) ປະກາດ ປະກາດ ມື້ນີ້ຖ້າໃຜມີລູກມີຫຼານ 0-5 ປີ ໃຫ້ພາມາສັກຢາກັນພະຍາດເດີ ແພດສຸກສາລາເພິ່ນຈະມາສັກຢາກັນພະຍາດໃຫ້ ຢູ່ເດີ່ນໂຮງຮຽນເຮົານີ້
- **ທ. ຖ້ອຍ:** ພໍ່, ແມ່....... ຂໍເງິນແດ່ຈະໄປຊື້ເຂົ້າໜົມ
- **ທ. ບ່ວງ:** ຍາມໃດກໍ່ກິນແຕ່ເຂົ້າໜົມຫັ້ນ ເຂົ້ານໍ້າກໍ່ບໍ່ກິນ ເບິ່ງແມະ 4 ປີປາຍລະຍັງຈ່ອຍໆ ເຫຼືອງໆໝົດລະຫັ້ນ ເອົ້າ ເອົາໄປ (ຈັບເງິນຍື່ນໃຫ້ລູກ 1,000) ຈະໄປຫຼິ້ນໃສລະໄປ
- **ນ. ຖູ່:** ໄປໆ ອ້າຍ ບ່ວງ ຟ້າວໄປໄຮ່ແດ່ (ຍ່າງໄປເຈີກັບ ນ. ຮອດ ແລະ ລູກຂອງລາວພໍດີ)
- **ນ. ຮອດ:** ອ່າວ !! ຖູ່, ບ່ວງ ຈະພາກັນໄປໃສຫັ້ນ ??
- **ນ. ຖູ່:** ກໍາລັງວ່າຈະໄຮ່ ຟ້າວຈະໄປເສຍຫຍ້າໄຮ່ແດ່ ຈັກໜ່ອຍແດດຈະຮ້ອນ
- **ນ. ຮອດ:** ອ່າວ !! ນາຍບ້ານເພິ່ນບອກໃຫ້ພາລູກພາຫຼານອາຍຸ 0-5 ປີໄປສັກຢາກັນພະຍາດໄດ໋ ຂ້ອຍກໍ່ກໍາລັງຈະເອົາລູກໄປສັກຢານີ້
- **ທ. ບ່ວງ:** ສັກຢຸກ ສັກຢາຫຍັງເກາະ ບໍ່ສັກກະໄດ້ວຽກບັກຫຼາຍໆມື້ຟ້າວໄປໄຮ່ແດ່
- **ນ. ຖູ່:** ເອີຫັ້ນແຫຼະ ອີກຢ່າງໄດ້ຍິນເຂົາວ່າສັກຢາລະລູກກະເປັນໄຂ້ອີກ ຈັກຈະພາກັນໄປສັກເຮັດຫຍັງ
- **ນ. ຮອດ:** ແຕ່ເພິ່ນບອກໃຫ້ໄປສັກໄດ໋ ມັນກໍ່ຈະດີກັບລູກ ກັບຫຼານເຮົາລະດີເພິ່ນຈຶ່ງມາສັກໃຫ້ນະ
- **ທ. ບ່ວງ:** ຢາກໄປກໍ່ໄປໂລດເຈົ້າຫັ້ນ ພວກເຮົາຈະໄປໄຮ່ ໄປໆ ຖູ່ເອີຍ
- **ນ. ຖູ່:** ເອີ ໄປໆ (ຍ່າງອອກໄປ)
- **ນ. ຮອດ:** ເອີ ບໍ່ໄປກະຢ່າສາ ໃຜບໍ່ໄປເຮົາພາລູກເຮົາໄປກະໄດ້ (ຍ່າງອອກໄປ)

❖ <u>**ສາກທີ 2: ນ. ຮອດ ພາລູກໄປສັກຢາກັບແພດສຸກສາລາ (ຢູ່ເດີ່ນບ້ານ)**</u>

- **ທ. ໂຕະ:** ມາເດີ ມາເດີ ພໍ່ແມ່ພີ່ນ້ອງເອີ່ຍ ພາລູກ ພາຫຼານມາສັກຢາເດີ
- **ນ. ຮອດ:** ສະບາຍດີ ນາຍບ້ານ ສະບາຍດີ ທ່ານໝໍ
- **ນ. ຕັ່ງ:** ສະບາຍດີ
- **ທ. ໂຕະ:** ອ່າວ !! ຮອດ ມາໆ ພາລູກມາໄວ
- **ນ. ຮອດ:** ບໍ່ມີໃຜມາເລີຍເນາະ
- **ທ. ໂຕະ:** ຫັ້ນແຫຼະ ປະກາດກໍ່ປະກາດແລ້ວ ເອີ້ນກໍ່ໄປເອີ້ນຮອດເຮືອນແລ້ວ ກໍ່ບໍ່ມີໃຜມາ
- **ນ. ຮອດ:** ກໍ່ນີ້ຂ້ອຍເຫັນ ທ. ບ່ວງ ກັບ ນ. ຖູ່ ຊວນມາກໍ່ບໍ່ມານຳ ວ່າຢ້ານລູກຈະເປັນໄຂ້ວ່າຊັ້ນ ແມ່ນແທ້ບໍທ່ານໝໍ ຖ້າສັກຢາໃຫ້ລູກແລ້ວລູກຈະເປັນໄຂ້ ??
- **ນ. ຕັ່ງ:** ອັນນັ້ນ ແມ່ນມັນເປັນເລື່ອງປົກກະຕິຂອງເດັກນ້ອຍທີ່ສັກຢາກັນພະຍາດ ເພາະຮ່າງກາຍໄດ້ຮັບຢາເຂົ້າໄປແລ້ວມັນຈະເຮັດໃຫ້ເດັກນ້ອຍເປັນໄຂ້ ແຕ່ຈະເປັນພຽງ 2-3 ມື້ເທົ່ານັ້ນ ຫຼັງຈາກນັ້ນແລ້ວເດັກກໍ່ຈະແຂງແຮງເປັນປົກກະຕິ (ແພດກຳລັງແທກນ້ຳໜັກລວງສູງ ແລະ ສັກຢາໃຫ້ລູກນາງຮອດ)
- **ນ. ຮອດ:** ໂດຍ ມື້ໜ້າຂ້ອຍກໍ່ຈະໄດ້ອະທິບາຍໃຫ້ໝູ່ຟັງແນວນັ້ນກ່ອນ
- **ນ. ຕັ່ງ:** ໂດຍ ມາຮອດນີ້ການສັກຢາເຮົາກໍ່ສຳເລັດສ່ຳນີ້ ເຫັນວ່າບ້ານເຮົານີ້ຍັງມີເດັກນ້ອຍທີ່ຂາດສານອາຫານ ແລະ ບໍ່ມາສັກຢາກັນພະຍາດຫຼາຍເນາະ
- **ທ. ໂຕະ:** ຊາວບ້ານເຮົາເປັນແຕ່ແນວນີ້ນະ ຈັກຈະເຮັດແນວໃດດີ
- **ນ. ຕັ່ງ:** ມີແຕ່ຝາກນາຍບ້ານບອກໃຫ້ຊາວບ້ານໝົດທຸກຄົນເອົາໃຈໃສ່ເລື່ອງເບິ່ງແຍງດູແລເດັກນ້ອຍ ໂດຍສະເພາະແມ່ນເລື່ອງອາຫານການກິນຕ້ອງກິນອາຫານໃຫ້ຄົບ 6 ໝວດ ແລະ ໃຫ້ພະຍາຍາມຊຸກຍູ້ສົ່ງເສີມໃຫ້ຊາວບ້ານພາລູກຫຼານມາສັກຢາໃຫ້ຫຼາຍໆເດີ ຖ້າເຈັບເປັນກໍ່ໃຫ້ພາໄປປິ່ນປົວຢູ່ສຸກສາລາ ຫຼື ໂຮງໝໍເມືອງ
- **ທ. ໂຕະ:** ໂດຍໆ ຂອບໃຈຫຼາຍໆເດີທ່ານໝໍ
- **ນ. ຕັ່ງ:** ເອີ ບໍ່ເປັນຫຍັງ ມັນເປັນໜ້າທີ່ຂອງຂ້ອຍຢູ່ແລ້ວ (ທຸກຄົນຍ່າງອອກໄປ)

❖ **<u>ສາກທີ 3: ນ. ຮອດ ໄປລົມເລື່ອງເອົາໄປສັກຢາໃຫ້ ນ. ຖູ່ ແລະ ທ. ບ່ວງຟັງ (ຢູ່ໄຮ່)</u>**

- **ທ. ບ່ວງ ແລະ ນ. ຖູ່:** ໂອ່ຍ ເມື່ອຍເດ່ ນັ່ງພັກຢູ່ກ້ອງຮົ່ມໄມ້ນີ້ກ່ອນສາ
- **ນ. ຮອດ:** ຖູ່, ບ່ວງ ເຮັດຫຍັງຢູ່ ??
- **ທ. ບ່ວງ:** ບໍ່ໄດ້ເຮັດຫຍັງພາກັນນັ່ງພັກຜ່ອນ
- **ນ. ຖູ່:** ວ່າແນວໃດຮອດ ??
- **ນ. ຮອດ:** ເອີ ມື້ວານນີ້ ເຮົາພາລູກໄປສັກຢາ ທ່ານໝໍ ເພິ່ນບອກວ່າທີ່ລູກເຮົາເປັນໄຂ້ຫັ້ນແມ່ນເປັນເລື່ອງປົກກະຕິທີ່ສັກຢາລະເດັກນ້ອຍຈະເປັນໄຂ້ 2-3 ມື້ ຫຼັງຈາກນັ້ນກໍ່ຈະແຂງແຮງເປັນປົກກະຕິວ່າຊັ້ນ

- **ທ. ບ່ວງ:** ສັກແລ້ວມັນຈະດີແນວ ? ລູກເຮົາຈະຕຸ້ຍຂຶ້ນເບາະ
- **ນ. ຮອດ:** ສັກແລ້ວມັນກໍ່ຈະຊ່ວຍປ້ອງກັນພະຍາດເຮັດໃຫ້ລູກເຮົາມີສຸຂະພາບແຂງແຮງ ເອີ ລະເລື່ອງທີ່ລູກເຮົາຈ່ອຍຫັ້ນນະ ເປັນຍ້ອນຂາດສານອາຫານ ກິນອາຫານບໍ່ຫຼາກຫຼາຍ
- **ນ. ຖຸ່:** ລະເຮົາຈະຕ້ອງເຮັດແນວໃດ ??
- **ນ. ຮອດ:** ຂ້ອຍກໍ່ບໍ່ຮູ້ຄືກັນ ນາຍບ້ານເພິ່ນເອີ້ນລວມມື້ນີ້ນະ ລາຍລະອຽດແມ່ນເພິ່ນຈະເວົ້າໃຫ້ຟັງ
- **ທ. ບ່ວງ:** ໂອ່ !! ມື້ນີ້ຄືຈະໄປບໍ່ໄດ້ຕິ ມື້ນີ້ວ່າຈະນອນຢູ່ໄຮ່ ເຈົ້າໄປໂລດມື້ອື່ນມື້ຮືພຸ້ນແຫຼະຈຶ່ງຈະໄປບ້ານນະ
- **ນ. ຮອດ:** ເອີໆ ຄັນຊັ້ນຂ້ອຍໄປບ້ານກ່ອນເດີ້ ຈະຄໍ່າລະນີ (ຍ່າງອອກໄປ)
- **ທ. ບ່ວງ:** ເອີໆ ໄປແມ່ມັນເຈົ້າໄປຕັກນໍ້າເດີ້ ດຽວຂ້ອຍຈະໄປຊອກເກັບຟືນກ່ອນ
- **ນ. ຖຸ່:** ເຈົ້າໆ (ຍ່າງອອກໄປພ້ອມກັນ)

❖ <u>**ສາກທີ 4: ນາຍບ້ານເອີ້ນລວມບ້ານ (ຢູ່ບ້ານ)**</u>

- **ທ. ໂຕະ:** (ສຽງເພງປະກອບ) (ປະກາດໂທລະໂຄ່ງ)ປະກາດເດີ້ ພໍ່ແມ່ພີ່ນ້ອງໝົດທຸກຄົນໃຫ້ມາລວມຢູ່ເຮືອນນາຍບ້ານເດີ້
- **ນ. ຮອດ:** ໂອ່ ນາຍບ້ານເອີ້ນໄປລວມແລ້ວ ໄປໆລູກ ໄປລວມ (ຊາວບ້ານ 3 ຄົນຍ່າງເຂົ້າ)
- **ທ. ໂຕະ:** ມາຄົບໝົດທຸກຄົນລະຕິ
- **ທຸກຄົນ:** ຄົບ............. ຂາດແຕ່ຜູ້ບໍ່ມາ
- **ທ. ໂຕະ:** ເອົ້າ ທີ່ເອີ້ນທຸກຄົນມາລວມໃນມື້ນີ້ ກໍ່ເພື່ອມາໂອ້ລົມກ່ຽວກັບສຸຂະພາບຂອງເດັກນ້ອຍຢູ່ໃນບ້ານເຮົານີ້ ມື້ເຊົ້ານີ້ນາຍໝໍສຸກສາລາເພິ່ນກໍ່ໄດ້ມາສັກຢາ, ຢອດຢາ ແລະ ກວດສຸຂະພາບໃຫ້ເດັກນ້ອຍແລະ ແມ່ຍິງໄວຈະເລີນພັນຢູ່ບ້ານເຮົານີ້ ກໍ່ມີຫຼາຍຄົນເບາະທີ່ຍັງບໍ່ໄດ້ພາລູກພາຫຼານມາ ນາຍໝໍເພິ່ນກໍ່ໄດ້ຝາກຝັ່ງມາ ດຽວນີ້ບ້ານເຮົານີ້ມີເດັກນ້ອຍທີ່ຂາດສານອາຫານເປັນຈຳນວນຫຼາຍ
- **ຊາວບ້ານ:** ເດັກນ້ອຍຂາດສານອາຫານແມ່ນມັນເປັນແນວໃດ ?
- **ທ. ໂຕະ:** ເດັກນ້ອຍຂາດສານອາຫານແມ່ນເດັກນ້ອຍທີ່ໂຕນ້ອຍ, ຈ່ອຍ, ເຕ້ຍ, ນໍ້າໜັກ ແລະ ລວງສູງບໍ່ສົມດູນກັບອາຍຸ ເນື່ອງຈາກວ່າກິນອາຫານບໍ່ພຽງພໍ, ກິນອາຫານບໍ່ຫຼາກຫຼາຍ ບໍ່ຄົບ 6 ໝວດກໍ່ຄື: ທາດແປ້ງ, ທາດຊີ້ນ, ທາດຜັກ, ໝາກໄມ້, ທາດແຄວຊຽມ ແລະ ທາດນໍ້າມັນ
- **ນ. ຮອດ:** ໂອ່.......... ໃຫ້ກິນຫຼາຍປານນັ້ນເຮົາຈະເອົາຫຍັງມາໃຫ້ກິນ ທຸກມື້ນີ້ຊອກອັນກິນກໍ່ຍາກເປັນໄປບໍ່ໄດ້ດອກທີ່ຈະໃຫ້ກິນໄດ້ຄົບ 6 ໝວດໝູ່ນະ ຊີ້ນປາອາຫານກໍ່ບໍ່ແມ່ນຈະຊອກໄດ້ຕະຫຼອດເປັນຜັກເປັນໝາກໄມ້ມັນກໍ່ກິນຕາມລະດູການ
- **ທ. ໂຕະ:** ກໍ່ບໍ່ແມ່ນວ່າຈະໃຫ້ກິນຄົບທຸກຢ່າງໃນທຸກຄາບເນາະ ແຕ່ຢ່າງບໍ່ມີມື້ໜຶ່ງກໍ່ໃຫ້ໄດ້ກິນໜ້ອຍໜຶ່ງ ຖ້າຈຳເປັນບໍ່ມີແທ້ໆກໍ່ສາມາດກິນອາຫານອື່ນທົດແທນໄດ້ ຖ້າບໍ່ມີຊີ້ນ ກິນ ໄຂ່ ຫຼື ຖົ່ວເຫຼືອງແທນກໍ່ໄດ້, ຜັກ ແລະ ໝາກໄມ້ເຮົາກໍ່ຫາກິນໄດ້ຕາມລະດູການຢູ່ແລ້ວເນາະ, ທາດແປ້ງນີ້ເຮົາກໍ່ກິນເຂົ້າເປັນປົກກະຕິຢູ່ແລ້ວເນາະ ຖ້າບໍ່ມີເຮົາກໍ່ສາມາດກິນເຜືອກ, ມັນ ຫຼື ສາລີແທນກໍ່ໄດ້, ທາດ

ແຄວຊຸ່ມເຮົາກໍ່ກິນສັດໂຕນ້ອຍທີ່ສາມາດກິນໄດ້ທັງກະດູກເຊັ່ນ: ປານ້ອຍ, ກຸ້ງນ້ອຍ ຫຼື ແມງໄມ້ຕ່າງໆ, ທາດນໍ້າມັນ ຖ້າບໍ່ມີນໍ້າມັນພືດນໍ້າມັນໝູກໍ່ສາມາດກິນໝາກຖົ່ວດິນ, ໝາກງາ, ໝາກກໍ້ ແລະ ອື່ນໆ

- **ນ. ຮອດ:** ຖ້າລູກຫຼານເຮົາໄດ້ກິນແນວນັ້ນກໍ່ຄືຈະແຂງແຮງໝົດທຸກຄົນໂອ່ເນາະ ຮູ້ແນວນີ້ມື້ອື່ນຂ້ອຍກໍ່ຈະຊອກມາໃຫ້ລູກຂ້ອຍກິນກ່ອນ
- **ທ. ໂຕະ:** ດີແລ້ວເນາະ ແຕ່ນີ້ຕໍ່ໄປກໍ່ໃຫ້ທຸກຄົນເບິ່ງແຍງດູແລລູກຫຼານເຮົາໃຫ້ດີເດີ້ ຖ້ານາຍໝໍເພິ່ນມາສັກຢາກໍ່ໃຫ້ພາລູກພາຫຼານມາສັກຢາໝົດທຸກຄົນ ຫາກມີການເຈັບເປັນກໍ່ໃຫ້ພາກັນໄປສຸກສາລາ ຫຼື ໂຮງໝໍເມືອງເດີ້
- **ຊາວບ້ານທຸກຄົນ:** ໂດຍ..........
- **ທ. ໂຕະ:** ເອົາບໍ່ມີຫຍັງແລ້ວກໍ່ໃຫ້ທຸກຄົນພັກຜ່ອນ ໄປເຮືອນໃຜເຮືອນມັນໄດ້
- **ຊາວບ້ານ:** ເອີໆ ໄປ ໄປຢ້າວ ໄປເຮືອນ (ທຸກຄົນຢ່າງອອກໄປ)

❖ **<u>ສາກທີ 5: ທ. ຖ້ອຍ ລູກຂອງ ທ. ບ່ວງ ແລະ ນ. ຖູ່ເປັນໄຂ້ຊັກ (ຢູ່ເຮືອນ)</u>**

- **ນ. ຖູ່:** ໂອ່ຍ !! ເມື່ອຍເດ່ ໄປນອນຜູ້ນ 3 ມື້ລະ ຫາກໍ່ຈະໄດ້ມາເຮືອນນີ້ ຖ້ອຍເອີ່ຍ !! ຖ້ອຍ....... ລູກຢູ່ໃສ ? ແມ່ເອົາໝາກແຕງມາໃຫ້ລູກນີ້ນະ
- **ທ. ບ່ວງ:** ລູກໄປເລາະຫຼິ້ນຕາມກາງບ້ານຕິ ບາງທີກໍ່ໄປຫຼິ້ນເຮືອນແມ່ເຖົ້າບໍ່ຈັກເນເອົ້າແລ້ວລູກກະມາລະເດ
- **ທ. ຖ້ອຍ:** ພໍ່....... ແມ່......... ຂໍເງິນແດ່ຊື້ເຂົ້າໜົມ
- **ນ. ຖູ່:** ພໍແຕ່ເຫັນໜ້າລະຂໍແຕ່ເງິນເນາະລູກນີ້ ລູກກິນເຂົ້າແຫຼະ ??
- **ທ. ຖ້ອຍ:** ບໍ່ລູກບໍ່ກິນ ບໍ່ຢາກກິນ ລູກຈະເອົາເງິນໄປຊື້ເຂົ້າໜົມ (ທ. ຖ້ອຍ ດິ້ນຊັກລົງ)
- **ນ. ຖູ່ ແລະ ທ. ບ່ວງ:** ຖ້ອຍລູກເປັນຫຍັງຖ້ອຍ............. ໂອ່ ຄິງລູກຄືມາຮ້ອນແທ້ ຖ້ອຍ...... (ເວົ້າພ້ອມກັນ)
- **ນ. ຖູ່:** ອ້າຍບ່ວງ ໄປເອີ້ນຄົນມາຊ່ວຍແດ່ໄປ ບໍ່ຮູ້ວ່າລູກເປັນຫຍັງ ໄປເອີ້ນຄົນມາຊ່ວຍລູກແດ່ (ທັງເວົ້າທັງໄຫ້)
- **ທ. ບ່ວງ:** ເອີໆ ຂ້ອຍຈະໄປຊອກຄົນມາຊ່ວຍກ່ອນ (ແລ່ນອອກໄປ) (ຊ່ວຍແດ່ໆ ຊ່ວຍລູກຂ້ອຍແດ່)
- **ທ. ໂຕະ:** ຫາ....... ແມ່ນໃຜເປັນຫຍັງ ??
- **ທ. ບ່ວງ:** ຊ່ວຍແດ່ອ້າຍໂຕະ ບໍ່ຮູ້ວ່າລູກຂ້ອຍເປັນຫຍັງ
- **ທ. ໂຕະ:** ໂອ່ ເປັນແນວນີ້ເບິ່ງທ່າບໍ່ດີແລ້ວ ໄປໆພາໄປສຸກສາລາ ໄປໄວໆ (ທ. ບ່ວງແບກລູກອອກໄປ)

❖ **<u>ສາກທີ 6: ພາ ທ. ຖ້ອຍ ໄປປິ່ນປົວຢູ່ສຸກສາລາ (ຢູ່ສຸກສາລາ)</u>**

- **ທ. ບ່ວງ ແລະ ນ. ຖຸ່:** (ທ. ບ່ວງແບກລູກອອກມາ) ຊ່ວຍແດ່ທ່ານໝໍ ຊ່ວຍແດ່ ຊ່ວຍລູກຂ້ອຍແດ່ ບໍ່ຮູ້ລູກຂ້ອຍເປັນຫຍັງຊ່ວຍແດ່..........
- **ນ. ຕັ່ງ:** ແມ່ນລາວເປັນຫຍັງມາ ??
- **ທ. ບ່ວງ:** ບໍ່ຮູ້ຄືກັນ ຢູ່ໆລະກໍ່ຊັກລົງໄປ ຄີງກໍ່ຮ້ອນໆ
- **ນ. ຕັ່ງ:** ໂອ່ ເອົາເຂົ້າມາໆ ເອົາເຂົ້າມາໃນພີ້ໝໍຈະກວດໃຫ້ ພໍ່ແມ່ຄົນເຈັບຖ້າຢູ່ນອກເດີ້
- **ນ. ຖຸ່:** ຮືໆ ອ້າຍບ່ວງເອີຍ ລູກເຮົາຈະເປັນຫຍັງຫຼາຍບໍ່ ?? ລູກເຮົາຄືເປັນແນວນີ້?
- **ທ. ບ່ວງ:** ບໍ່ເປັນຫຍັງໆ ເຮັດໃຈດີໆໄວ້ລູກເຮົາບໍ່ເປັນຫຍັງດອກ....
- **ນ. ຖຸ່:** ຮືໆ ໝໍຄືກວດເຫີງແທ້ ເຂົ້າໄປເຫີງລະເດ່ບໍ່ເຫັນອອກມາປານນີ້
- **ນ. ຕັ່ງ:** ໃຜເປັນພໍ່ແມ່ຂອງເດັກນ້ອຍ ??
- **ທ. ບ່ວງ ແລະ ນ. ຖຸ່:** ຂ້ອຍໆ ລູກຂ້ອຍເປັນແນວໃດແລ້ວທ່ານໝໍ ??
- **ນ. ຕັ່ງ:** ດຽວນີ້ລູກຂອງພວກເຈົ້າປອດໄພແລ້ວ ບໍ່ຕ້ອງເປັນຫ່ວງ ໝໍສັກຢາ ແລະ ໃສ່ນ້ຳເກືອ ໃຫ້ແລ້ວໃຫ້ລາວນອນພັກຜ່ອນຢູ່ທາງໃນ
- **ທ. ບ່ວງ:** ລະລູກຂ້ອຍລາວເປັນຫຍັງທ່ານໝໍ ?
- **ນ: ຕັ່ງ:** ລູກເຈົ້າຂາດສານອາຫານຂັ້ນຮຸນແຮງສຸຂະພາບບໍ່ແຂງແຮງ ຈຶ່ງເກີດພະຍາດແຊກຊ້ອນໄດ້ງ່າຍ ເຮັດໃຫ້ເປັນໄຂ້ ແລະ ເປັນຊັກ ທີ່ຜ່ານມາເຈົ້າເຄີຍໄດ້ພາລູກມາສັກຢາກັນພະຍາດບໍ ??
- **ນ. ຖຸ່:** ບໍ່ເຄີຍຈັກເທື່ອ
- **ນ. ໂຕະ:** ໂອ່ !! ສິມພໍແຫຼະ ລາວຈຶ່ງບໍ່ແຂງແຮງພູມຕ້ານທານຕ່ຳ ຍ້ອນລາວບໍ່ໄດ້ຮັບການສັກຢາກັນພະຍາດ ແລະ ບໍ່ໄດ້ຮັບສານອາຫານພຽງພໍ ຈຶ່ງເຮັດໃຫ້ເປັນແນວນີ້
- **ນ. ຖຸ່:** ລະພວກເຮົາຄວນຈະເຮັດແນວໃດ ?
- **ນ. ຕັ່ງ:** ດຽວນີ້ໃຫ້ນອນຕິດຕາມອາການຢູ່ສຸກສາລາຈັກ 2-3 ມື້ໃຫ້ດີຂຶ້ນລະກໍ່ກັບບ້ານໄດ້ ຖ້າກັບໄປຮອດບ້ານແລ້ວໃຫ້ພໍ່ແມ່ ແລະ ຄອບຄົວເອົາໃຈໃສ່ເບິ່ງແຍງດູແລລູກໃຫ້ດີ, ໃຫ້ລູກໄດ້ກິນອາຫານໃຫ້ພຽງພໍກິນໃຫ້ຄົບ 6 ໝວດໝູ່, ພາລູກມາຮັບການສັກຢາທຸກຄັ້ງ ທີ່ໝໍໄປສັກຢູ່ບ້ານ ຫຼື ພາມາສັກຢູ່ສຸກສາລາກໍ່ໄດ້ ແລະ ທີ່ສຳຄັນຖ້າມີການເຈັບເປັນ ໃຫ້ພາມາປິ່ນປົວຢູ່ສຸກສາລາ ຫຼື ໂຮງໝໍໂດຍດ່ວນ
- **ທ. ບ່ວງ:** ເຈົ້າໆ ແຕ່ນີ້ຕໍ່ໄປພວກເຮົາຈະເອົາໃຈໃສ່ລູກຕາມທີທ່ານໝໍແນະນຳ ຂອບໃຈຫຼາຍໆເດີ້ທ່ານໝໍ ທີ່ຊ່ວຍຊີວິດລູກຂອງພວກເຮົາໄວ້
- **ນ. ຕັ່ງ:** ບໍ່ເປັນຫຍັງ ມັນເປັນໜ້າທີ່ຂອງຂ້ອຍຢູ່ແລ້ວ.

**ສຸຂະພາບທີ່ດີຂອງແມ່ ແລະ ເດັກ ເປັນໜ້າທີ່ຂອງໝົດທຸກຄົນ**

❖ **ຄຳຖາມ:**

1. ແມ່ນໃຜຊວນ ທ. ບ່ວງ ແລະ ນ. ຖູ່ໃຫ້ພາລູກໄປສັກຢາ ? ເປັນຫຍັງ ທ. ບ່ວງ ແລະ ນ. ຖູ່ ບໍ່ພາລູກໄປສັກຢາ ?
2. ເດັກນ້ອຍຂາດສານອາຫານ ແມ່ນເປັນແນວໃດ ?
3. ທາດສານອາຫານ 6 ໝວດໝູ່ແມ່ນມີອາຫານປະເພດໃດແດ່ ? ຖ້າບໍ່ມີເຮົາສາມາດກິນຫຍັງແທນໄດ້ ?
4. ເປັນຫຍັງ ທ. ບ່ວງ ແລະ ນ. ຖູ່ ຈຶ່ງໄດ້ພາລູກໄປສຸກສາລາ ? ຍ້ອນສາເຫດຫຍັງລູກຂອງພວກເຂົາຈຶ່ງເຈັບ ?
5. ນາຍໝໍໄດ້ໃຫ້ຄຳແນະນຳແນວໃດ ກັບທ. ບ່ວງ ແລະ ນ. ຖູ່ ? ແລະ ເຂົາເຈົ້າໄດ້ຮັບປາກແນວໃດ ?

## ການວາງແຜນຄອບຄົວ

## ບົດລະຄອນ ທີ 6: ຄອບຄົວສຸກສັນ ເມື່ອໄດ້ວ່າງແຜນຄອບຄົວ

| ຕົວລະຄອນ | ອຸປະກອນທີ່ຈະຕ້ອງໃຊ້ |
|---|---|
| 1. ທ. ຊ້າງ (ຄອບຄົວທີ 1) | 1. ຜ້າສາກ (ພາບເບື້ອງຫຼັງ) 2,5 X 4m 1 ຜືນ |
| 2. ນ. ສີງ (ຄອບຄົວທີ 1) | 2. ເຊືອກສຳລັບມັດຜ້າສາກ 20 ແມັດ |
| 3. ທ. ແຫຼ້ (ລູກທ. ຊ້າງ +ນ.ສີງ) 3 ປີ | 3. ເຄື່ອງນຸ່ງສຳລັບນັກສະແດງ 6 ຊຸດ |
| 4. ນ. ດ່ອນ (ລູກທ. ຊ້າງ+ນ.ສີງ) 5 ປີ | 4. ຊຸດທ່ານໝໍ 1 ຊຸດ |
| 5. ນ. ແດງ (ລູກທ. ຊ້າງ+ນ.ສີງ) 8 ປີ | 5. ແຜ່ນພິກການວາງແຜນຄອບຄົວ 1 ຊຸດ |
| 6. ນ. ນິກ (ລູກທ. ເປັດ+ນ. ໄກ່) 5 ປີ | 6. ຕຸກກະຕາເດັກນ້ອຍເກີດໃໝ່ 1 ໂຕ |
| 7. ທ. ຫ່ານ (ລູກທ. ເປັດ+ນ. ໄກ່) | 7. ຕຸກກະຕາເດັກນ້ອຍ (ປີປາຍ) 1 ໂຕ |
| 8. ນ. ອ່ຽນ (ສະຫະພັນແມ່ຍິງບ້ານ) | 8. ຈັກໄຟຟ້າ 1 ອັນ ຖ້າບ້ານທີ່ບໍ່ມີໄຟຟ້າ |
| 9. ນ. (ແພດຢູ່ສຸກສາລາ) | 9. ຕູ້ລຳໂພງ ນ້ອຍ 1 ອັນ |
| 10. ທ. ເປັດ (ຫົວໜ້າຊາວໜຸ່ມ ຜົວນ. ໄກ່) | 10. ຄອມພິວເຕີ 1 ເຄື່ອງ |
| 11. ນ. ໄກ່ (ຄອບຄົວທີ 2) | 11. ຖ້ວຍບ່ວງ+ພາເຂົ້າ 1 ຊຸດ |

| | |
|---|---|
| | 12. ຂອງຂວັນສຳລັບການ ຖາມ - ຕອບ ຄຳຖາມ<br>13. ຜ້າເຊັດນ້ອຍ 10 ຜືນ<br>14. ສະບູ 10 ກ້ອນ |

**ບົດເລື່ອງໂດຍຫຍໍ້**

ມີຄອບຄົວໜຶ່ງມີລູກ 5 ຄົນ ເຊິ່ງເປັນຄອບຄົວທຸກຍາກ ເຂົາເຈົ້າບໍ່ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການ ວາງແຜນຄອບຄົວ ເພາະເຂົາເຈົ້າມີແຕ່ເຮັດວຽກຫຼາຍ ແລະ ບໍ່ເຄີຍເຂົ້າຮ່ວມກອງປະຊຸມບ້ານຈັກເທື່ອ ຈຶ່ງເຮັດໃຫ້ຄອບຄົວຂອງເຂົາເຈົ້າມີລູກຫຼາຍຄົນແບບຖີ່ໆກັນເຮັດໃຫ້ບໍ່ມີເວລາທຳມາຫາກິນ, ບໍ່ມີແຮງງານ ແລະ ມີອີກຄອບຄົວໜຶ່ງມີລູກ 4 ຄົນ ແຕ່ອາຍຸລູກແຕ່ລະຄົນຫ່າງກັນຄົນລະ 2-3 ປີ ເຮັດໃຫ້ເຂົາເຈົ້າມີເວລາໃນການ ທຳມາຫາກິນ ລູກຜູ້ໃຫຍ່ກໍ່ລ້ຽງນ້ອງໄດ້ ແລະ ຊ່ວຍວຽກເຮືອນໄດ້. ນ. ສີງ ມີຄວາມອຸກໃຈຫຼາຍ ລາວມີອາການເຈັບເປັນ ແລະ ລາວກໍ່ບໍ່ຢາກມີລູກອີກແລ້ວ ເພາະຄອບຄົວຂອງລາວທຸກຍາກຫຼາຍ ຜົວກໍ່ບໍ່ເອົາໃຈໃສ່ ແຕ່ລະມື້ມີແຕ່ເລາະປ່າ ບໍ່ຊ່ວຍເອົາລູກ, ບໍ່ຊ່ວຍວຽກເຮືອນ, ຕົນເອງກໍ່ບໍ່ມີເວລາເຮັດວຽກ ຫາເງິນເພາະວຽກຫຼາຍ ມື້ໜຶ່ງ ນ. ສີງໄດ້ໄປໄຮ່ ບັງເອີນໄປໄດ້ຍິນ ນ. ອ່ຽນ ແລະ ນ. ໄກ່ລົມກັນເລື່ອງການ ວາງແຜນຄອບຄົວ ຫຼື ການວາງແຜນລູກຫ່າງ ນ. ສີງມີຄວາມສົນໃຈຈຶ່ງເຂົ້າໄປຖາມ ນ. ອ່ຽນ ແລະ ນ. ໄກ່ ຈຶ່ງໄດ້ແນະນຳວ່າຖ້າ ນ. ສີງ ບໍ່ຢາກມີລູກອີກໃຫ້ໄປປຶກສາແພດຢູ່ໂຮງໝໍ ຮູ້ແນວນັ້ນ ນ. ສີງ ຈຶ່ງໄດ້ກັບໄປປຶກສາຜົວຂອງລາວ ເລື່ອງການວາງແຜນຄອບຄົວ ແຕ່ຜົວລາວກໍ່ບໍ່ສົນໃຈ ລາວຈຶ່ງໄດ້ໄປປຶກສາ ທ. ເປັດ (ຄສບ) ແລະ ນ. ໄກ່, ທ. ເປັດ ຈຶ່ງໄດ້ຖືໂອກາດເຂົ້າໄປໂອ້ລົມກັບ ທ. ເສືອ ໃຫ້ເອົາໃຈໃສ່ດູແລລູກເມຍ, ຊ່ວຍເມຍທຳມາຫາກິນ ແລະ ຊ່ວຍເລື່ອງການວາງແຜນຄອບຄົວ ເພາະການວາງແຜນຄອບຄົວບໍ່ແມ່ນ ແຕ່ວຽກຂອງຜູ້ໃດຜູ້ໜຶ່ງ ແຕ່ມັນເປັນໜ້າ ທີ່ຂອງຄູ່ຜົວເມຍທີ່ຈະຕ້ອງໄດ້ວາງແຜນຮ່ວມກັນ, ທ. ເປັດ ຍັງໄດ້ ສົມທຽບໃຫ້ເຫັນກ່ຽວກັບການ ວາງແຜນອີກດ້ວຍ ຫຼັງຈາກຮູ້ແນວນັ້ນ ທ. ເສືອ ຈຶ່ງໄດ້ຮັບປາກວ່າ ຈະປ່ຽນແປງຕົວເອງ ຈະດູແລເອົາໃຈໃສ່ ລູກເມຍ ແລະ ພາເມຍໄປຮັບການວາງແຜນຄອບຄົວຢູ່ໂຮງໝໍ.

ຫຼັງຈາກນັ້ນ ທ. ເສືອ ຈຶ່ງໄດ້ພາເມຍໄປກວດ ແລະ ຮັບຄຳປຶກສາຈາກແພດຢູ່ໂຮງໝໍນ້ອຍ ທ່ານໝໍ ໄດ້ກວດແລ້ວບົ່ງມະຕິພະຍາດວ່າລາວເຈັບແອວ ແລະ ເຈັບໜ່ວງທ້ອງນ້ອຍເນື່ອງຈາກລາວ ຖືພາ ແລະ ເກີດລູກຫຼາຍຄົນ ຮ່າງກາຍບໍ່ໄດ້ຟື້ນໂຕເທື່ອ ບວກກັບ ນ. ສີງ ເຮັດວຽກໜັກ ຈຶ່ງເຮັດໃຫ້ລາວເຈັບເປັນແບບນີ້ ແລະ ທ່ານ ໝໍໄດ້ໃຫ້ຄຳແນະນຳໃຫ້ ທ. ເສືອ ຊ່ວຍວຽກເມຍຫຼາຍໆ ບໍ່ໃຫ້ເມຍເຮັດວຽກໜັກ, ໃຫ້ລາວພັກຜ່ອນພຽງພໍ ແລະ ທ່ານ ໝໍ ໄດ້ນຳສະເໜີວິທີການວາງແຜນຄອບຄົວຕ່າງໆໃຫ້ ທ. ເສືອ ແລະ ນ. ສີງ ຮັບຮູ້ ແລະ ເຂົ້າໃຈ ເຂົາເຈົ້າໄດ້ຕັດສິນໃຈເລືອກວິທີການສັກຢາຄຸມກຳເນີດ ທ. ເສືອ ໄດ້ຮັບປາກວ່າຈະພາເມຍມາໃຊ້ບໍລິການ ການວາງແຜນຄອບຄົວ ຢູ່ສຸກສາລາເລື້ອຍໆ ແລະ ຖ້າມີການເຈັບເປັນກໍ່ຈະມາປິ່ນປົວຢູ່ໂຮງໝໍນ້ອຍ.

❖ **ສາກທີ 1: ກິນເຂົ້າ (ຢູ່ເຮືອນ ນ. ສີງ+ທ. ເສືອ)**

- **ນ. ສີງ:** (ສຽງເດັກນ້ອຍໄຫ້) ໂອ່ຍ....... ເມື່ອຍແດ່ ຂ້ອຍຊື່ ນ. ສີງ ຄອບຄົວກໍ່ທຸກຍາກມີລູກ 5 ຜົວ 2, ເອີບໍ່ແມ່ນ !! ຜົວຄົນດຽວ.... ເກີດລູກຫົວປີທ້າຍປີ ຕື່ນມາຕັ້ງແຕ່ເຊົ້າເຮັດວຽກຜູ້ດຽວຄົນຈະເຮັດວຽກຊ່ວຍກໍ່ບໍ່ມີ ລູກກໍ່ຍັງນ້ອຍໝົດ ເອີ ພໍດີເຮັດກິນແລ້ວ ອ້າຍ ເສືອ ເອີ່ຍ !! ມາເຢີກິນເຂົ້າ ກິນເຂົ້າແລ້ວຈະໄດ້ໄປໄຮ່
- **ທ. ຊ້າງ:** ສີງ..ສີງ.. ໃສມີຫຍັງກິນແດ່ ?
- **ນ. ສີງ:** ວານນີ້ຂ້ອຍຫາໜໍ່ມາໄດ້ໜ້ອຍໜຶ່ງເລີຍຈີ່ໜໍ່ ກັບ ຕຳແຈ່ວ
- **ທ. ຊ້າງ:** ໂອ່ແຕ່ລະມື້ກໍ່ກິນແຕ່ແຈ່ວ ຄືບໍ່ໄປຊອກຊີ້ນຊອກປາມາໃຫ້ກິນແດ່

- **ນ. ສີງ:** ໂອ່ຍ ອ້າຍຊ້າງເອີ່ຍ !! ຊອກຈະໃຫ້ຂ້ອຍໄປຊອກແນວໃດ ?? ແຕ່ລະມື້ຂ້ອຍກໍ່ເຮັດວຽກເຮືອນ, ໄປໄຮ່ໄປສວນ, ເອົາລູກກໍ່ເມື່ອຍຈະຕາຍແລ້ວ ເຈົ້າໄປເລາະຫາປາຫາປູ ໄດ້ມາກໍ່ເອົາໄປຂາຍໝົດເງິນຂ້ອຍກໍ່ບໍ່ເຫັນນຳເຈົ້າ ລະຈະເອົາຊີ້ນເອົາປາ ມາແຕ່ໃສມາກິນ ??
- **ທ. ຊ້າງ :** ເອີ ມີຫຍັງກໍ່ກິນຫຍັງໄປນີ້ແຫຼະ (ສຽງເດັກນ້ອຍໄຫ້ ແລະ ລູກນ້ອຍເອີ້ນກິນເຂົ້າ)
- **ນ. ສີງ:** ແພງ... ເຊົາໄວລູກ ໄປໆ ກິນເຂົ້າແລ້ວລະກະໄປໄຮ່ໄປສວນ (ທຸກຄົນຍ່າງອອກໄປ)

❖ **ສາກທີ 2: ກິນເຂົ້າ (ຢູ່ເຮືອນ ນ. ໄກ່ + ທ. ເປັດ)**

- **ນ. ໄກ່:** ອ້າຍ ເປັດ ເອີ່ຍ....... ອ້າຍ ເປັດ ຊັກເຄື່ອງແລ້ວລະບໍ ? ພາລູກມາກິນເຂົ້າໄວ ຂ້ອຍແຕ່ງກິນແລ້ວໆ
- **ທ. ເປັດ:** ໂດຍໆ ແລ້ວໆ ໄປລູກ ໄປກິນເຂົ້າ ເຮັດຫຍັງກິນແດ່ແມ່ນາງນ້ອຍ ??
- **ນ. ໄກ່:** ມື້ນີ້ຂ້ອຍເຮັດ ຊຸບໄກ່, ແກງຜັກ ແລະ ເອາະປາທີ່ເຈົ້າໄປຊອກມາວານນີ້ຫັ້ນເດ່
- **ທ. ເປັດ:** ໂອ່ມີແຕ່ແນວແຊບໆເນາະ ແມ່ນແຕ່ແນວຂ້ອຍມັກເລີຍ ເອີ້ ກິນໆ
- **ນ. ໄກ່:** ໂອ໋ !! ອ້າຍເປັດ ມື້ນີ້ກິນເຂົ້າແລ້ວລະພາຂ້ອຍໄປສຸກສາລາແດ່ເດີ ຢາຂ້ອຍໃກ້ຈະໝົດແລ້ວ ໄປສຸກສາລາມາລະຈຶ່ງໄປໄຮ່
- **ທ. ເປັດ:** ນົກລູກລະເອົານ້ອງຫຼິ້ນຢູ່ເຮືອນເດີ
- **ນ. ນົກ:** ເຈົ້າໆ ອີແມ່
- **ນ. ໄກ່:** ອີ່ມແຫລະ ໄປໆ ຈັກໜ່ອຍຈະສວາຍ (ທຸກຄົນຍ່າງອອກໄປ)

❖ **ສາກທີ 3: ນ. ໄກ່, ນ. ອຽນ ແລະ ນ. ສີງ ສົນທະນາກັນ (ຢູ່ໄຮ່)**

- **ນ. ອ່ຽນ:** ອ່າວ !! ໄກ່ໄປໃສມາຄືມາໄຮ່ສວາຍແທ້ມື້ນີ້ນະ ??
- **ນ. ໄກ່:** ຂ້ອຍໄປສຸກສາລາມາ ພໍດີຢາຂ້ອຍໝົດ
- **ນ. ອ່ຽນ:** ອ່າວ !! ໂຕເປັນຫຍັງຄືໄດ້ກິນຢາ ?
- **ນ. ໄກ່:** ບໍ່ໄດ້ເປັນອີຫຍັງດອກ ໄປເອົາຢາຄຸມກຳເນີດຊື່ໆ ພໍດີຢາມັນໃກ້ຈະໝົດແລ້ວເລີຍໄປເອົາມາໄວ້
- **ນ. ອ່ຽນ:** ໂອ໋.... ຄິດວ່າເປັນຫຍັງຊັ້ນດອກ ເອື້ອຍກໍ່ຫາກໍ່ໄປສັກຢາມາ ເພິ່ນວ່າສັກຢາລະມັນກຸ້ມໄດ້ 3 ເດືອນວ່າຊັ້ນ
- **ນ. ໄກ່:** ໂອ່ແມ່ນນະ ?? ຊັ້ນກະດີເນາະມີຫຼາຍວິທີໃຫ້ເລືອກ ສ່ຳນີ້ເຮົາກໍ່ຢູ່ກັບຜົວໄດ້ຕາມໃຈ ແບບບໍ່ຕ້ອງເປັນຫ່ວງເລື່ອງການມີລູກຫຼາຍແລ້ວ 555555
- **ນ. ສີງ:** ແມ່ນເວົ້າຫາເລື່ອງຫຍັງກັນເດ່ ມີລູກໜ້ອຍມີລູກຫຼາຍ ??
- **ນ. ອ່ຽນ:** ໂອ່ຍ..... ກໍ່ເວົ້າເລື່ອງຢາຄຸມກຳເນີດຫັ້ນເດ່
- **ນ. ສີງ:** ຮື !! ແມ່ນຢາຫຍັງກະຢາຄຸມກຳເນີດ ??
- **ນ. ໄກ່:** ໂອ່ຍ....... ແມ່ນເຈົ້າໄປຢູ່ໃສມາບໍ່ຮູ້ຮອດຢາຄຸມກຳເນີດ ຢາຄຸມກຳເນີດກໍ່ແມ່ນຢາທີ່ເຮັດໃຫ້ບໍ່ມີລູກຫັ້ນເດ່ ເຮົາຢາກເອົາລູກກໍ່ໄດ້ ບໍ່ເອົາກໍ່ໄດ້ ຫັ້ນແຫຼະຍາມເພິ່ນລວມບ້ານລະບໍ່ເຂົ້າຮ່ວມນຳເພິ່ນຈັກເທື່ອນະ ເພິ່ນເຮັດຫຍັງກໍ່ບໍ່ຮູ້
- **ນ. ສີງ:** ຢາແບບນີ້ກໍ່ມີບໍ ?? ຂ້ອຍກໍ່ບໍ່ຢາກໄດ້ລູກອີກແລ້ວ ດຽວນີ້ມີລູກ 5 ຄົນແລ້ວ
  ເອີ ລະຢາກໄດ້ຢານັ້ນຕ້ອງໄດ້ໄປຊື້ຢູ່ໃສ ?? ແພງບໍ ?? ເງິນກໍ່ເງິນບໍ່ມີ

- **ນ. ອ່ຽນ:** ບໍ່ໄດ້ເສຍເບ້ຍເສຍເງິນຫຍັງດອກມີແຕ່ເສຍຄ່າປື້ມຫັ້ນ 5,000 ກີບຊື່ໆ ຫຼັງຈາກນັ້ນໝໍເພິ່ນກໍ່ເອົາຢາໃຫ້ລ້າໆ ຖ້າຢາໝົດກໍ່ໄປເອົາໄດ້ຕະຫຼອດຈົນກ່ວາປື້ມຈະໝົດ ຖ້າປື້ມໝົດກໍ່ຕໍ່ໃໝ່ເສຍຄ່າຕໍ່ກໍ່ປະມານ 3,000 ກີບນີ້ແຫຼະ ແຕ່ກ່ວາຈະໝົດກໍ່ເປັນປີພຸ້ນແຫລະ
- **ນ. ໄກ່:** ແມ່ນແລ້ວ ຖ້າເຈົ້າບໍ່ຢາກມີລູກອີກໃຫ້ພາຜົວໄປປຶກສາແພດຢູ່ສຸກສາລາເດີ ການຄຸມກຳເນີດມັນມີຫຼາຍວິທີ ໄປລະແພດເພິ່ນຫາກແນະນຳໃຫ້ແລ້ວ 2 ຜົວເມຍເຈົ້າກໍ່ຕັດສິນໃຈເອງວ່າຈະເລືອກເຮັດວິທີໃດ ?
- **ນ. ສີງ:** ເອີໆ ຂອບໃຈຫຼາຍໆເດີ ຊັ້ນຂ້ອຍຈະກັບໄປເຮືອນ ໄປປຶກສາຜົວຂ້ອຍເບິ່ງກ່ອນ
- **ນ. ໄກ່ + ນ. ອ່ຽນ:** ເອີໆ ບໍ່ເປັນຫຍັງ ໄປໆ (ທຸກຄົນຍ່າງອອກໄປ)

❖ **ສາກທີ 4: ນ. ສີງ ປຶກສາກັບຜົວ (ຢູ່ເຮືອນ)**

- **ນ. ສີງ:** ອ້າຍຊ້າງ ມື້ນີ້ຂ້ອຍໄປໄຮ່ລະ ເອື້ອຍ ອ່ຽນ ກັບ ນ. ໄກ່ ເວົ້າໃຫ້ຟັງວ່າ ຖ້າເຮົາບໍ່ຢາກມີລູກແມ່ນໃຫ້ໄປປຶກສາແພດຢູ່ສຸກສາລາ ມື້ອື່ນເຮົາ 2 ຜົວເມຍໄປສາເນາະ
- **ທ. ຊ້າງ :** ໂອ່ຍ ປຶກສາລະຈະໄດ້ຫຍັງມີແຕ່ຈະເສຍເງິນຫຼາຍຊື່ໆ ເງິນກໍ່ແຮງບໍ່ມີຢູ່ ລົດກໍ່ບໍ່ມີຈະໄປແນວໃດ ?
- **ນ. ສີງ:** ເຂົາເຈົ້າບອກວ່າບໍ່ໄດ້ເສຍເງິນຄ່າຢາຫຍັງໄດ໋ ມີແຕ່ເສຍຄ່າປື້ມໜ້ອຍດຽວຊື່ໆ ລະອີກຢ່າງ ຂ້ອຍກໍ່ຢາກໄປກວດເບິ່ງແດ່ ຕັ້ງແຕ່ເກີດລູກຜູ້ນີ້ມາຂ້ອຍກໍ່ຮູ້ສຶກເມື່ອຍຕະຫຼອດ, ເຈັບແອວ ແລະ ເຈັບໜ່ວງທ້ອງນ້ອຍແຮງບໍ່ຮູ້ວ່າເປັນຫຍັງ
- **ທ. ຊ້າງ:** ບໍ່ເປັນຫຍັງດອກ ຄົນເຮັດວຽກມັນກໍ່ຕ້ອງເມື່ອຍເປັນທຳມະດາຫັ້ນແຫຼະ ອີກຢ່າງລູກຫັ້ນມີຫຼາຍກໍ່ບໍ່ເປັນຫຍັງ ມີລູກຫຼາຍຈຶ່ງໄດ້ກິນເຫື່ອກິນແຮງ
- **ນ. ສີງ:** ແຕ່ອ້າຍຊ້າງ ເອີ່ຍ !! ຄືດຽວນີ້ແມ່ນຫຍັງກໍ່ໃຊ້ແຕ່ເງິນ ເຮົາກໍ່ຫາເງິນບໍ່ໄດ້ຫຼາຍ, ແຮງງານກໍ່ບໍ່ມີ, ລູກກະພັດຍັງນ້ອຍໝົດ ລາຍຈ່າຍກໍ່ຫຼາຍຈະເອົາຫຍັງມາກຸ້ມຄອບກຸ້ມຄົວ
- **ທ. ຊ້າງ:** ຖ້າເຈົ້າຢາກໄປລະໄປໂລດເດີ ຂ້ອຍບໍ່ໄປນຳດອກເສຍເວລາໄປຫາປູຫາປາ(ຍ່າງອອກໄປ)
- **ນ. ສີງ:** ເຮີ້........... ບໍ່ຮູ້ຈະເວົ້າແນວໃດກັບຜົວແລ້ວ ເປັນແນວນີ້ຈະໄດ້ໄປຂໍຄວາມຊ່ວຍເຫຼືອນຳອ້າຍເປັດຜົວຂອງ ນ. ໄກ່ເບິ່ງກ່ອນ ລາວເປັນຫົວໜ້າຊາວໜຸ່ມບ້ານ ທັງເປັນ ຄສບ ນຳອີກ ເພື່ອລາວຈະມີວິທີທາງຊ່ວຍເຫຼືອໄດ້ (ຍ່າງອອກໄປ)

❖ **ສາກທີ 5: ນ. ສີງ ໄປຂໍຄວາມຊ່ວຍເຫຼືອກັບ ທ. ເປັດ (ຄສບ)**

- **ນ. ສີງ:** ອ້າຍ ເປັດ !! ອ້າຍ ເປັດຢູ່ບໍ່ ??
- **ທ. ເປັດ:** ຢູ່ໆ ນ. ສີງ ມີຫຍັງໃຫ້ຊ່ວຍບໍ ?
- **ນ. ສີງ:** ພໍດີຂ້ອຍມີບັນຫາໜ້ອຍໜຶ່ງ ຈຶ່ງຢາກມາຂໍຄວາມຊ່ວຍເຫຼືອນຳອ້າຍ
- **ນ. ໄກ່:** ເປັນຫຍັງສີງ ??
- **ນ. ສີງ:** ກໍ່ເລື່ອງທີ່ເຮົາລົມກັນວານນີ້ຫັ້ນເດ່ໄກ່ ຂ້ອຍໄດ້ໄປລົມກັບ ອ້າຍ ຊ້າງ ແລ້ວແຕ່ລາວບໍ່ເຂົ້າໃຈ ແລະປະຕິເສດທີ່ຈະໄປສຸກສາລາ ຂ້ອຍບໍ່ຮູ້ແນວຈະເຮັດແລ້ວ ເລີຍມາຂໍຄວາມຊ່ວຍເຫຼືອນຳອ້າຍ ເປັດ ເພື່ອໃຫ້ຊ່ວຍແນະນຳໃຫ້ນ້ອງແດ່ ວ່ານ້ອງຄວນຈະເຮັດແນວໃດດີ ?
- **ທ. ເປັດ:** ອ້າຍ ຄິດວ່າເລື່ອງນີ້ມັນເປັນເລື່ອງທີ່ລະອຽດອ່ອນ ໃຫ້ເຈົ້າລອງໃຊ້ເຫດໃຊ້ຜົນໂອ້ລົມນຳລາວເບິ່ງວ່າດຽວນີ້ເຮົາມີຄວາມຈຳເປັນທີ່ຈະຕ້ອງໄປປຶກສາໝໍ ຖ້າຫາກບໍ່ໄປ ມື້ໜ້າມີບັນຫາມາຈະຫຍຸ້ງຍາກ

- **ນ. ສີງ:** ນ້ອງກໍ່ພະຍາຍາມເວົ້າແລ້ວ ດຽວນີ້ນ້ອງກໍ່ມີການເຈັບການເປັນອີກ ແຕ່ກໍ່ຍັງມີຄວາມຫຍຸ້ງຍາກນໍາເລື່ອງເງິນເລື່ອງຄໍາແດ່ ລິດກໍ່ບໍ່ມີອີກ
- **ທ. ເປັດ:** ຖ້າຫາກແມ່ນເລື່ອງເງິນ ທາງບ້ານເຮົາກໍ່ມີກອງທຶນສຸກເສີນຢູ່ເດ່ ຖ້າເຈົ້າຫາກມີຄວາມຈໍາເປັນ ກໍ່ສາມາດຢືມໄປປິ່ນປົວໄດ້ ເລື່ອງລົດເຮົາກໍ່ໄດ້ເຮັດສັນຍາລົດໄວ້ເພື່ອຊ່ວຍຊາວບ້ານເຮົາ ຍາມມີການ ເຈັບເປັນນີ້ແຫຼະ
- **ນ. ໄກ່:** ແມ່ນແລ້ວ ຍາມເປັນໜ້ອຍແນວນີ້ໃຫ້ຟ້າວໄປສາ ປະໄວ້ດົນຈັກໜ່ອຍເປັນຫຍັງຫຼາຍມາ ລະຈະຫຍຸ້ງຍາກໄດ໋
- **ນ. ສີງ:** ໂດຍໆ ຂອບໃຈຫຼາຍໆເດີ ອ້າຍ ເປັດ ແລະ ນ. ໄກ່ ທີ່ໃຫ້ຄໍາແນະນໍາ ຂ້ອຍຈະລອງກັບໄປລົມກັບຜົວເບິ່ງກ່ອນ (ທຸກຄົນຍ່າງອອກ)

❖ **ສາກທີ 6: ນ. ສີງ ກັບໄປປຶກສາຜົວ ອີກຮອບທີ 2 (ຢູ່ເຮືອນ)**

- **ນ. ສີງ:** ອ້າຍ ຊ້າງ ເອີ່ຍ !! ອ້າຍ ຊ້າງ
- **ທ. ຊ້າງ:** ມີຫຍັງສີງ ??
- **ນ. ສີງ:** ກີ້ນີ້ຂ້ອຍໄດ້ລົມກັບ ອ້າຍ ເປັດ ກັບ ນ. ໄກ່ ກ່ຽວກັບເລື່ອງທີ່ເຮົາຈະໄປຫາໝໍຢູ່ສຸກສາລາ
- **ທ. ເສືອ:** ແມ່ນເຈົ້າຍັງບໍ່ແລ້ວກັບການຢາກໄປສຸກສາລາບໍນີ ????
- **ນ. ສີງ:** ອ້າຍ ຊ້າງເອີ່ຍ ອັນນີ້ເຮົາກໍ່ມີຄວາມຈໍາເປັນທີ່ຈະຕ້ອງໄປເດ່ ຂ້ອຍກໍ່ເຈັບທ້ອງເຈັບແອວແດ່ ຢາກໄປປິ່ນໄປປົວຍາມມັນເປັນໜ້ອຍ ຈັກໜ່ອຍເປັນຫຼາຍມາດຸເຮົາຈະເຮັດແນວໃດ ?? ອີກຢ່າງເຮົາກໍ່ມີລູກຫຼາຍແລ້ວ ກໍ່ຢາກໄປປຶກສາໝໍເພິ່ນເບິ່ງວ່າຈະເຮັດແນວໃດດີ ຄົນອື່ນເຂົາໄປ ກະບໍ່ມີລູກຖີ່ຄືເຮົາເດ່
- **ທ. ຊ້າງ:** ແຕ່ເຮົາບໍ່ມີເງິນບໍ່ມີລົດເດ່ ເຮົາຈະໄປແນວໃດ ?
- **ນ. ສີງ:** ເລື່ອງນີ້ຂ້ອຍໄດ້ປຶກສາກັບ ອ້າຍເປັດກີ້ນີ້ເພິ່ນເວົ້າວ່າຢູ່ບ້ານເຮົາມີກອງທຶນສຸກເສີນ ແລະ ສັນຍາລົດເພື່ອຊ່ວຍຊາວບ້ານໃນເວລາສຸກເສີນ ຖ້າເຮົາມີຄວາມຈໍາເປັນຄືແນວນີ້ເຮົາກໍ່ສາມາດໄປຢືມໄດ້
- **ທ. ຊ້າງ:** ໂອ່ຖ້າເພິ່ນຊ່ວຍແນວນັ້ນ ມື້ອື່ນເຊົ້າເຮົາກໍ່ໄປຂໍຢືມເພິ່ນລະໄປສາເນາະ
- **ນ. ສີງ:** ໂດຍໆ ຄັນຊັ້ນມື້ນີ້ໄປນອນພັກຜ່ອນສາ (ຍ່າງອອກໄປ)

❖ **ສາກທີ 7: ໄປໃຊ້ບໍລິການ ການວາງແຜນຄອບຄົວ (ຢູ່ໂຮງໝໍ)**

- **ທ. ຊ້າງ:** ທ່ານໝໍ ທ່ານໝໍຢູ່ບໍ ??
- **ໝໍ:** ໂອ່ ທ.ຊ້າງ, ນ. ສີງ ມີຫຍັງໃຫ້ໝໍຊ່ວຍບໍ ??
- **ນ. ສີງ:** ພໍດີຢາກມາປຶກສາໝໍດຽວນີ້ຂ້ອຍມີລູກ 5 ຄົນແລ້ວ ແລະ ບໍ່ຢາກມີລູກອີກແລ້ວ ເອື້ອຍ ອ່ຽນ ແລະ ນ. ໄກ່ເພິ່ນບອກວ່າ ນາຍໝໍມີຢາບໍ່ໃຫ້ມີລູກອີກ ກໍ່ເລີຍມາປຶກສາໝໍເບິ່ງ
- **ໝໍ:** ດີແລ້ວທີ່ມາປຶກສາໝໍ ການຄຸມກໍາເນີດມີ ຫຼາຍວິທີເນາະໝໍຈະອະທິບາຍໃຫ້ຟັງ ແລ້ວໃຫ້ ພວກເຈົ້າທັງ 2 ເລືອກເບິ່ງວ່າຈະໃຊ້ວິທີໃດ ? (ນໍາໃຊ້ແຜ່ນພົກແລ້ວອະທະບາຍຕາມນັ້ນ)
- **ທ. ຊ້າງ:** ຂ້ອຍຄິດວ່າຝັງເຂັມກະດີເນາະ ກຸ້ມໄດ້ 3 ປີພຸ້ນນະ ແຕ່ເສຍດາຍທີ່ສຸກສາລາເຮົາຍັງເຮັດບໍ່ໄດ້ເນາະ
- **ນ. ສີງ:** ຫັ້ນແຫຼະເນາະ ຄັນຊັ້ນເຮົາເລືອກວິທີສັກຢາເອົາເບາະ ມັນກໍ່ກຸ້ມໄດ້ 3 ເດືອນ
- **ທ. ຊ້າງ:** ໂດຍ ສັກເອົາກໍ່ໄດ້ ຖ້າຮອດ 3 ເດືອນແລ້ວ ດຽວຂ້ອຍຈະພາເຈົ້າມາອີກ

- **ນ. ສີງ:** ໃຫ້ໝໍກວດເບິ່ງ ດຽວນີ້ຂ້ອຍມີອາການເມື່ອຍຕະຫຼອດ, ເຈັບແອວ ແລະ ເຈັບໜ່ວງທ້ອງນ້ອຍແຮງບໍ່ຮູ້ວ່າເປັນຫຍັງ
- **ທ່ານໝໍ:** ໂອ໋ ທີ່ເຈົ້າມີອາການແບບນີ້ກໍ່ນື່ອງຈາກວ່າ ເຈົ້າມີລູກຫຼາຍຄົນແບບຖີ່ໆກັນ ຮ່າງກາຍຍັງບໍ່ທັນຟື້ນໂຕ , ມີດລູກຍັງບໍ່ເຂົ້າອູ່ ເຮັດໃຫ້ສຸຂະພາບອ່ອນເພຍ, ເມື່ອຍງ່າຍ, ເຈັບແອວ ແລະ ເຈັບໜ່ວງທ້ອງນ້ອຍ ແຖມເຈົ້າຍັງມາເຮັດວຽກໜັກອີກກໍ່ເລີຍເປັນແບບນີ້
- **ທ. ຊ້າງ:** ແລ້ວເມຍຂ້ອຍຈະເປັນຫຍັງຫຼາຍບໍ່ ທ່ານໝໍ ສາມາດປິ່ນປົວໄດ້ບໍ່ ?
- **ທ່ານໝໍ:** ໄດ້ ໝໍຈະວາງຢາໃຫ້ໄປກິນ ແຕ່ນີ້ຕໍ່ໄປໃຫ້ເຈົ້າເອົາໃຈໃສ່ຊ່ອຍວຽກເມຍ ພະຍາມບໍ່ໃຫ້ເມຍເຈົ້າເຮັດວຽກໜັກເດີ້, ໃຫ້ລາວພັກຜ່ອນຫຼາຍໆ, ກິນຢາຕາມທີ່ໝໍສັ່ງ ຖ້າຫາກມີອາການເຈັບເປັນອີກແລ້ວໃຫ້ຮີບມາປິ່ນປົວຢູ່ສຸກສາລາ ຫຼື ໂຮງໝໍເລີຍເດີ້
- **ທ.** ຊ້າງ ແລ ນ. ສີງ: ໂດຍ ຂອບໃຈຫຼາຍໆເດີ້ທ່ານໝໍ ທີ່ຊ່ອຍເຫຼືອ ແລະ ໃຫ້ຄຳແນະນຳທີ່ດີ
- **ທ່ານໝໍ:** ໂດຍ ບໍ່ເປັນຫຍັງ ມັນເປັນໜ້າທີ່ຂອງຂ້ອຍຢູ່ແລ້ວ.

**ສຸຂະພາບທີ່ດີຂອງແມ່ ແລະ ເດັກເປັນໜ້າທີ່ຂອງໝົດທຸກຄົນ**

❖ **ຄຳຖາມ**

1. ລະຫວ່າງຄອບຄົວຂອງ ທ. ຊ້າງ ແລະ ນ. ສີງ - ທ. ເປັດ ແລະ ນ. ໄກ່ ແຕກຕ່າງກັນແນວໃດ ?
2. ທ. ຊ້າງ ແລະ ນ. ສີງ ມີລູກຈັກຄົນ ? ຍ້ອນຫຍັງພວກເຂົາຈຶ່ງມີລູກຫຼາຍ ?
3. ເປັນຫຍັງ ນ. ສີງ ຈຶ່ງຢາກໄປຫາໝໍຢູ່ສຸກສາລາ ? ລາວມີອາການຫຍັງ ?
4. ການວາງແຜນຄອບຄົວ ຫຼື ການວາງແຜນລູກຫ່າງແມ່ນຫຍັງ ? ຖ້າເຮົາຢາກວາງແຜນຄອບຄົບເຮົາຈະໄປຫາໃຜ ? ຢູ່ໃສ ?
5. ແມ່ນໃຜເປັນຜູ້ຊ່ວຍແນະນຳໃຫ້ ນ. ສີງ ໄປລົມກັບຜົວຂອງລາວ ? ນ. ສີງ ໄດ້ໄປລົມກັບຜົວແນວໃດຜົວລາວຈຶ່ງຍອມພາໄປຫາໝໍຢູ່ສຸກສາລາ ?
6. ນາຍໝໍໄດ້ແນະນຳແນວໃດແດ່ໃຫ້ກັບ ນ. ສີງ ແລະ ທ. ເສືອ ?

## ພາກທີ II ການລົງຍ້ຽມຢາມເພື່ອໃຫ້ຄຳປຶກສາ ແລະ ຄຳແນະນຳ ຄອບຄົວ 1000 ວັນ

**ຈຸດປະສົງ:**

ຄະນະຮັກສາສຸຂະພາບຂັ້ນບ້ານລົງຢ້ຽມຢາມຄົວເຮືອນ 1,000 ວັນໃຫ້ການຊ່ວຍເຫຼືອແກ່ຄອບຄົວທີ່ມີແມ່ຍິງຖືພາ ແລະ ເດັກນ້ອຍອາຍຸຕໍ່າກວ່າສອງປີ ເພື່ອເພີ່ມທັກສະ ແລະ ຄວາມຮູ້ຂອງເຂົາເຈົ້າໃນການປະຕິບັດສິ່ງທີ່ສາມາດເຮັດໄດ້, ເພື່ອປັບປຸງສຸຂະພາບ ແລະ ໂພຊະນາການທີ່ດີຂອງແມ່ ແລະ ເດັກ.

**ຄະນະຮັກສາສຸຂະພາບຂັ້ນບ້ານ**: ຈະດຳເນີນການລົງຢ້ຽມຢາມຄົວເຮືອນທີ່ມີຊີວິດການເປັນຢູ່ໃນກຸ່ມດຽວກັນ ຄະນະຮັກສາສຸຂະພາບຂັ້ນບ້ານລົງຢ້ຽມຢາມຄົວເຮືອນໜຶ່ງຄົນຈະຮັບຜິດຊອບຄົວເຮືອນ 1,000 ວັນ ບໍ່ເກີນ 10 ເຖິງ 15 ຄົວເຮືອນທີ່ຢູ່ໃນເຂດຂອງຕົນ ອາສາສະໝັກລົງຢ້ຽມຢາມຄົວເຮືອນຍັງຈະເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືກຸ່ມເພື່ອນຊ່ວຍເພື່ອນຢູ່ໃນເຂດຂອງຕົນອີກດ້ວຍ.

**ການໃຫ້ຄຳແນະນຳ**: ຄະນະຮັກສາສຸຂະພາບຂັ້ນບ້ານມີໜ້າທີ່ໃນການວາງແຜນການລົງຢ້ຽມຢາມປະຈຳເດືອນ ແລະ ການລາຍງານການລົງຢ້ຽມຢາມຄົວເຮືອນ ພະນັກງານໂຮງໝໍນ້ອຍໃຫ້ການຊ່ວຍເຫຼືອແກ່ຄະນະຮັກສາສຸຂະພາບຂັ້ນບ້ານໃນການລົງຢ້ຽມຢາມຄົວເຮືອນ ຢ່າງເປັນປົກກະຕິ ນອກຈາກນັ້ນ ພະນັກງານສາທາລະນະສຸກອຳນວຍຄວາມສະດວກໃນການທົບທວນຄືນທັກສະໃຫ້ແກ່ຄະນະຮັກສາສຸຂະພາບຂັ້ນບ້ານລົງຢ້ຽມຢາມຄົວເຮືອນໃນລະຫວ່າງກອງປະຊຸມລະຫວ່າງໂຮງໝໍນ້ອຍ ຮ່ວມຄະນະຮັກສາສຸຂະພາບຂັ້ນບ້ານປະຈຳໄຕມາດ.

**ການບັນທຶກຂໍ້ມູນ ແລະ ການລາຍງານ:**

ຄະນະຮັກສາສຸຂະພາບຂັ້ນບ້ານລົງຢ້ຽມຢາມຄົວເຮືອນຈະບັນທຶກຂໍ້ມູນການລົງຢ້ຽມຢາມລົງໃສ່ໃບທະບຽນການລົງຢ້ຽມຢາມຄົວເຮືອນຂອງຕົນ ເຂົາເຈົ້າຈະແລກປ່ຽນຜົນໄດ້ຮັບເດືອນລະຄັ້ງກັບຫົວໜ້າທີມ ຜູ້ທີ່ບັນທຶກຂໍ້ມູນລົງໃສ່ແຜ່ນໂປດສະເຕີຕິດຕາມຄົວເຮືອນ 1000 ວັນ, ແລະ ບັນທຶກຂໍ້ມູນລົງໃສ່ໃບທະບຽນຄົວເຮືອນ 1,000 ວັນຂອງໝູ່ບ້ານ. ພາຍຫຼັງຄະນະຮັກສາສຸຂະພາບຂັ້ນບ້ານ ລົງຢ້ຽມຢາມຄົວເຮືອນ,ທຸກໆໄຕມາດໄດ້ບັນທຶກການຕິດຕາມ ເພື່ອລາຍງານໃນກອງປະຊຸມປະຈຳໄຕມາດລະຫວ່າງຄະນະຮັກສາສຸຂະພາບຂັ້ນບ້ານ ແລະ ໂຮງໝໍນ້ອຍ.

**ຂະບວນການ <u>ແຕ່ລະຄົວເຮືອນ '1000 ວັນ' ໄດ້ຮັບການລົງຢ້ຽມຢາມເຖິງ 9 ຄັ້ງຕາມແຜນວາດລຸ່ມນີ້:</u>**

| **ຕາຕະລາງສຳລັບການລົງຕິດຕາມຄົວເຮືອນ 1,000 ວັນ** | | | | | | | | |
|---|---|---|---|---|---|---|---|---|
|  |  |  |  |  |  |  |  |  |
| <u>ຕິດຕາມຄັ້ງທີ</u> | <u>ຕິດຕາມ</u> | <u>ຕິດຕາມຄັ້ງ</u> | <u>ຕິດຕາມຄັ້ງທີ</u> | <u>ດຕາມຄັ້ງທີ</u> | <u>ຕິດຕາມຄັ້ງ</u> | <u>ຕິດຕາມຄັ້ງ</u> | <u>ຕິດຕາມຄັ້ງ</u> | <u>ຕິດຕາມຄັ້ງທີ</u> |

| 1 | ຄັ້ງທີ 2 | ທີ 3 | 4 | 5 | ທີ 6 | ທີ 7 | ທີ 8 | 9 |
|---|---|---|---|---|---|---|---|---|
| ການຖືພາຊ່ວງທຳອິດ | ການຖືພາ 7 – 8 ເດືອນ | ພາຍໃນ 3 ວັນຫຼັງການເກີດ | ເດັກມີອາຍຸໄດ້ 7 ວັນ | ເດັກມີອາຍຸໄດ້ 1 ເດືອນ | ອາຍຸໄດ້ 6 ເດືອນ | ອາຍຸໄດ້ 7-8 ເດືອນ | ອາຍຸໄດ້ 12 ເດືອນ | ອາຍຸໄດ້ 18 ເດືອນ |

**ແຜນໂພສເຕີຄົວເຮືອນ 1,000 ວັນ**

ແຕ່ລະຄົວເຮືອນ 1,000 ວັນຈະໄດ້ຮັບແຜນໂພສເຕີຄົວເຮືອນ 1,000 ວັນເພື່ອບັນທຶກຂໍ້ມູນຂອງຕົນເອງໃສ່ໂດຍຈະມີຂໍ້ຄວາມຫຼັກຕ່າງໆອະທິບາຍເພີ່ມຕື່ມ ແລະ ມີພື້ນທີ່ຫວ່າງສຳລັບບັນທຶກຂໍ້ມູນຄວາມຄືບໜ້າຂອງຕົນໃນຊ່ວງໄລຍະ 1,000 ວັນທຳອິດ ນອກຈາກນັ້ນ, ແຕ່ລະຄົວເຮືອນ 1,000 ວັນ ຈະໄດ້ຮັບປຶ້ມຮູບພາບຂະໜາດນ້ອຍສຳລັບແຕ່ລະໄລຍະຂອງ 1,000 ວັນທີ່ມີຂໍ້ຄວາມຫຼັກຄື: ປຶ້ມທີ 1 - ການຖືພາ; ປຶ້ມທີ 2 - ການລ້ຽງລູກດ້ວຍນົມແມ່; ປຶ້ມທີ 3 - ການໃຫ້ອາຫານເສີມ; ປຶ້ມທີ 4 - ພັດທະນາການເດັກ, ໂພສະນາການ ແລະ ຄວາມປອດໄພຂອງເດັກ.

<u>**ເຄື່ອງມືສຳລັບໃຊ້ເຂົ້າໃນການລົງຢ້ຽມຢາມຄົວເຮືອນ 1000 ວັນ ແລະ ປະກອບເຂົ້າການສະແດງລະຄອນ**</u>



















# ການລ້ຽງຍັງມຄົວເຮືອນໃນຂັ້ນ…

**ມີ 2 ໄລຍະສຳຄັນ:** 1. ໄລຍະການກະກຽມ (ການປະຕິບັດງານ ກ່ອນ ການຈັດຕັ້ງປະຕິບັດ) 2. ໄລຍະການຈັດຕັ້ງປະຕິບັດ (ການປະຕິບັດງານຢ ່ບ້ານ)

1. **ການກະກຽມ (ການປະຕິບັດຕົວຈິງກ່ອນການລ້ຽງຍັ້ງມຄົວເຮືອນ)**

   **1.1. ແມ່ນໃຜ? ຢູ່ໃສ? ເວລາໃດ?**

**ແມ່ນໃຜ**









**ຢູ່ໃສ:**



ເວລາໃດ:



ກຸ່ມມານຳແລະກອດຄືນ:



## 1.2. ແມ່ນຫຍັງ? ເຮັດແນວໃດ?

**ຄວນຈຳໄວ້ວ່າ**!ຜູ້ລິງຢ້ຽມບ້ານຄວນກຸ່ມອຸປະກອນສື່ສານທີ່ສຳຄັນ ແລະ ແລກປ່ຽນຂໍ້ໃຫ້ຜູ້ອື່ນໆສະເໜີ

| ແມ່ຍິງຖືພາ | ເດັກເກີດໃໝ່-5 ເດືອນ | 6-12 ເດືອນ | >12 – 24 ເດືອນ |
|---|---|---|---|




## 2. ໄລຍະການຈັດຕັ້ງປະຕິບັດ (ການປະຕິບັດ)















# ຄວນຈຳໄວ້ວ່າ! ຂັ້ນຕອນຄວນຈື່ 6-ເວລາລົງຢ້ຽມຢາມຄົວເຮືອນ 1000 ວັນ

**ຄວນຈຳໄວ້ວ່າ! ຂັ້ນຕອນຄູ່ 6 ຂັ້ນຢູ່ທີ່ບ້ານ**

1. 

ຍິ້ມດ້ວຍໃຈດ້ວຍສາຍຕາທີ່ເປັນມິດ ຈາກນັ້ນ ທັກທາຍ ຄົວເຮືອນເປົ້າໝາຍ.

**ຕົວຢ່າງ.** ໃຫ້ເວົ້າວ່າ: ສະບາຍດີ! ສະແດງຄວາມຍິນດີນຳ! ລູກຂອງເຈົ້າເປັນຕາຮັກຫລາຍ!

ໃຫ້ເວົ້າວ່າ: ສະບາຍດີ! ສະແດງຄວາມຍິນດີນຳເດີ້! ເຈົ້າກຳລັງມີລູກ/ຖືພາ!

ໃຫ້ເວົ້າວ່າ: ສະບາຍດີ! ແລ້ວໃຫ້ເບິ່ງລູກຂອງລາວ. ໜ້າຮັກຫລາຍ. ລູກເຈົ້າເປັນແນວໃດ? ແລະ ອື່ນໆ

2. 

ສັງເກດສະພາບແວດລ້ອມອ້ອມຂ້າງກຸ່ມເປົ້າໝາຍ ໂດຍສະເພາະ ພຶດຕິກຳບາງຢ່າງຂອງກຸ່ມເປົ້າໝາຍ ທີ່ຢູ່ໃນຄວາມສົນໃຈຂອງເຮົາ ແລະ ແຈ້ງຈຸດປະສົງຂອງການລົງຢ້ຽມບ້ານ.

ຄອບຄົວເປົ້າໝາຍປະຕິບັດພຶດຕິກຳ ທີ່ກຳນົດໄວ້ ບາງເໝາະສົມບໍ່?

**ຕົວຢ່າງ.**



3.



**ຕົວຢ່າງ.** ໃຫ້ຖາມຄໍາຖາມເປີດກວ້າງເຊັ່ນ "**ເຈົ້າໄດ້ໃຫ້ອາຫານລູກກິນຄືແນວໃດ?** ເຈົ້າໄດ້ໃຫ້**ອາຫານລູກກິນຫຍັງແດ່? ມື້ວານນີ້ເດໃຫ້ອາຫານລູກກິນຄືແນວໃດ? ເຈົ້າເອົານົມໃຫ້ລູກກິນເລື້ອຍປານໃດ ໃນຊ່ວງຕອນກາງເວັນ ແລະ ຕອນກາງຄືນ? ເຈົ້າຮັກສາເບິ່ງແຍງລູກຄືແນວໃດບໍ່ໃຫ້ເຈັບເປັນ? ເຈົ້າໄດ້ລ້າງມືຕອນໃດ? "**

ໃນໄລຍະການຖາມ, ເຮົາຕ້ອງສົນໃຈເບິ່ງ ຫລື ການເວົ້າຊ້ຳ ຫລື ສະຫລຸບຄໍາເວົ້າຫຍໍ້ໆໃນບາງຄໍາເວົ້າ,

**ຢ່າຟ້າວຕັດສິນອັນທີ່ເຂົາໄດ້ເຮັດດີທີ່ສຸດ ໃນການເດີນທາງຂອງພວກເຂົາ.**

4.



ຄິດກ່ຽວກັບ "ສິ່ງນ້ອຍໆທີ່ສາມາດເຮັດໄດ້ງ່າຍໆ (SDA)" ເພື່ອຕ້ອງການປັບປຸງການປະຕິບັດ, ແຮງຈູງໃຈ ແລະ ສິ່ງກີດຂວາງ ຂອງ ພວກເຂົາ, ວິທີການປັບປຸງການປະຕິບັດງານ, "ສິ່ງນ້ອຍໆທີ່ສາມາດເຮັດໄດ້ງ່າຍໆ" (SDA) ຄວນຈະເປັນ.

ຕອບສະໜອງຄໍາການສັນລະເສີນ/ຍົກຍ້ອງ ປ່າງເໝາະສົມ

**ຕົວຢ່າງ**ຂອງການຕອບສະໜອງແມ່ນ "ເຈົ້າໄດ້ເຮັດຫຼາຍສິ່ງຫລາຍຢ່າງ ແລະ ພະຍາຍາມດູແລລູກ ຂອງ ເຈົ້າ ຫຼາຍເທົ່າທີ່ເຈົ້າສາມາດເຮັດໄດ້. ຖ້າຂ້ອຍເປັນເຈົ້າ, ຂ້ອຍຈະບໍ່ສາມາດເຮັດດີກັບເຈົ້າໄດ້. ພວກເຮົາຄວນຈະຄິດກ່ຽວກັບວິທີທີ່ພວກເຮົາສາມາດຕັດປັບເພື່ອຊ່ວຍໃຫ້ເຈົ້າ ແລະ ຄອບຄົວ ດູແລລູກ ຂອງ ເຈົ້າ ແລະ ເຮັດສິ່ງທີ່ເຈົ້າຕ້ອງການກໍ່ໄດ້ບໍ່?.

5.



ການປະຕິບັດຕາມຂໍ້ກຳນົດ ຂອງ "ສິ່ງນ້ອຍໆທີ່ສາມາດເຮັດໄດ້ງ່າຍໆ" ຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຫລາຍ ແລະ ສະແດງໃຫ້ເຫັນຜູ້ຢ້ຽມບ້ານ "ສິ່ງນ້ອຍໆທີ່ສາມາດເຮັດໄດ້ງ່າຍໆ" ທີ່ສຳຄັນຈະເຫັນໄດ້ໃນແຜນວາດ ຂອງປຶ້ມໜ້າທີ 1-4.

ຫຼັງຈາກນັ້ນ, ຊ່ວຍໃຫ້ຄອບຄົວເປົ້າໝາຍຊອກຫາວິທີແກ້ໄຂທີ່ເປັນໄປໄດ້ເພື່ອເອົາຊະນະອຸປະສັກຂອງພວກເຂົາຄືກັນ ຖ້າພວກເຂົາກຳລັງຊ່ວຍເພື່ອນຂອງ ເຈົ້າ. **ຕົວຢ່າງ,** ສະແດງໃຫ້ເຫັນການແກ້ໄຂການລ້ຽງລູກດ້ວຍນົມແມ່, ການຝຶກສອນອາຫານເສີມທີ່ງ່າຍດາຍຈາກບົດຮຽນ, ແລະ ອື່ນໆ. ຍົກຕົວຢ່າງ





6.



ກ່ອນທີ່ຈະອອກໄປຈາກບ້ານ ດ້ວຍຄວາມປະທັບໃຈ, ກວດເບິ່ງຄືນການສົນທະນາ ຫຼື ກັບຄືນສະແດງໃຫ້ເຫັນທັກສະ ສະເພາະ.

ຂໍຂອບໃຈສຳລັບຄວາມສົນໃຈ ແລະ ສັນລະເສີນ ຂອງ ພວກເຂົາ **ຕົວຢ່າງ**: "ກະລຸນາເຮັດສິ່ງທີ່ກົງກັນຂ້າມກັນ. ການລົງຢ້ຽມບ້ານຄັ້ງຕໍ່ໄປແມ່ນເມື່ອໃດ? ມີຄຳຖາມໃດບໍ?"

ປາລິມກວດເບິ່ງຄືນ "ສິ່ງນ້ອຍໆທີ່ສາມາດເຮັດໄດ້ງ່າຍໆ" ຢູ່ໃນຕາຕະລາງກຳແພງ ແລະ ໃຫ້ພວກເຂົາ ໄດ້ຮັບການຍ້ອງຍໍເຊັ່ນດຽວກັນ ກັບ ເຄື່ອງໝາຍໃນເວລາການລົງຢ້ຽມບ້ານ ໃນແຕ່ລະຄົວເຮືອນ.

# ການສັງລວມຂອງກິດຈະກຳຢູ່ຄົວເຮືອນ

**ຄວນຈື່ໄວ້ວ່າ!**



**ຂັ້ນຕອນແບບຄູ່ 6 ຂັ້ນ ຢູ່ທີ່ຄອບຄົວເຮືອນ**



# ກຸ່ມເພື່ອນຊ່ວຍເພື່ອສອນເພື່ອນ ໃນກຸ່ມຄອບຄົວ 1000  ວັນ



## ການນຳໃຊ້ ແນວທາງແບບ ກຸ່ມເພື່ອນຊ່ວຍເພື່ອນສອນ ເພື່ອນຂອງຄອບຄົວ 1000  ວັນ

1.ອາສາສະໝັກລົງຕິດຕາມຄົວເຮືອນ ຊອກຫາຄວາມສົນໃຈໃນກຸ່ມເພື່ອນຊ່ວຍເພື່ອນ ແລະ ກຳນົດສອງສາມຫົວຂໍ້◌້ທີ່ເປັນຂົງເຂດຄວາມສົນໃຈ

2.ເຊີນສະມາຊິກກຸ່ມເພື່ອນຊ່ວຍເພື່ອນ

3.ເຊີນສະມາຊິກກຸ່ມມາແລກປ່ຽນເລື່ອງລາວ ແລະ ປະສົບການຂອງເຂົາເຈົ◌້າກັບບັນຫານີ້

4.ເຊີນສະມາຊິກກຸ່ມມາແລກປ່ຽນຄວາມຄິດເຫັນ ພ້ອມ ສາທິດ ກ່ຽວກັບວິທີແກ້ໄຂບັນຫາດັ່ງກ່າວ
5.ສະມາຊິກກຸ່ມມີຄວາມມຸ່ງໝັ້ນໃນການປະຕິບັດພຶດຕິກຳບູລິມະສິດທີ່ເຂົາເຈົ້າກຳນົດ ຫຼື ທີ່ຈະປະຕິບັດສິ່ງໃດໜຶ່ງທີ່ໄດ້ຈາກຫົວຂໍ້ຂອງມື້ນີ້
6. ຂໍຄວາມຊ່ວຍເຫຼືອ ຈາກສມາຊິກໃນຄົວເຮືອນ ບ້ານ ຫຼື ຜູ້ອື່ນ ທີ່ເຂົາເຈົ້າໃສງມາດຊ່ວຍໄດ້
7. ບອກສະມາຊິກຄົວເຮືອນ ແລະ ຜູ້ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໃນມື້ນີ້ໄດ້ກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້
8. ທວນຄືນເວົ້າອອກມາວ່າສິ່ງທີ່ເຂົາເຈົ້າມີຄວາມມຸ່ງໝັ້ນ ທີ່ຈະປະຕິບັດ.

#01: **ແບບຟອມການຢ້ຽມຢາມຄົວເຮືອນ 1000 ວັນ**

ຈຸດປະສົງ: ເພື່ອວາງແຜນເຂົ້າໃນ**ການຢ້ຽມຢາມຄົວເຮືອນ 1000 ວັນ, ຕິດຕາມ ແລະ ເກັບກຳຂໍ້ມູນ**

**ແບບຟອມການຢ້ຽມຢາມຄົວເຮືອນ 1000 ວັນ**

**( ແມ່ຍິງຖືພາ ແລະ ເດັກນ້ອຍອາຍຸຕ່ຳກວ່າ 2 ປີ ຈະມີສຸຂະພາບແຂງແຮງ ແລະ ມີຄວາມສຸກ)**

ບ້ານ .................................... ໂຮງໝໍນ້ອຍ ....................................ເມືອງ .......................................ແຂວງ ..................................................................

ຈຳນວນຄອບຄົວເປົ້າໝາຍທີ່ລົງຢ້ຽມທຸກໆ 3 ເດືອນ ໄຕມາດ 1...................,ໄຕມາດ 2 .....................,ໄຕມາດ 3 .............................,ໄຕມາດ 4........................

ຊື່ຄະນະຮັກສາສຸຂະພາບຂັ້ນບ້ານ .............. .................................ຊື່ຫົວໜ້າກຸ່ມ .......................................... ວັນເດືອນປີທີ່ເລີ່ມກິດຈະກຳ ..........................

| ຜູ້ປົກຄອງ ຫຼື ຄູ່ຜົວເມຍ | ລາຍຊື່ກຸ່ມເປົ້າໝາຍ (ເບິ່ງຈາກຮຸບຕິດຝາ: 1 ຄື ແມ່ມານ, 2 ຄື 0-5 ດ, 3 ຄື 6-12 ດ, 4 ຄື 12-24 ດ) | ໜ່ວຍ | ເພດ | ອາຍຸຖືພາ ຫຼື ອາຍຸ ເດັກ (ເດືອນ) | ເດືອນ ໃນປີ__________ | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | **1** | **2** | **3** | **4** | **5** | **6** | **7** | **8** | **9** | **10** | **11** |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | ຊື່ແມ່ຍິງຖືພາ:<br>ອາຍຸ ປີ | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |
| | ຊື່ແມ່ຍິງຖືພາ: ອາຍຸ<br>ປີ | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |
| | ຊື່ແມ່ຍິງຖືພາ: ອາຍຸ<br>ປີ | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |
| | ຊື່ເດັກ:<br>ວັນເກີດ: | | | | | | | | | | | | | | |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| |  ຊື່ແມ່ຍິງຖືພາ: ອາຍຸ ປີ | | | | | | | | | | | | | | |
| |  ຊື່ເດັກ: ວັນເກີດ: | | | | | | | | | | | | | | |
| | | | | | | | | | | | | | | | |
| |  ຊື່ແມ່ຍິງຖືພາ: ອາຍຸ ປີ | | | | | | | | | | | | | | |
| |  ຊື່ເດັກ: ວັນເກີດ: | | | | | | | | | | | | | | |
| | | | | | | | | | | | | | | | |
| |  ຊື່ແມ່ຍິງຖືພາ: ອາຍຸ ປີ | | | | | | | | | | | | | | |
| |  ຊື່ເດັກ: ວັນເກີດ: | | | | | | | | | | | | | | |
| | | | | | | | | | | | | | | | |
| |  ຊື່ແມ່ຍິງຖືພາ: ອາຍຸ ປີ | | | | | | | | | | | | | | |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| |  ຊື່ເດັກ: ວັນເກີດ: | | | | | | | | | | | | | | |
| | | | | | | | | | | | | | | | |
| |  ຊື່ແມ່ຍິງຖືພາ: ອາຍຸ ປີ | | | | | | | | | | | | | | |
| |  ຊື່ເດັກ: ວັນເກີດ: | | | | | | | | | | | | | | |

**#02: ແບບຟອມແຜນກິດຈະກຳຄະນະຮັກສາສຸຂະພາບຂັ້ນບ້ານ.**

ຈຸດປະສົງ: ເພື່ອລົງຢ້ຽມບ້ານ ແລະ ພົບປະອຳນາດການປົກຄອງບ້ານເພື່ອແນະນຳຈຸດປະສົງ ແລະ ຄວາມຕ້ອງການໃນການຈັດຕັ້ງກິດຈະກຳ

- ເກັບກຳຂໍ້ມູນຂອງບ້ານຢ່າງລະອຽດໂດຍການນຳໃຊ້ແບບຟອມຂໍ້ມູນຂັ້ນບ້ານ
- ວາງແຜນຮ່ວມກັບອຳນາດການປົກຄອງຂັ້ນບ້ານກ່ຽວກັບການຢ້ຽມບ້ານ ແລະ ການຈັດຕັ້ງປະຕິບັດກິດຈະກຳ ແລະ ນັດເວລາລົງຢ້ຽມບ້ານ

| ວັນທີ.ເດືອນ.ປີ | ລາຍລະອຽດກິດຈະກຳ | ຊື່ຜູ້ອຳນວຍຄວາມສະດວກ | ໝາຍເຫດ |
|---|---|---|---|

| | | | |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

| | | | |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

## ກ່ຽວກັບອົງກອນ

ອົງການແຄຣ໌ ແມ່ນອົງການຈັດຈັ້ງສາກົນ ທີ່ເຮັດວຽກເພື່ອລຶບລ້າງ ຄວາມທຸກຍາກ ແລະ ບັນລຸຄວາມຍຸຕິທໍາທາງສັງຄົມ, ພວກເຮົາສ້າງ ແລະ ປັບປຸງຊີວິດການເປັນຢູ່ ຂອງກຸ່ມ ທີ່ດ້ອຍໂອກາດ ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກຍິງທີ່ເປັນກຸ່ມຄົນທີ່ດ້ອຍໂອກາດທີ່ສຸດ ໃນຊຸມຊົນຂອງພວກເຂົາ ແລະ ປະເຊີນກັບການເຂົ້າເຖິງ ສິດທິ ທີ່ບໍ່ເທົ່າທຽມ ທາງສັງຄົມ ແລະເສດຖະກິດ . ໃນປີ 2019 ອົງການແຄຣ໌ ໄດ້ເຮັດວຽກໃນ 100 ປະເທດທົ່ວໂລກ, ໂດຍຈັດຕັ້ງປະຕິບັດໂຄງການພັດທະນາເພື່ອຕໍ່ສູ້ກັບຄວາມທຸກຍາກ ແລະ ການຊ່ວຍເຫຼືອດ້ານມະນຸດສະທໍາ 1,036 ໂຄງການ ແລະ ເຂົ້າເຖິງຜູ້ຄົນໂດຍກົງ ຫຼາຍກວ່າ 68 ລ້ານຄົນແລະ ອີກ 401 ລ້ານຄົນໂດຍທາງອ້ອມ.

ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການ ໃນປີ 1992 ແລະ ໄດ້ເຮັດວຽກຕັ້ງແຕ່ນັ້ນມາ ເພື່ອປັບປຸງຊີວິດ ຂອງກຸ່ມຄົນທີ່ມີຄວາມສ່ຽງທັງ ເຂດຊົນນະບົດ ແລະ ຕົວເມືອງ ໂດຍສະເພາະກຸ່ມຄົນຊົນເຜົ່າ, ເຊິ່ງ ອົງການແຄຣ໌ ໄດ້ເຮັດວຽກຮ່ວມມືກັບສໍານະຊິກຊຸມຊົນ, ພາກລັດຖະບານ, ອົງການຈັດຕັ້ງທາງສັງຄົມທ້ອງຖິ່ນ ແລະ ພາກເອກະຊົນ, ປັດຈຸບັນອົງການແຄຣ໌ ໄດ້ຈັດຕັ້ງປະຕິບັດໂຄງການຢູ່ 4 ແຂວງ ຄື: ນະຄອນຫຼວງວຽງຈັນ, ຫຼວງນໍ້າທາ, ຜົ້ງສາລີ ແລະ ເຊກອງ.

ແຜນງານກ່ຽວກັບ "ແມ່ຍິງ ແລະ ເດັກຍິງທີ່ດ້ອຍໂອກາດ" ຂອງ ອົງການແຄຣ໌ ແມ່ນສຸມໃສ່ ສ້າງຄວາມເຂັ້ມແຂງໃຫ້ແກ່ ແມ່ຍິງ ແລະ ເດັກຍິງ ສາມາດໃຊ້ສິດຂອງພວກເຂົາ, ເພື່ອກາຍເປັນຜູ້ນໍາ ແລະ ຕັດສິນໃຈ, ແລະ ໄດ້ຮັບຜົນປະໂຫຍດ ຈາກຄວາມເປັນທໍາທາງເສດຖະກິດ-ສັງຄົມ. ອົງການແຄຣ໌ ຈັດຕັ້ງປະຕິບັດ ສອງແຜນງານຕົ້ນຕໍ ຢູ່ໃນ ສປປ ລາວ, ເຊິ່ງເນັ້ນໃສ່ ວຽກງານສຸຂະພາບຂອງແມ່ຍິງ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ. ແຜນງານສຸຂະພາບຂອງພວກເຮົາແມ່ນສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ເດັກຍິງ ສາມາດໃຊ້ສິດໃນການເຂົ້າເຖິງດ້ານສຸຂະພາບຈະເລີນພັນ, ການມີໂພຊະນາການທີ່ດີຂອງແມ່ ແລະ ເດັກ ເພື່ອໃຫ້ເຂົາເຈົ້າມີສຸຂະພາບທີ່ດີຂຶ້ນ ແລະ ດໍາລົງຊີວິດໂດຍປັດສະຈາກຄວາມຮຸນແຮງ. ແຜນງານການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ ແມ່ນເພື່ອໃຫ້ແມ່ຍິງ ແລະ ເດັກຍິງ ສາມາດເຂົ້າເຖິງ ແລະ ມີໂອກາດໃນການຄຸ້ມຄອງທາງດ້ານເສດຖະກິດ ແລະ ຊັບພະຍາກອນ ແບບກຸ້ມຕົນເອງຫຼາຍຂຶ້ນ ແລະ ໄດ້ເຮັດວຽກງານທີ່ເປັນທໍາ, ໂດຍແນວທາງການຈັດຕັ້ງປະຕິບັດແຜນງານທັງໝົດແມ່ນ ບົນພື້ນຖານການສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ການຕ້ານຄວາມຮຸນແຮງທາງເພດ ແລະ ຄວາມສ່ຽງດ້ານສະພາບອາກາດປ່ຽນແປງ ທີ່ສົ່ງຜົນກະທົບຕໍ່ການເປັນຢູ່ໃຫ້ແກ່ ກຸ່ມທີ່ດ້ອຍໂອກາດ. ອົງການແຄຣ໌ ມີປະສົບການ ແລະ ຄວາມຊ່ຽວຊານຢ່າງກ້ວາງຂວາງທັງສອງຂົງເຂດແຜນງານນີ້ ແລະ ຈະສືບຕໍ່ດໍາເນີນການຈັດຕັ້ງປະຕິບັດແບບມີຂໍ້ມູນອ້າງອີງໄດ້ ເພື່ອສົ່ງເສີມການແກ້ໄຂແບບຍາວນານ ຢ່າງມີປະສິດທິຜົນ ແລະ ຍືນຍົງ.

ຈັດພິມຄັ້ງທີ່ 1: ກຸມພາ, 2022

ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ
ຫ້ອງການຢູ່ ນະຄອນຫຼວງວຽງຈັນ
ຕູ້ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856-21) 217 727
ອີເມລ: Lao.info@careint.org
ເວັບໄຊ໌: careint.org.la
ເຟສບຸກ/ຢູທູບ: CARE International in Lao PDR

care®